**ບົດສະຫຼຸບສັງລວມ**

# ບົດລາຍງານ ການພັດທະນາ ມະນຸດ ປີ 2016

**ການພັດທະນາ ມະນຸດ ສໍາລັບໝົດທຸກຄົນ**



ບົດລາຍງານ ການພັດທະນາ ມະນຸດ ປີ 2016 ແມ່ນສະບັບຫລ້າສຸດ ຂອງຊຸດບົດລາຍງານ ການພັດທະນາ ມະນຸດ ໃນລະດັບໂລກ ທີ່ຈັດພິມຂຶ້ນ ໂດຍອົງການສະຫະປະຊາຊາດ ເພື່ອການພັດທະນາ ນັບຕັ້ງແຕ່ປີ 1990 ເປັນຕົ້ນມາ ເປັນການສຶກສາແບບອິດສະຫລະ ອ້າງອີງຕາມຫລັກຖານ ຂອງຂໍ້ມູນເຊີງວິເຄາະ ແລະ ປະສົບການຕົວຈິງ ຂອງບັນຫາ ທ່າອ່ຽງ (ຫລື ແນວໂນ້ມ) ແລະ ນະໂຍບາຍຫລັກ (ຫລື ຕົ້ນຕໍ) ຂອງການພັດທະນາ.

ແຫລ່ງຂໍ້ມູນເພີ່ມເຕີມ ທີ່ຕິດພັນກັບ ບົດລາຍງານການພັດທະນາມະນຸດ ປີ 2016 ສາມາດຄົ້ນເບິ່ງໄດ້ ທາງອິນເຕີເນັດ ຢູ່ທີ່ http://hdr.undp.org, ຊຶ່ງລວມທັງສະບັບອີເລັກໂຕຼນິກຂອງບົດລາຍງານ ແລະ ບົດສັງລວມຫຍໍ້ ທີ່ແປເປັນຫລາຍກວ່າ 20 ພາສາ, ບົດລາຍງານແບບມີປະຕິສຳພັນ (ຫລື ແບບມີປະຕິກິລິຍາໂຕ້ຕອບ) ຢູ່ເທິງ web, ຊຸດຂອງເອກະສານເບື້ອງ ຫລັງ ແລະ ຂໍ້ມູນຂ່າວສານ ສຳລັບຄົ້ນຄິດ ທີ່ນຳມາໃຊ້ສຳລັບບົດລາຍງານ, ແຜນທີ່ແບບມີປະຕິກິລິຍາໂຕ້ຕອບ ແລະ ຖານຂໍ້ມູນຂອງຕົວຊີ້ບອກ ການພັດທະນາ ມະນຸດ, ການອະທິບາຍ (ຫຼື ຊີ້ແຈງ) ຢ່າງຄົບຖ້ວນຂອງແຫຼ່ງ ແລະ ວິທີການທີ່ນຳມາໃຊ້ໃນດັດຊະນີລວມ ຂອງບົດລາຍງານ, ປະຫວັດຫຍໍ້ຂອງປະເທດ ແລະ ແຫຼ່ງອ້າງອີງອື່ນໆ ດັ່ງເຊັ່ນດຽວກັນກັບບົດລາຍງານ ການພັດທະນາມະນຸດ ທັງລະດັບປະເທດ, ພາກພື້ນ ແລະ ໂລກທີ່ພິມເຜີຍແຜ່ ໃນທີ່ຜ່ານມາ. ບົດລາຍງານ 2016 ແລະ ຂໍ້ມູນຂ່າວສານທີ່ດີເດັ່ນ ຂອງສຳນັກງານຂອງບົດລາຍງານການພັດທະນາມະນຸດ, ປະກອບດ້ວຍສິ່ງພິມ, ຂໍ້ມູນ, ການຈັດລຳດັບດັດຊະນີການພັດທະນາມະນຸດ ແລະ ຂໍ້ມູນຂ່າວສານທີ່ກ່ຽວພັນ ຍັງສາມາດເຂົ້າເຖິງໄດ້ທາງໂທລະສັບທີ່ໃຊ້ລະ ບົບປະຕິບັດການ Apple IOS ແລະ Android ຜ່ານທາງ App ເຄື່ອນທີ່ອັນໃໝ່ ແລະ ສະດວກທີ່ຈະນຳໃຊ້.



ໜ້າປົກ ສະທ້ອນ ເຖິງຂໍ້ຄວາມ ອັນເປັນພື້ນຖານ ທີ່ບົ່ງບອກ ວ່າການພັດ ທະນາມະນຸດ ແມ່ນສຳລັບໝົດທຸກຄົນ - ບົນເສັ້ນທາງຂອງການພັດທະ ນາ ມະນຸດ ທີ່ບໍ່ມີໃຜທີ່ຈະຖືກປະຖິ້ມ. ໂດຍການນຳໃຊ້ແນວທາງ ທີ່ເປັນນາມມະທຳ, ໜ້າປົກ ສະແດງອອກເປັນ ແບບສາມຈຸດພື້ນຖານ. ອັນດັບທຳອິດ ກະແສຟອງທີ່ເຄື່ອນເໜັງຂຶ້ນທາງເບື້ອງສູງ ເປັນສີຟ້າ ແລະ ສີຂາວ ເປັນຕົວແທນເສັ້ນທາງກ້າວໄປຂ້າງໜ້າ ທີ່ມວນມະນຸດຊາດ ຕ້ອງໄດ້ເດີນ ທາງຜ່ານ ເພື່ອຮັບປະກັນການພັດທະນາມະນຸດ ທີ່ເປັນສາກົນ (ຫຼື ໃນທົ່ວໂລກ) (ຫຼື ສຳລັບໝົດທຸກຄົນ). ສ່ວນໂຄ້ງທີ່ຕ່າງກັນ ຂອງກະແສຟອງແຈ້ງເຕືອນບອກ ພວກເຮົາວ່າບາງເສັ້ນທາງຈະຫຍຸ້ງຍາກຫຼາຍຂຶ້ນ (ຫຼື ຫລາຍກວ່າ) ແລະ ການເດີນເຮືອໄປຕາມເສັ້ນທາງດັ່ງກ່າວ ຈະບໍ່ເປັນການງ່າຍ ດາຍ, ແຕ່ທາງເລືອກຫຼາຍຢ່າງ ແມ່ນເປີດກວ້າງອອກ. ອັນດັບທີສອງ, ຢູ່ໃນການເດີນທາງຄັ້ງນີ້ (ຫຼື ດັ່ງກ່າວນີ້) ບາງຄົນຈະນຳໜ້າ, ແຕ່ບາງຄົນຈະຍັງຊັກຊ້າ ຢູ່ທາງຫຼັງ ນຳໝູ່ບໍ່ທັນ. ການຊັກຊ້າຢູ່ທາງຫຼັງນຳໝູ່ບໍ່ທັນຈະຮຽກ ຮ້ອງຕ້ອງການຄວາມຊ່ວຍເຫຼືອ ຈາກບັນດາພວກທີ່ນຳໜ້າໄປກ່ອນ. ທ່າທາງສະແດງອອກ ດ້ວຍສອງມື ສະທ້ອນເຖິງວ່າ ຈິດໃຈຄວາມສາມັກຄີຂອງມວນມະນຸດ (ຫຼື). ອັນດັບທີສາມ, ສີທັງສອງ - ຂາວ ແລະ ຟ້າ - ແລະ ຮູບມືຢູ່ຂ້າງເທິງ - ສະແດງບອກວ່າ ການພັດທະນາມະນຸດສຳລັບໝົດທຸກຄົນ ຮຽກຮ້ອງເຖິງຄວາມສົມດຸນໃນລະຫວ່າງໜ່ວຍໂລກ, ສັນຕິພາບ ແລະ ປະຊາກອນ.

ບົດສະຫຼຸບສັງລວມ

# ບົດລາຍງານ ການພັດທະນາ ມະນຸດ ປີ 2016

## ການພັດທະນາ ມະນຸດ ສໍາລັບໝົດທຸກຄົນ

ຈັດພິມໂດຍອົງການ
ສະຫະປະຊາຊາດ
ເພື່ອການ
ພັດທະນາ
(UNDP)

Empowered lives.
Resilient nations.

# ທີມງານສ້າງບົດລາຍງານ ການພັດທະນາ ມະນຸດ ປີ 2016

ຜູ້ອຳນວຍການ ແລະ ຫົວໜ້າທີມມງານນັກຂຽນ

**Selim Jahan**

ຮອງຜູ້ອຳນວຍການ

**Eva Jespersen**

**ການຄົ້ນຄວ້າ ແລະ ສະຖິຕິ**

Shantanu Mukherjee (Team Leader). Milorad Kovacevic (Chief Statistician), Botagoz Abdreyeva, Astra Bonini, Cecilia Calderon, Christelle Cazabat, Yu-Chieh Hsu, Christina Lengfelder, Patrizia Luongo, Tanni Mukhopadhyay, Shivani Nayyar ແລະ Heriberto Tapia

**ການຜະລິດ ແລະ ເວັບ**

Admir Jahic ແລະ Dharshani Seneviratne

**ການເຜີຍແຜ່ສູ່ສາທາລະນະ ແລະ ການສື່ສານ**

Jon Hall, Sasa Lucic, Jennifer O’Neil Oldfield ແລະ Anna Ortubia

**ການປະຕິບັດງານ ແລະ ການບໍລິຫານ**

Sarantuya Mend (Operations Manager), Fe Juarez Shanahan ແລະ May Wint Than

# ຄໍານໍາ

ການພັດທະນາ ມະນຸດ ທັງໝົດແມ່ນກ່ຽວກັບເສລີພາບ ຂອງມະນຸດ ທີ່ຈະເຮັດລຸລ່ວງໃຫ້ເປັນຄວາມຈິງ ທ່າແຮງບົ່ມຊ້ອນ ຢ່າງເຕັມສ່ວນ ຂອງແຕ່ລະຊີວິດ ໂດຍທຸກຖ້ວນໜ້າ, ບໍ່ພຽງແຕ່ ສະເພາະຈໍານວນໃດໜຶ່ງ, ບໍ່ແມ່ນເກືອບທັງໝົດ, ແຕ່ຂອງ ຊີວິດທັງໝົດຢູ່ທົ່ວທຸກມູມຂອງໜ່ວຍໂລກ - ທັງໃນປັດຈຸບັນ ແລະ ອະນາຄົດ. ຄວາມເປັນສາກົນນິຍົມດັ່ງກ່າວມອບຄວາມ ເປັນເອກະລັກຂອງມັນໃຫ້ແກ່ແນວທາງການພັດທະນາມະນຸດ.

ເຖິງຢ່າງໃດກໍ່ຕາມ, ຫຼັກການຂອງຄວາມເປັນສາກົນນິຍົມ ແມ່ນສິ່ງໜຶ່ງ; ຜັນຂະຫຍາຍມັນ ເຂົ້າໃນການປະຕິບັດແມ່ນອີກ ຢ່າງໜຶ່ງ. ຕະຫຼອດໄລຍະ ໜຶ່ງສ່ວນສີ່ ຂອງສັດຕະຫວັດທີ່ຜ່ານມາ ໄດ້ມີຄວາມກ້າວໜ້າທີ່ໜ້າປະທັບໃຈ ຢູ່ໃນຫຼາຍດ້ານໃນ ການພັດທະນາມະນຸດ, ຊຶ່ງປະຊາກອນມີຊີວິດຍືນຫຼາຍຂຶ້ນ, ປະຊາກອນຈໍານວນຫຼາຍຂຶ້ນ ພົ້ນອອກຈາກສະພາບຄວາມທຸກ ຍາກທີ່ສຸດ ແລະ ປະຊາກອນຈໍານວນໜ້ອຍລົງ ທີ່ຢູ່ໃນສະພາບໂພຊະນາການຕໍ່າ. ການພັດທະນາມະນຸດ ໄດ້ເພີ່ມຄຸນຄ່າຊີວິດ ຂອງມະນຸດ - ແຕ່ເປັນທີ່ໜ້າເສຍດາຍ ບໍ່ແມ່ນທັງໝົດທີ່ໄດ້ໄປເຖິງຈຸດນັ້ນ ແລະ ຮ້າຍແຮງໄປກວ່ານັ້ນ, ບໍ່ແມ່ນທຸກໆຊີວິດ. ເພາະສະນັ້ນ ມັນຈຶ່ງບໍ່ແມ່ນເລື່ອງບັງເອີນ ແຕ່ແມ່ນໂດຍການເລືອກ ທີ່ຜູ້ນໍາຂອງໂລກໃນປີ 2015 ໄດ້ໃຫ້ຄໍາໝັ້ນສັນຍາ ແກ່ ການເດີນທາງ ໃນການພັດທະນາ ທີ່ບໍ່ປະຖິ້ມ ຜູ້ໃດໄວ້ ຢູ່ທາງຫຼັງ - ສົມມຸດຕິຖານ ແກນກາງ ຂອງວາລະ 2030. ສະທ້ອນ ຕາມຄວາມມຸ້ງມາດປາດຖະໜາສາກົນນັ້ນ, ມັນຈຶ່ງ ຖືກກາລະເທສະທີ່ວ່າ ບົດລາຍງານການພັດທະນາມະນຸດ 2016 ແມ່ນ ທຸ່ມເທໃຫ້ແກ່ຫົວຂໍ້ ການພັດທະນາ ມະນຸດ ສໍາລັບໝົດທຸກຄົນ.

ບົດລາຍງານເລີ່ມຕົ້ນ ດ້ວຍການນໍາໃຊ້ ຟອຍທາສີຂະໜາດກວ້າງໃຫຍ່ ເພື່ອແຕ້ມທັດສະນີຍະພາບ ທັງໝົດ ຂອງສິ່ງທ້າ ທາຍ ທີ່ໂລກປະເຊີນ ແລະ ຄວາມຫວັງ ທີ່ມວນມະນຸດ ມີສໍາລັບອະນາຄົດທີ່ດີກວ່າ. ສິ່ງທ້າທາຍບາງຢ່າງ ແມ່ນຍືດເຍື້ອຢູ່ (ຄວາມຂາດເຂີນ), ບາງຢ່າງເລິກເຊິ່ງລົງຕື່ມ (ຄວາມບໍ່ສະເໝີພາບ) ແລະ ບາງຢ່າງກໍາລັງພົ້ນເດັ່ນ (ໄພຈາກການກໍ່ການຮ້າຍ), ແຕ່ສ່ວນໃຫຍ່ ແມ່ນເສີມສ້າງເຊິ່ງກັນ ແລະ ກັນ. ແນວໃດກໍ່ຕາມ ບໍ່ວ່າຈະເປັນລັກສະນະທໍາມະຊາດ ຫຼື ການຮອດເຖິງຂອງ ມັນ, ສິ່ງທ້າທາຍເຫຼົ່ານີ້ ມີຜົນກະທົບຕໍ່ຊີວິດການເປັນຢູ່ທີ່ດີ ຂອງປະຊາກອນ ໃນທັງ ຄົນລຸ້ນປັດຈຸບັນ ແລະ ອະນາ ຄົດ.

ໃນເວລາດຽວກັນ, ເຖິງຢ່າງໃດກໍ່ຕາມ, ບົດລາຍງານເຕືອນ ຄວາມຊົງຈໍາ ຂອງພວກເຮົາວ່າ ມວນມະນຸດ ໄດ້ບັນລຸຫຍັງແດ່ ຕະຫຼອດໄລຍະ 25 ປີທີ່ຜ່ານມາ ແລະ ໃຫ້ ຄວາມຫວັງພວກເຮົາ ວ່າ ການກ້າວໄປຂ້າງໜ້າຕື່ມອີກແມ່ນມີຄວາມເປັນໄປໄດ້. ພວກເຮົາສາມາດເຮັດເພີ່ມຕື່ມໃສ່ ສິ່ງທີ່ພວກເຮົາໄດ້ບັນລຸ ແລ້ວ, ພວກເຮົາສາມາດສໍາຫຼວດ (ຫຼື ຊອກຫາ) ຄວາມເປັນໄປໄດ້ ອັນໃໝ່ ເພື່ອເອົາຊະນະສິ່ງທ້າທາຍ ແລະ ພວກເຮົາ ສາມາດໄປຮອດເຖິງ ສິ່ງທີ່ໃນເມື່ອກ່ອນ ເບິ່ງຄ້າຍກັບວ່າ ບໍ່ສາມາດຈະ ໄປຮອດເຖິງໄດ້. ຄວາມຫວັງ ແມ່ນຢູ່ພາຍໃນ ຂອບເຂດການເອື້ອມເຖິງ ຂອງພວກເຮົາທີ່ຈະເຮັດໃຫ້ສໍາເລັດລຸລ່ວງໄດ້.

ໃນເງື່ອນໄຂທີ່ກວ້າງຂວາງ, ບົດລາຍງານ ໃນຕໍ່ມາ ໄດ້ຍົກຂຶ້ນສອງຄໍາຖາມພື້ນຖານ: ໃຜແດ່ທີ່ຖືກປະປ່ອຍໃນຄວາມກ້າວ ໜ້າໃນການພັດທະນາມະນຸດ? ມັນເກີດຂຶ້ນຄືແນວໃດ ແລະ ຍ້ອນຫຍັງ? ມັນເນັ້ນໜັກວ່າ ກຸ່ມຄົນທຸກ, ດ້ອຍໂອກາດ ແລະ ກຸ່ມຢູ່ໃນສະພາບສ່ຽງ - ລວມທັງຊົນເຜົ່າກຸ່ມນ້ອຍ, ຄົນເຜົ່າພື້ນເມືອງ, ຄົນອົບພະຍົບ ແລະ ຄົນຍ້າຍຖິ່ນຖານ - ແມ່ນຖືກ ປະປ່ອຍໄວ້ທາງຫຼັງ. ສິ່ງທີ່ເປັນອຸປະສັກຕໍ່ຄວາມເປັນສາກົນນິຍົມ ປະກອບດ້ວຍ, ໃນທ່າມກາງສິ່ງອື່ນໃດ, ຄວາມຂາດເຂີນ ແລະ ຄວາມລໍາອຽງ ແລະ ຄວາມໃຈແຄບ (ຫຼື ຄວາມບໍ່ມີຂັນຕິທໍາ). ບົດລາຍງານ ຍັງໄຈ້ແຍກຢ່າງແຈ່ມແຈ້ງ ບັນດາອຸປະສັກ ໃນບົດບາດຍິງ-ຊາຍ ຊຶ່ງເສີມສ້າງເຊິ່ງກັນ ແລະ ກັນ ທີ່ປະຕິເສດ ກາລະໂອກາດ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ ແມ່ຍິງ ຈໍານວນຫຼາຍ ທີ່ຈໍາເປັນ ທີ່ຈະເຮັດໃຫ້ສໍາເລັດລຸລ່ວງ ທ່າແຮງບົ່ມຊ້ອນຢ່າງເຕັມສ່ວນ ໃນຊີວິດຂອງເຂົາເຈົ້າ.

ເພື່ອຮັບປະກັນການພັດທະນາມະນຸດສໍາລັບໝົດທຸກຄົນ, ບົດລາຍງານ ຢືນຢັນວ່າການກໍານົດພຽງແຕ່ທໍາມະຊາດ ແລະ ເຫດຜົນ ສໍາລັບຄວາມຂາດເຂີນ ຂອງບັນດາຜູ້ຖືກປະຖິ້ມແມ່ນບໍ່ພຽງພໍ. ບາງດ້ານຂອງຂອບເຊິ່ງວິເຄາະ ແລະ ທັດສະນະຂອງ ການປະເມີນຜົນ ຂອງການພັດທະນາມະນຸດ ຕ້ອງນໍາອອກມາຢູ່ດ້ານໜ້າ ເພື່ອແກ້ໄຂບັນຫາທີ່ຂັດຂວາງ (ຫຼື ເປັນອຸປະສັກ) ການພັດທະນາມະນຸດໃນທົ່ວໂລກ (ຫຼື ທີ່ເປັນຜົນກັບຄົນທັງໂລກ ຫຼື ເປັນສາກົນ). ຍົກຕົວຢ່າງ, ສິດທິມະນຸດ ແລະ ຄວາມ ສະຫງົບສຸກຂອງມະນຸດ (ຫຼື ຄວາມໝັ້ນຄົງຂອງມະນຸດ), ສິດອອກສຽງ ແລະ ຄວາມເປັນເອກະລາດ, ຂີດຄວາມສາມາດ

ລວມໝູ່ ແລະ ການເພິ່ງພາອາໄສກັນ (ຫຼື ການເພິ່ງພາເຊິ່ງກັນ ແລະ ກັນ) ຂອງທາງເລືອກ (ຫຼື ຕົວເລືອກ) ແມ່ນສໍາຄັນຢ່າງຍິ່ງສໍາລັບການພັດທະນາມະນຸດຂອງບັນດາຜູ້ທີ່ຖືກປະປ່ອຍ (ປະຖິ້ມ) ໃນປັດຈຸບັນ, ໃນທໍານອງດຽວກັນ, ຄຸນນະພາບ ຂອງຜົນໄດ້ຮັບ ໃນການພັດທະນາມະນຸດ ແລະ ບໍ່ພຽງແຕ່ ຄຸນນະພາບຢ່າງດຽວ, ຕົວຊີ້ບອກການກ້າວໄປເກີນກວ່າເກນປານກາງ ແລະ ການແຍກປະເພດສະຖິຕິ (ໂດຍສະເພາະການແຍກປະເພດຂອງເພດຍິງ-ຊາຍ) ຕ້ອງຖືກພິຈາລະ ນາ ເພື່ອປະເມີນຄ່າ ແລະ ຮັບປະກັນວ່າ ຜົນປະໂຫຍດ ຈາກການພັດທະນາມະນຸດ ໄປເຖິງ ຄົນທຸກຖ້ວນໜ້າ.

ບົດລາຍງານ ຢືນຢັນຢ່າງໜັກແໜ້ນວ່າ ການເອົາໃຈໃສ່ບັນດາຜູ້ທີ່ຖືກປະປ່ອຍ ຮຽກຮ້ອງເຖິງຍຸດທະສາດນະໂຍບາຍ ສີ່ງ່າມ (ຫຼື ສີ່ດ້ານ) ຢູ່ໃນລະດັບຊາດ. ການແທດເຖິງບັນດາຜູ້ທີ່ຖືກປະປ່ອຍໂດຍການນໍາໃຊ້ນະໂຍບາຍທີ່ເປັນສາກົນ (ຍົກຕົວຢ່າງ, ການເຕີບໂຕແບບທົ່ວເຖິງ, ບໍ່ພຽງແຕ່ການເຕີບໂຕເທົ່ານັ້ນ) ເຮັດໃຫ້ລຸລ່ວງມາດຕະການສໍາລັບກຸ່ມຄົນທີ່ມີຄວາມຕ້ອງການເປັນພິເສດ (ຍົກຕົວຢ່າງ, ຄົນພິການ), ການເຮັດໃຫ້ການພັດທະນາມະນຸດ ສາມາດປັບຕົວໄດ້ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຜູ້ທີ່ຖືກປະປ່ອຍ.

ບົດລາຍງານ ຮັບຮູ້ຢ່າງຖືກຕ້ອງວ່າ ນະໂຍບາຍແຫ່ງຊາດ ຕ້ອງການໃຫ້ຖືກຕື່ມເຕັມ ໂດຍບາດກ້າວຢູ່ໃນລະດັບໂລກ. ມັນແກ້ໄຂບັນຫາທີ່ສໍາພັນກັບໜ້າທີ່, ໂຄງສ້າງການປົກຄອງ ແລະ ວຽກງານຂອງສະຖາບັນລະດັບໂລກ. ມັນດຶງດູດຄວາມສົນໃຈຂອງພວກເຮົາຕໍ່ຄວາມຈິງທີ່ວ່າ ເຖິງແມ່ນວ່າ ພວກເຮົາໄດ້ລົ້ງເຄີຍຕໍ່ການໂຕ້ວາທີຢ່າງຮ້ອນແຮງ ທີ່ລົງທ້າຍດ້ອຍທາງຕັນຢູ່ໃນລະດັບຊາດ, ພາກພື້ນ ແລະ ສາກົນ, ພາຍໃຕ້ຄວາມອຶກກະທຶກນຶກ ນອງຂອງສິ່ງທັງໝົດເຫຼົ່ານັ້ນ, ມະຕິເອກະສັນກໍາລັງຖືກພົ້ນເດັ່ນຂຶ້ນມາປິ່ນອ້ອມສິ່ງທ້າທາຍລະດັບໂລກຫຼາຍຢ່າງເພື່ອຮັບປະກັນໂລກແບບຍືນຍົງສໍາລັບຄົນລຸ້ນຕໍ່ໄປໃນອະນາຄົດ. ຂໍ້ຕົກລົງປາຣີ ທີ່ເປັນຂີດໝາຍກ່ຽວກັບການປ່ຽນແປງດິນຟ້າອາກາດ ຊຶ່ງໃນໄລຍະຫຼັງນີ້ມີຜົນບັງຄັບໃຊ້, ເປັນພະຍານຫຼັກຖານ ຫຼື ຂໍ້ພິສູດ ຕໍ່ສິ່ງດັ່ງກ່າວນີ້. ສິ່ງທີ່ໃນເມື່ອກ່ອນເບິ່ງຄ້າຍກັບວ່າ ເປັນສິ່ງທີ່ບໍ່ສາມາດ ຈິດຕະນາການໄດ້ ໃນປັດຈຸບັນຕ້ອງພິສູດໃຫ້ເຫັນວ່າເປັນສິ່ງທີ່ບໍ່ສາມາດຢຸດຢັ້ງ; ບົດລາຍງານ ຕື່ມເຕັມໃສ່ວາລະ 2030 ໂດຍການກໍາເອົາຫຼັກ ການຂອງຄວາມເປັນສາກົນນິຍົມ ແລະ ໂດຍການສຸມໃສ່ ປະເດັນພື້ນຖານດັ່ງເຊັ່ນ ການລຶບລ້າງຄວາມທຸກຍາກສຸດຂີດ (ຫຼື ທຸກຮູບແບບ), ລຶບລ້າງຄວາມອຶດຫິວ ແລະ ເນັ້ນໜັກບັນຫາໃຈກາງຂອງຄວາມຍືນຍົງ. ແນວທາງການພັດທະນາມະນຸດ ແລະ ວາລະ 2030 ສາມາດເສີມສ້າງເຊິ່ງກັນ ແລະ ກັນ ໂດຍການປະກອບສ່ວນຕໍ່ກັນ ແລະ ກັນ ໂດຍການສໍາຫຼວດເບິ່ງວ່າການພັດທະນາມະນຸດ ແລະ ເປົ້າໝາຍແບບຍືນຍົງ ສາມາດຕື່ມເຕັມເຊິ່ງກັນ ແລະ ກັນ ໂດຍການເປັນເອທີສະໜັບສະໜູນ ຕົວຊີ້ບອກທີ່ໜັກແໜ້ນເຊິ່ງກັນ ແລະ ກັນ.

ພວກເຮົາມີທຸກເຫດຜົນ ທີ່ຈະຄາດຫວັງວ່າ ການປ່ຽນຮູບ ໃນການພັດທະນາມະນຸດ ແມ່ນເປັນໄປໄດ້. ສິ່ງທີ່ເບິ່ງຄ້າຍຄືຈະເປັນສິ່ງທີ່ທ້າທາຍໃນວັນນີ້ ສາມາດຈະເອົາຊະນະໄດ້ໃນມື້ໜ້າ. ໂລກຂອງເຮົາມີເວລາເຫຼືອໜ້ອຍກວ່າ 15 ປີ ເພື່ອບັນລຸວາ ລະທີ່ກ້າຫານຂອງຕົນຂອງການບໍ່ປະປ່ອຍໃຜໃຫ້ຢູ່ທາງຫຼັງ. ການຖົມຊ່ອງວ່າງ ການພັດທະນາມະນຸດ ແມ່ນສິ່ງສໍາຄັນຢ່າງຍິ່ງ, ຍ້ອນມັນຮັບປະກັນ ຫຼື ແມ່ນແຕ່ທີ່ດີກວ່າ, ກາລະໂອກາດດັ່ງດຽວກັນ ສໍາລັບຄົນລຸ້ນໃໝ່ໃນອະນາຄົດ. ການພັດທະນາມະນຸດ ຈະຕ້ອງເຮັດໃຫ້ມີຕໍ່ໄປ ແລະ ຄວາມຍືນຍົງ ແລະ ຈະຕ້ອງເພີ່ມພູນ ຄວາມຮັ່ງມີໃຫ້ແກ່ຊີວິດມະນຸດ ທຸກຖ້ວນໜ້າ ແລະ ເພື່ອວ່າ ພວກເຮົາມີໂລກໜ່ວຍໜຶ່ງ ບ່ອນຊຶ່ງປະຊາກອນທັງໝົດ ສາມາດຊື່ນຊົມ ສັນຕິພາບ ແລະ ຄວາມອຸດົມຮັ່ງມີ.

.



Helen Clark

*ຜູ້ບໍລິຫານ*

ອົງການສະຫະປະຊາຊາດ ເພື່ອການພັດທະນາ

# ຄຳຂອບໃຈ

ບົດລາຍງານການພັດທະນາມະນຸດ ປີ 2016 ແມ່ນຜົນງານ ຂອງສຳນັກງານ ບົດລາຍງານ ການພັດທະນາມະນຸດ (HDRO) ຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP).

ການຄົ້ນພົບ, ການວິເຄາະ ແລະ ຄຳແນະນຳ ດ້ານນະໂຍບາຍ ຂອງບົດລາຍງານ ແມ່ນຂອງ ສຳນັກງານ ບົດລາຍງານການພັດທະນາມະນຸດໂດຍລຳພັງ ແລະ ບໍ່ສາມາດ ຖືວ່າເປັນ ຂອງອົງການ ສປຊ ເພື່ອການພັດທະນາ ຫຼື ເປັນຂອງສະພາບໍລິຫານ. ສະມັດຊາໃຫຍ່ອົງການ ສປຊ ໄດ້ຮັບຮູ້ຢ່າງເປັນທາງການບົດລາຍງານການພັດທະນາມະນຸດ ໃນຖານະ "ການດຳເນີນການອິດສະຫຼະທາງສະຕິປັນຍາ" ທີ່ໄດ້ກາຍມາເປັນ "ເຄື່ອງມືທີ່ສຳຄັນຢ່າງໜຶ່ງສຳລັບການຍົກສູງຂຶ້ນຈິດສຳນຶກກ່ຽວກັບການພັດທະນາມະນຸດໃນທົ່ວໂລກ".

ພວກເຮົາ ເປັນໜີ້ບຸນຄຸນຢ່າງຫຼວງຫຼາຍ ຕໍ່ຜູ້ໄດ້ຮັບລາງວັນໂນເບລ ທ່ານສາສະດາຈານ ອາມາດຕະຍາ ເຊັນ ສຳລັບຄຳແນະນຳທາງສະຕິປັນຍາ ທີ່ເປັນແຮງບັນດານໃຈ ຢ່າງຕໍ່ເນື່ອງ, ການຊີ້ນຳ ແລະ ຄວາມນຶກຄິດ. ສຳນັກງານ HDRO ຍັງມີອະພິສິດ ທີ່ໄດ້ຮັບ ຊຸດຂອງການປະກອບສ່ວນ ເປັນບົດຄວາມ ໂດຍບຸກຄົນຜູ້ມີຊື່ສຽງ ແລະ ອົງການຈັດຕັ້ງ. ຄວາມກະຕັນຍູ ໂດຍສະເພາະ ແມ່ນສົມຄວນ ສຳລັບບົດຄວາມ ທີ່ລົງລາຍເຊັນ ຈາກທ່ານສາສະດາຈານ Dan Ariely (ອາຈານສອນພາກວິຊາຈິດຕະວິທະຍາ ແລະ ເສດຖະກິດດ້ານພຶດຕິກຳ ຢູ່ມະຫາວິທະຍາໄລ Duke), Carol Bellamy (ປະທານສະພາບໍລິຫານຂອງ ກອງທຶນ Global Community Engagement and Resilience Fund ແລະ ອາດີດຜູ້ອຳນວຍການບໍລິ ຫານຂອງກອງທຶນ UNICEF), Mirna Cunningham Kain (ຊົນເຜົ່າ Miskito ຢູ່ປະເທດນິກາຣາກົວ, ນັກເຄື່ອນໄຫວເພື່ອສິດທິຂອງຊົນເຜົ່າພື້ນເມືອງ ແລະ ອາດີດປະທານຂອງເວທີຖາວອນກ່ຽວກັບບັນຫາຊົນເຜົ່າພື້ນເມືອງ ຂອງອົງການ ສປຊ). Olafur Eliasson (ນັກສິນລະປິນ ຜູ້ກໍ່ຕັ້ງໂຄງການ Little Sun), Melinda Gates (ປະທານຮ່ວມມູນນິທິ Bill & Melinda Gates Foundation), Dr. Angela Merkel (ນາຍົກລັດຖະມົນຕີ ແຫ່ງສະຫະພັນທະລັດເຢັລະມັນ) ແລະ Juan Manuel Santos. (ປະທານາທິບໍດີ ແຫ່ງປະເທດໂຄລອມເບຍ ແລະ ຜູ້ໄດ້ຮັບລາງວັນໂນເບລສາຂາສັນຕິພາບ ປີ 2016). ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ເປັນພິເສດ ມາຍັງທ່ານ Martin Santiago ແລະ ສຳນັກງານອົງການ ສປຊ ເພື່ອການພັດທະນາ ປະຈຳປະເທດໂຄລອມເບຍ ສຳລັບການອຳນວຍຄວາມສະດວກ ໃນການປະກອບສ່ວນດ້ວຍບົດຄວາມ ຂອງທ່ານປະທານາທິບໍດີຊານໂຕສ.

ຄວາມຮູ້ບຸນຄຸນ ຍັງມີໄປເຖິງ ນັກຂຽນ ທີ່ໄດ້ບົດຄວາມ ເຊິ່ງນັກຂຽນເຫຼົ່ານັ້ນປະກອບມີ: Paul Anand, Ayesha Banu, Flavio Comim, Giovanni Andrea Cornia, Juliana Martinez Franzoni, Stephany Griffith-Jones, Irene Khan, Peter Lunenborg, Manuel Montes, Siddiqur Osmani, Enrique Peruzzotti, Robert Pollin, Diego Sanchez-Ancochea, Anuradha Seth, Frances Stewart ແລະ Florencia Torche.

ພວກເຮົາຂໍສະແດງຄວາມຂອບໃຈ ສຳລັບເອກະສານຄົ້ນຄິດ ທີ່ປະກອບສ່ວນໂດຍ Oscar A. Gomez, Sachiko G. Kamidohzono ແລະ Ako Muto ແຫ່ງສະຖາບັນຄົ້ນຄວ້າ JICA, Mara Simane ແຫ່ງສູນປະສານງານທົ່ວຂະແໜງ ການ ຂອງຫ້ອງວ່າການລັດຖະບານປະເທດລັດເວຍ, ແລະ ອົງການຈັດຕັ້ງທາງສັງຄົມ HOPE XXL, ສູນນະໂຍບາຍສາກົນ ຂອງ ອົງການ ສປຊ ເພື່ອການພັດທະນາ (UNDP Global Policy Centres) ທັງສອງແຫ່ງ - ໜຶ່ງແຫ່ງຕັ້ງຢູ່ໂຊນ ວ່າດ້ວຍການພັດທະນາຄູ່ຮ່ວມມືລະດັບໂລກ ແລະ ອີກແຫ່ງຕັ້ງຢູ່ ໄນໂຣບີ ວ່າດ້ວຍ ການປັບໂຕຂອງລະບົບຊີວະນາໆພັນ ແລະ ການກາຍເປັນທະເລຊາຍ - ໄດ້ປະກອບສ່ວນໃນບົດຄົ້ນຄິດ ໃຫ້ແກ່ບົດລາຍງານ, ແລະ ຄວາມຂອບໃຈຂອງພວກເຮົາມາຍັງ Balazs Hovarth ແລະ Anne-Gertraude Juepner.

ຄວາມຮູ້ທ່ອງແທ້ທີ່ລ້ຳຄ່າ ແລະ ຄຳແນະນຳແມ່ນໄດ້ຮັບຈາກຄະນະທີ່ປຶກສາທີ່ຊົງຄຸນນະວຸດ: Olu Ajakaiye, Magdalena Sepúlveda Carmona, Giovanni Andrea Cornia, Diane Elson, Heba Handoussa, Richard Jolly, Ravi Kanbur, Yasushi Katsuma, Ella Libanova, Justin Yifu Lin, Leticia Merino, Solita Monsod, Onalenna Doo Selolwane ແລະ Frances Stewart.

ສຳລັບຄຳແນະນຳ ທີ່ຊຳນານຊຳນານ ກ່ຽວກັບວິທີການວິທະຍາ ແລະ ການເລືອກຂໍ້ມູນ ທີ່ສຳພັນກັບການຄິດໄລ່ດັດຊະນີການພັດທະນາມະນຸດຂອງບົດລາຍງານ, ພວກເຮົາ ຂໍສະແດງຄວາມຂອບໃຈ ມາຍັງສະມາຊິກຄະນະທີ່ປຶກສາດ້ານສະຖິຕິຂອງບົດລາຍງານ ທີ່ປະກອບມີ: Lisa Grace S. Bersales, Albina Chuwa, Koen Decancq, Enrico Giovannini, Pascual Gerstenfeld, Janet Gornick, Gerald Haberkorn, Haishan Fu, Robert Kirkpatrick, Jaya Krishnakumar ແລະ Michaela Saisana.

ດັດຊະນີລວມ ຂອງບົດລາຍງານ ແລະ ຊັບພະຍາກອນທາງດ້ານສະຖິຕິອື່ນໆ ເອື່ອຍອີງໃສ່ ຄວາມຊຳນິຊຳນານຂອງຜູ້ສະໜອງຂໍ້ມູນສາກົນລະດັບຊັ້ນນຳ ໃນຂົງເຂດຄວາມຊ່ຽວຊານ ຂອງເຂົາເຈົ້າ ພວກເຮົາ ຂໍສະແດງຄວາມຮູ້ບຸນຄຸນ ສຳລັບການຮ່ວມມືແບບເປັນມິດ ແລະ ດ້ວຍຄວາມເຄົາລົບນັບຖື ຢ່າງຕໍ່ເນື່ອງຂອງເຂົາເຈົ້າ ກັບສຳນັກງານ HDRO ເພື່ອຮັບປະ ກັນຄວາມຖືກຕ້ອງ ແລະ ຄວາມແຈ່ມແຈ້ງ, ການວິເຄາະທາງດ້ານສະຖິຕິ ໄດ້ຮັບປະໂຫຍດ ຈາກການສົນທະນາຂອງບັນ ຫາດ້ານສະຖິຕິ ຮ່ວມກັບ Gisela Robles Aguilar, Sabina Alkire, Kenneth Hartggen ແລະ Nicolas Fasel ແລະ ທີມງານຂອງຜູ້ກ່ຽວ ຈາກສຳນັກງານຂອງຂ້າຫຼວງໃຫຍ່ ສຳລັບສິດທິມະນຸດ ຂອງອົງການ ສປຊ.

ການປຶກສາຫາລື ທີ່ຈັດຂຶ້ນ ໃນໄລຍະ ການກະກຽມບົດລາຍງານ ແມ່ນອີງໃສ່ ການສະໜັບສະໜູນແບບໃຈກວ້າງ ຂອງຫຼາຍສະຖາບັນ ແລະ ສ່ວນບຸກຄົນ ຊຶ່ງມີຈຳນວນຫຼວງຫຼາຍເກີນທີ່ຈະກ່າວເຖິງ ຢູ່ນະທີ່ນີ້ (ຜູ້ເຂົ້າຮ່ວມ ແລະ ຄູ່ຮ່ວມມືຖືກລະບຸຊື່ຢູ່ http:// hdr.undp.org/2016-report/consultations). ການປຶກສາຫາລືນຳຜູ້ກ່ຽວຂ້ອງຫຼາຍຝ່າຍຢ່າງທາງການ ຖືກຈັດຂຶ້ນ ໃນລະຫວ່າງເດືອນເມສາ ແລະ ເດືອນກັນຍາ 2016 ຢູ່ນະຄອນຈີເນວາ, ປາຣີ, ອິດສະຕັງບູນ, ໄນໂຣບີ, ສິງກະໂປ ແລະ ປານາມາ. ພວກເຮົາ ສຳນຶກໃນບຸນຄຸນ ຕໍ່ສຳນັກງານອົງການ ສປຊ ເພື່ອການພັດທະນາ ຢູ່ເຈນີວາ. ອົງ ການເພື່ອຄວາມຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (ຫຼື ອົງການເພື່ອຄວາມຮ່ວມມື ແລະ ການພັດທະນາທາງເສດຖະກິດ (OECD) ແລະ ສູນບໍລິການປະຈຳພາກພື້ນ ແລະ ສູນນະໂຍ ບາຍສາກົນ ຂອງອົງການ ສປຊ ເພື່ອການພັດທະນາ ສຳລັບການຈັດກອງປະຊຸມປຶກສາຫາລືເຫຼົ່ານີ້ ແລະ ໂດຍສະເພາະ ຕໍ່ການປຶກສາຫາລືຢ່າງບໍ່ເປັນທາງການ ຍັງຖືກຈັດຂຶ້ນ ຄູ່ຂະໜານ ໃນການເປີດຕົວ ຂອງບົດລາຍງານການພັດທະນາມະນຸດ 2015 ຢູ່ປັກກິ່ງ, ບອນ, ໂຄລອມເບຍ, ການາ , ເຮັນຊິງກິ, ລອນດອນ,ມະນີລາ, ເຮັກຈາວິກ ແລະ ວຽນນາ. ບົດຄວາມປະກອບສ່ວນ, ການສະໜັບສະໜູນ ແລະ ການຊ່ວຍເຫຼືອ ຈາກສະຖາບັນຄູ່ຮ່ວມມື, ປະກອບດ້ວຍ ຫ້ອງການປະຈຳພາກພື້ນຂອງອົງການ ສປຊ ເພື່ອການພັດທະນາ ແລະ ຫ້ອງການປະຈຳປະເທດ ເປັນທີ່ຮັບຮູ້ ດ້ວຍຄວາມຮູ້ບຸນຄຸນຢ່າງສູງ.

ຄວາມຂອບໃຈເປັນພິເສດ ມີເຖິງ ຄູ່ຮ່ວມງານ ປະຈຳອົງການ ສປຊ ເພື່ອການພັດທະນາ ຊຶ່ງປະກອບເປັນກຸ່ມຜູ້ອ່ານບົດລາຍງານ: Mandeep Dhaliwal, Priya Gajraj, George Ronald Gray, Anne-Gertraude Juepner, Sheila Marnie, Ayodele Odusola, Thangavel Palanivel, Sarah Poole, Mounir Tabet, Claire Van der Vaeren ແລະ Claudia Vinay. ການອ່ານເນື້ອໃນ ດ້ານການເມືອງ ຂອງບົດລາຍງານ ດ□າເນີນການໂດຍ Patrick Keuleers, Luciana Mermet ແລະ Nicholas Rosellini, ແລະ ຄຳແນະນຳ ຂອງເຂົາເຈົ້າ ເປັນທີ່ຮັບຮູ້ຢ່າງສຸດໃຈ.

ອາດີດຄູ່ຮ່ວມງານ ແລະ ເພື່ອນມິດ ຂອງບົດລາຍງານ ທີ່ເຄີຍປະຈຳຢູ່ສຳນັກງານ HDRO, ປະກອບດ້ວຍ Moez Doraid, Sakiko Fukuda-Parr, Terry McKinley, Saraswathi Menon, Siddiqur Osmani, Stefano

Pettinato ແລະ David Stewart, ມີຄວາມເມດຕາທີ່ພຽງພໍ ທີ່ຈະໃຊ້ເວລາໜຶ່ງວັນເຕັມ ຮ່ວມກັບພວກເຮົາ ແລະ ແບ່ງປັນຄວາມຮູ້ອັນເລິກເຊິ່ງ, ທັດສະນະ ແລະ ປະສົບການ ຊຶ່ງລໍ້າຄ່າ ຂອງພວກເຂົາເຈົ້າ.

ພວກເຮົາໄດ້ຮັບປະໂຫຍດອີກຕື່ມ ກ່ຽວກັບຫົວຂໍ້ ທີ່ສໍາພັນກັບ ບົດລາຍງານ ຈາກການສົນທະນາ ແລະ ຄໍາຄິດເຫັນຈາກ Saamah Abdallah, Helmut K. Anheier, Michelle Breslauer, Cosmas Gitta, Ronald Mendoza, Eugenia Piza-Lopez, Julia Raavad, Diane Sawyer ແລະ Oliver Schwank. ພວກເຮົາ ຂໍສະແດງຄວາມ ຂອບ ໃຈ ມາຍັງສະມາຊິກ ຂອງສາທາລະນະຊົນ ຊຶ່ງໄດ້ມີສ່ວນຮ່ວມ ໃນການສໍາຫຼວດທາງອິນເຕີເນັດ ສໍາລັບຫົວຂໍ້ ທີ່ສໍາພັນກັບບົດລາຍງານ ຢູ່ເທິງເວັບໄຊຂອງພວກເຮົາ.

ຊາວໜຸ່ມທີ່ມີພອນສະຫວັນ ຈໍານວນຫຼາຍຄົນ ໄດ້ປະກອບສ່ວນ ໃຫ້ແກ່ບົດລາຍງານ ໃນຖານະນັກຝຶກງານ: Ellen Hsu, Mohammad Taimur Mustafa, Abedin Rafique, Jeremías Rojas, Prerna Sharma, Weijie Tan ແລະ Danielle Ho Tan Yau. ພວກເຂົາ ເຈົ້າ ສົມຄວນ ໄດ້ຮັບການຮັບຮູ້ ສໍາລັບການອຸທິດ ແລະ ການປະກອບສ່ວນຂອງພວກເຂົາເຈົ້າ.

ພວກເຮົາ ຂໍຂອບໃຈ ສໍາລັບການຮຽບຮຽງ ແລະ ການສ້າງແບບມືອາຊີບຊັ້ນສູງ ໂດຍບໍລິສັດພັດທະນາການສື່ສານ -ທີ່ນໍາພາໂດຍ Bruce Ross-Larson, with Joe Caponio, Mike Crumplar, Christopher Trott ແລະ Elaine Wilson - ແລະ ນັກອອກແບບຊື່ Gerry Quinn ແລະ Phoenix Design Aid.

ສິ່ງສໍາຄັນທີ່ສຸດ, ໃນນາມສ່ວນຕົວ ຂ້າພະເຈົ້າ, ໂດຍສະເພາະ, ຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງ ຜູ້ບໍລິຫານ ຂອງອົງ ການ ສປຊ ເພື່ອການພັດທະນາ Helen Clark ສໍາລັບຄວາມເປັນຜູ້ນໍາ ແລະ ວິໄສທັດ ຂອງທ່ານນາງ ດັ່ງເຊັ່ນດຽວກັນກັບຄໍາໝັ້ນສັນຍາຂອງທ່ານນາງ ທີ່ມີຕໍ່ອຸດົມການ ຂອງການພັດທະນາມະນຸດ ແລະ ການສະໜັບສະໜູນ ທີ່ໜັກແໜ້ນຂອງທ່ານນາງ ຕໍ່ວຽກງານຂອງພວກເຮົາ. ຄໍາຂອບໃຈ ຂອງຂ້າພະເຈົ້າ ຍັງມີເຖິງທີມງານທັງໝົດ ຂອງສໍານັກງານ HDRO ສໍາ ລັບການອຸທິດຂອງເຂົາເຈົ້າ ໃນການສ້າງບົດລາຍງານໜຶ່ງ ທີ່ຝ່າຟັນເພື່ອຄວາມຄືບໜ້າອີກຕື່ມຂອງການພັດທະນາມະນຸດ.



Selim Jahan

*ຜູ້ອໍານວຍການ*
ສໍານັກງານ ບົດລາຍງານການພັດທະນາມະນຸດ

# ສາລະບານ ບົດລາຍງານການພັດທະນາມະນຸດ 2016

**ຄຳນຳ**

**ຄຳຂອບໃຈ**

**ບົດສະຫຼຸບສັງລວມ**

**ພາກທີ 1**

**ການພັດທະນາມະນຸດ - ຜົນສຳເລັດ, ສິ່ງທ້າທາຍ ແລະ ຄວາມຫວັງ**

**ພາກທີ 2**

**ຄວາມເປັນສາກົນ - ຈາກຫຼັກການສູ່ພາກປະຕິບັດຕົວຈິງ**

**ພາກທີ 3**

**ການເຂົ້າເຖິງທຸກຄົນ - ບັນຫາການວິເຄາະ ແລະ ການປະເມີນ**

**ພາກທີ 4**

**ການເອົາໃຈໃສ່ບຸກຄົນທີ່ຖືກປະປ່ອຍ - ນະໂຍບາຍແຫ່ງຊາດ**

**ພາກທີ 5**

**ການປ່ຽນແປງສະຖາບັນລະດັບໂລກ**

**ພາກທີ 6**

**ການພັດທະນາມະນຸດສຳລັບໝົດທຸກຄົນ - ທິດທາງຕໍ່ໜ້າ**

**ໝາຍເຫດ**

**ເອກະສານອ້າງອີງ**

**ເອກະສານຊ້ອນທ້າຍກ່ຽວກັບສະຖິຕິ**

### ຮູບສະແດງຜົນຂໍ້ມູນ ທີ 1 ການພັດທະນາມະນຸດສຳລັບໝົດທຸກຄົນ



# ການພັດທະນາມະນຸດສຳລັບໝົດທຸກຄົນ

ຕະຫລອດ ເວລາໜຶ່ງສ່ວນສີ່ ຂອງສັດຕະຫວັດ ທີ່ຜ່ານໄປ ພວກເຮົາ ໄດ້ເຫັນໂລກທີ່ປ່ຽນແປງ - ແລະ ພ້ອມກັນນັ້ນ ພູມີທັດຂອງການພັດທະນາ ກໍ່ເຊັ່ນດຽວກັນ. ປະເທດ ສ້າງຕັ້ງໃໝ່ ກໍ່ປະກົດຕົວ (ຫລື ພົ້ນເດັ່ນ) ຂຶ້ນມາ ແລະ ໜ່ວຍໂລກ ຂອງພວກເຮົາໃນປັດຈຸບັນ ເປັນບ່ອນຢູ່ອາໄສ ຂອງຄົນ ຈຳນວນຫລາຍກວ່າ 7 ຕື້, ຊຶ່ງໜຶ່ງໃນສີ່ຄົນໃດ ແມ່ນຄົນໜຸ່ມ.[1] ຮູບແບບຂອງພູມີສາດການເມືອງ ໄດ້ປ່ຽນແປງ ເຊັ່ນດຽວກັນ, ໂດຍທີ່ ປະເທດກຳລັງພັດທະນາ ກຳລັງພົ້ນເດັ່ນ ກາຍເປັນກຳລັງແຮງທາງເສດຖະກິດ ຫລັກແຫລ່ງ ແລະ ພະລັງ ທາງການເມືອງ ທີ່ສຳຄັນ. ໂລກາພິວັດ ໄດ້ເຊື່ອມສານ ປະຊາກອນ, ຕະຫລາດ ແລະ ວຽກເຮັດງານທຳ, ລວມທັງ ການປະຕິວັດແຫ່ງລະບົບຕົວເລກ ໄດ້ປ່ຽນແປງຊີວິດມະນຸດ.

ການພັດທະນາມະນຸດ ມີຄວາມກ້າວໜ້າທີ່ໜ້າປະທັບໃຈຕະຫຼອດໄລຍະ 25 ປີທີ່ຜ່ານມາ. ຄົນເຮົາໃນປັດຈຸບັນມີຊີວິດຍືນຂຶ້ນ, ມີລູກ-ຫຼານ ຈຳນວນຫຼາຍຂຶ້ນ ທີ່ໄດ້ຮຽນໜັງສື ແລະ ຄົນຈຳນວນຫຼາຍຂຶ້ນ ທີ່ເຂົ້າເຖິງການບໍລິການທາງສັງຄົມຂັ້ນພື້ນຖານ. [2] ຖະແຫຼງການສະຫັດສະຫວັດ ແລະ ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ - ພັນທະສັນຍາລະດັບໂລກຢູ່ຕອນປ່ຽນສັດຕະຫວັດ ເພື່ອຍຸຕິຄວາມຂາດເຂີນຂັ້ນພື້ນຖານຂອງມະນຸດ ພາຍໃນ 15 ປີ - ເສີມຕື່ມໃສ່ແຮງຍູ້ໜູນ.

ເຖິງຢ່າງນັ້ນ ການພັດທະນາມະນຸດ ໄດ້ເປັນໄປ ແບບບໍ່ສະໝ່ຳສະເໝີ ແລະ ການຂາດເຂີນຂອງມະນຸດ ຍັງຄົງມີຢືດເຍື້ອຢູ່. ຄວາມກ້າວໜ້າ ໄດ້ຂ້າມຜ່ານກຸ່ມຄົນ, ຊຸມຊົນ, ສັງຄົມ - ແລະ ຄົນຖືກປະປ່ອຍ. ປະຊາກອນບາງກຸ່ມ ບັນລຸໄດ້ພຽງແຕ່ຂັ້ນພື້ນຖານ ຂອງການພັດທະນາມະນຸດ ແລະ ບາງຈຳນວນ ຍັງຢູ່ຫ່າງໄກບໍ່ທັນຮອດເຖິງ. ສິ່ງທ້າທາຍໃໝ່ ໃນການພັດທະນາພົ້ນເດັ່ນຂຶ້ນມາ ໂດຍນັບຈາກຄວາມບໍ່ສະເໝີພາບ ຈົນເຖິງການປ່ຽນແປງດິນຟ້າອາກາດ, ຈາກການລະບາດຂອງພະຍາດ ຈົນເຖິງການຍົກຍ້າຍຖິ່ນຖານຢ່າງສິ້ນຫວັງ, ຈາກການສູ້ລົບ ຈົນເຖິງການກໍ່ການຮ້າຍ.

ບົດລາຍງານການພັດທະນາມະນຸດ 2016 ເລັ່ງໃສ່ວ່າ ເຮັດແນວໃດ ການພັດທະນາມະນຸດ ຈຶ່ງຈະສາມາດຮັບປະກັນ ສຳລັບໝົດທຸກຄົນ - ໃນປັດຈຸບັນ ແລະ ອະນາຄົດ (ເບິ່ງຢູ່ຮູບຂ່າວສານ 1 ຢູ່ໜ້າຖັດໄປ). ມັນເລີ່ມຕົ້ນ ດ້ວຍການລາຍງານກ່ຽວກັບຜົນສຳເລັດ, ສິ່ງທ້າທາຍ ແລະ ຄວາມຫວັງ ສຳລັບຄວາມກ້າວໜ້າຂອງມະນຸດ, ນຶກ ອາດພາບ ເຖິງບ່ອນທີ່ ມວນມະນຸດປາດຖະໜາໄປຮອດເຖິງ. ໂດຍທີ່ວິໄສທັດ ຖອດຖອນມາຈາກ ແລະ ສ້າງສົມໃສ່ວາລະ 2030 ສຳລັບການພັດທະນາແບບຍືນຍົງ ທີ 193 ປະເທດພາຄີຂອງອົງການສະຫະປະຊາຊາດ ຮັບຮອງເອົາຢ່າງເປັນທາງການ ໃນປີຜ່ານມາ ແລະ 17 ເປົ້າໝາຍການພັດທະນາແບບຍືນຍົງ ຊຶ່ງທັງໂລກ ໄດ້ໃຫ້ຄຳໝັ້ນສັນຍາຈະບັນລຸ.[3]

ບົດລາຍງານ ຊອກຮູ້ວ່າ ຜູ້ໃດແດ່ທີ່ຖືກປະປ່ອຍຈາກການພັດທະນາມະນຸດ ແລະ ຍ້ອນເຫດຜົນຫຍັງ. ບົດລາຍງານໃຫ້ເຫດ ຜົນວ່າ ເພື່ອຮັບປະກັນ ການພັດທະນາມະນຸດສຳລັບໝົດທຸກຄົນ, ການພຽງແຕ່ ເຮັດແຜນທີ່ ຂອງລັກສະນະທຳມະຊາດ ແລະ ຈຸດທີ່ຕັ້ງ ຂອງຄວາມຂາດເຂີນເທົ່ານັ້ນ ແມ່ນບໍ່ພຽງພໍ. ບາງດ້ານຂອງ ແນວທາງການພັດທະນາມະນຸດ ແລະ ການປະເມີນ (ທັດສະນະ) ມຸມມອງ ຈະຕ້ອງຖືກຍົກຂຶ້ນມາໄວ້ເບື້ອງໜ້າ. ບົດລາຍງານ ຍັງຈຳແນກນະໂຍບາຍແຫ່ງຊາດ ແລະ ຍຸດທະສາດຫຼັກ ທີ່ຈະເອື້ອອຳນວຍ ໃຫ້ມະນຸດທຸກຄົນ ທີ່ຈະບັນລຸການພັດທະນາມະນຸດຂັ້ນພື້ນຖານ ແລະ ເພື່ອປະສົບ ແລະ ປ້ອງກັນໝາກຜົນ. ໃນທີ່ສຸດ ແກ້ໄຂສິ່ງທ້າທາຍທາງໂຄງສ້າງຂອງລະບົບໂລກໃນປັດຈຸບັນ, ບົດລາຍງານ ນຳສະເໜີທາງເລືອກສຳລັບການປະຕິຮູບທາງດ້ານສະຖາບັນ.

## ເນື້ອຄວາມສຳຄັນ

+ ບົດລາຍງານດັ່ງກ່າວນີ້ ສື່ຄວາມໝາຍ ຫ້າຂໍ້ຄວາມ ຂັ້ນພື້ນຖານ:

- ຄວາມເປັນສາກົນ ແມ່ນສິ່ງສຳຄັນຕົ້ນຕໍ ຂອງການພັດທະນາມະນຸດ ແລະ ການພັດທະນາມະນຸດສຳລັບໝົດທຸກຄົນ ແມ່ນສາມາດບັນລຸໄດ້.
- ກຸ່ມຄົນຕ່າງໆຍັງຄົງທົນທຸກຍ້ອນການຂາດເຂີນປັດໃຈຂັ້ນພື້ນຖານ ແລະ ປະເຊີນອຸປະສັກກີດຂວາງ ທີ່ສຳຄັນ ເພື່ອເອົາຊະນະ ຄວາມຂາດເຂີນນັ້ນ.
- ການພັດທະນາມະນຸດສຳລັບໝົດທຸກຄົນ ຮຽກຮ້ອງການຫັນທິດຄືນໃໝ່ ບາງປະເດັນກ່ຽວກັບການວິເຄາະ ແລະ ການປະເມີນທັດສະນະ.
- ທາງເລືອກດ້ານນະໂຍບາຍມີຢູ່ ແລະ ຖ້າຫາກຈັດຕັ້ງປະຕິບັດ, ຈະປະກອບສ່ວນ ໃຫ້ແກ່ການພັດທະນາມະນຸດ ສຳລັບໝົດທຸກຄົນ.
- ການປົກຄອງໃນລະດັບໂລກ ທີ່ປະຕິຮູບໃໝ່, ພ້ອມດ້ວຍການຮ່ວມມື ແບບພະຫຸພາຄີ ທີ່ສະເໝີພາບ, ອາດຈະຊ່ວຍໃຫ້ບັນລຸການພັດທະນາມະນຸດ ສຳລັບໝົດທຸກຄົນ.

ຄວາມເປັນສາກົນ ແມ່ນສິ່ງສຳຄັນຕົ້ນຕໍ ຂອງການພັດທະນາມະນຸດ, ແລະ ການພັດທະນາມະນຸດສຳລັບໝົດທຸກຄົນ ແມ່ນສາມາດບັນລຸໄດ້

## ການພັດທະນາ ມະນຸດ ແມ່ນ ການຂະຫຍາຍ ອິດສະຫລະພາບໃຫ້ຫລາຍຂຶ້ນ ສຳລັບມະນຸດ ທຸກຖ້ວນໜ້າ

ການພັດທະນາມະນຸດ ແມ່ນການຂະຫຍາຍ ອິດສະຫຼະພາບ ໃຫ້ຫລາຍຂຶ້ນ ເພື່ອວ່າ ມະນຸດທັງມວນ ສາມາດເລືອກເອົາຊີວິດທີ່ເຂົາເຈົ້າປາດຖະໜາ ທີ່ຈະດຳລົງຢູ່. ອິດສະຫຼະພາບດັ່ງກ່າວນັ້ນ ມີສອງລັກສະນະພື້ນຖານ - ອິດສະຫຼະພາບ ຂອງຊີວິດການເປັນຢູ່ທີ່ດີ, ສະແດງອອກ ໂດຍໜ້າທີ່ການ ແລະ ຂີດຄວາມສາມາດ, ແລະ ອິດສະຫຼະພາບໃນການກະທຳ, ສະແດງອອກໂດຍການອອກສຽງ ແລະ ຄວາມເປັນເອກະລາດ (ຮູບທີ 1).

- ໜ້າທີ່ການ ແມ່ນສິ່ງຕ່າງໆ ທີ່ຄົນຜູ້ໜຶ່ງ ອາດປາດຖະໜາ ຈະເປັນ ຫຼື ເຮັດ - ດັ່ງເຊັ່ນ: ການມີຄວາມສຸກສະບາຍ, ມີອາຫານການກິນຢ່າງພຽງພໍ ແລະ ມີສຸຂະພາບທີ່ດີ, ດັ່ງດຽວກັບການມີຄວາມພາກພູມໃຈໃນຕົວເອງ (ຫຼື ການເຄົາລົບຕົວເອງ) ແລະ ການມີສ່ວນໃນການດຳເນີນຊີວິດຂອງຊຸມຊົນ.
- ຂີດຄວາມສາມາດ ແມ່ນຊຸດຕ່າງໆຂອງໜ້າທີ່ການ (ເປັນ ຫຼື ກະທຳ) ຊຶ່ງຄົນໆໜຶ່ງສາມາດບັນລຸໄດ້.
- ການເປັນຜູ້ຕັດສິນໃຈກະທຳເອງ ແມ່ນສຳພັນກັບສິ່ງທີ່ຄົນໆໜຶ່ງມີເສລີພາບ (ອິດສະຫຼະ) ທີ່ຈະກະທຳ ແລະ ບັນລຸໃນການສະແຫວງຫາບໍ່ວ່າເປົ້າໝາຍ ຫຼື ຄຸນຄ່າ (ຄ່ານິຍົມ) ທີ່ຜູ້ກ່ຽວເຫັນວ່າສຳຄັນ.

ເສລີພາບ ທັງສອງຊະນິດ (ປະເພດ) ເປັນສິ່ງຈຳເປັນ (ທີ່ຂາດບໍ່ໄດ້) ຢ່າງແທ້ຈິງ ສຳລັບການພັດທະນາມະນຸດ.

ບົດລາຍງານການພັດທະນາມະນຸດ ສະບັບທຳອິດ, ໃນປີ 1990, ນຳສະເໜີການພັດທະນາມະນຸດໃນແນວທາງທີ່ຍຶດຖືເອົາຄົນເປັນສູນກາງ ໃນການພັດທະນາ (ຂອບຂໍ້ຄວາມທີ 1)[4]. ແນວທາງການພັດທະນາມະນຸດປ່ຽນບົດສົນທະນາການພັດທະນາ ຈາກການສະແຫວງຫາ ຄວາມອຸດົມສົມບູນດ້ານວັດຖຸ ມາເປັນການເພີ່ມພູນຊີວິດການເປັນ ຢູ່ຂອງມະນຸດ, ຈາກການເພີ່ມທະວີລາຍໄດ້ມາເປັນການຂະຫຍາຍກວ້າງຂີດຄວາມສາມາດ, ຈາກການສ້າງປະໂຫຍດສູງສຸດຂອງການເຕີບໂຕ ມາເປັນການຂະຫຍາຍກວ້າງເສລີພາບ. ການພັດທະນາມະນຸດ ແມ່ນເລັງໃສ່ຄວາມຮັ່ງມີຂອງຊີວິດມະນຸດ ແທນທີ່ຈະເປັນພຽງແຕ່ຄວາມອຸດົມສົມບູນຂອງເສດຖະກິດ ແລະ ການເຮັດເຊັ່ນນັ້ນ ປ່ຽນແປງທັດສະນະມຸມມອງ ສຳລັບຜົນຂອງການພັດທະ ນາ (ຂອບຂໍ້ຄວາມທີ 2).

ຮູບທີ 1

**ການພັດທະນາມະນຸດ - ແນວທາງແບບວິເຄາະ**




Source: Human Development Report Office.

ຂໍ້ຄວາມທີ 1

**ການພັດທະນາມະນຸດ - ແນວທາງຮອບດ້ານ**

ການພັດທະນາມະນຸດ ແມ່ນຂະບວນການ ຂອງການຂະຫຍາຍ ທາງເລືອກຂອງຄົນໆໜຶ່ງ. ແຕ່ການພັດທະນາມະນຸດ ຍັງແມ່ນຈຸດປະສົງ, ສະນັ້ນ ມັນແມ່ນທັງ ຂະບວນການ ແລະ ຜົນໄດ້ຮັບ. ການພັດທະນາມະນຸດ ໝາຍຄວາມວ່າ ຄົນຈະຕ້ອງມີອິດທິພົນຕໍ່ຂະບວນການ ທີ່ຫຼໍ່ຫຼອມຊີວິດຂອງເຂົາເຈົ້າ. ໃນເງື່ອນໄຂນີ້, ການເຕີບໂຕທາງເສດຖະກິດ ແມ່ນປັດໃຈສຳ ຄັນຢ່າງໜຶ່ງ ຕໍ່ການພັດທະນາມະນຸດ, ແຕ່ມັນ ກໍ່ບໍ່ແມ່ນບ່ອນຈຸດໝາຍປາຍທາງສຳລັບໝົດທຸກຢ່າງ.

ການພັດທະນາມະນຸດ ແມ່ນການພັດທະນາຜູ້ຄົນ ຜ່ານທາງການສ້າງຂີດຄວາມສາມາດຂອງມະນຸດ, ໂດຍຜູ້ຄົນ ຜ່ານທາງການມີສ່ວນຮ່ວມຢ່າງຫ້າວຫັນ ໃນຂະບວນການທີ່ຫຼໍ່ຫຼອມຊີວິດຂອງເຂົາເຈົ້າ ແລະ ສຳລັບຜູ້ຄົນ ໂດຍການປັບປຸງຊີວິດຂອງ

ເຂົາເຈົ້າ. ມັນຈຶ່ງກວ້າງຂວາງກວ່າແນວທາງອື່ນໆ, ດັ່ງເຊັ່ນ ແນວທາງ ການພັດທະນາຊັບພະຍາກອນມະນຸດ, ແນວ ທາງແກ້ໄຂປັດໃຈ ຂັ້ນພື້ນຖານ ແລະ ແນວທາງສະໜອງສະຫວັດດີການມະນຸດ.
ແຫຼ່ງ: ສຳນັກງານຮັບຜິດຊອບບົດລາຍງານການພັດທະນາມະນຸດ

ການພັດທະນາມະນຸດ ແມ່ນເລັງໃສ່ຄວາມຮັ່ງມີຂອງຊີວິດມະນຸດ ຫຼາຍກວ່າຄວາມອຸດົມສົມບູນຂອງເສດຖະກິດ

ຂໍ້ຄວາມທີ 2

**ການວັດແທກການພັດທະນາມະນຸດ**

ດັດຊະນີ ການພັດທະນາ ມະນຸດ (HDI) ແມ່ນດັດຊະນີລວມ ທີ່ເຕົ້າໂຮມ ທັງສາມມິຕິພື້ນຖານ ຂອງການພັດທະນາ ມະນຸດ. ອາຍຸຍືນສະເລ່ຍ ສະທ້ອນຄວາມສາມາດ ທີ່ຊ່ວຍໃຫ້ຄົນມີຊີວິດຍືນນານ ແລະ ສຸຂະພາບດີ. ຈຳນວນປີສະ ເລ່ຍຂອງການຮຽນໜັງສື ແລະ ຈຳນວນປີຮຽນໜັງສື ທີ່ຄາດຄະເນ ສະທ້ອນເຖິງ ຂີດຄວາມສາມາດ ທີ່ຈະໄດ້ຄວາມຮູ້. ລວມຍອດລາຍໄດ້ແຫ່ງຊາດຕໍ່ຫົວຄົນສະທ້ອນເຖິງຂີດຄວາມສາມາດທີ່ຈະບັນລຸມາດຕະຖານການດຳລົງຊີວິດທີ່ມີຄຸນຄ່າ.

ເພື່ອວັດແທກການພັດທະນາມະນຸດຢ່າງຮອບດ້ານ, ບົດລາຍງານການພັດທະນາມະນຸດ ຍັງນຳສະເໜີຕື່ມອີກ ສີ່ດັດຊະນີລວມ. ດັດຊະນີການພັດທະນາມະນຸດທີ່ປັບປຸງດ້ວຍຄວາມບໍ່ສະເໝີພາບ (ຫຼື HDI) ສະທ້ອນລະດັບການພັດທະນາມະນຸດທີ່ແທ້ຈິງ ເນື່ອງຈາກພິຈາລະນາ ຄວາມບໍ່ສະເໝີພາບ ໃນສັງຄົມດ້ວຍ. ດັດຊະນີການພັດທະນາມະນຸດ ລະຫວ່າງຍິງ -ຊາຍ ປຽບທຽບຄຸນຄ່າດັດຊະນີ ການພັດທະນາມະນຸດຂອງຍິງ ແລະ ຊາຍ. ດັດຊະນີຄວາມບໍ່ສະເໝີພາບ ລະຫວ່າງ ຍິງ-ຊາຍ ຍັງໄດ້ເນັ້ນໜັກ ການສ້າງຄວາມເຂັ້ມແຂງຂອງແມ່ຍິງ. ສ່ວນດັດຊະນີ ຄວາມທຸກຍາກມະນຸດແບບຫຼາຍມິຕິ ວັດແທກ ມິຕິທີ່ບໍ່ແມ່ນລາຍໄດ້ຂອງຄວາມທຸກຍາກ.
ແຫຼ່ງຂໍ້ມູນ: ສຳນັກງານບົດລາຍງານການພັດທະນາມະນຸດ

ແນວທາງ ການພັດທະນາ ມະນຸດ ຍັງໄດ້ສະໜອງ ຮາກຖານການວິເຄາະ ຂອງຖະແຫລງການສະຫັດສະຫວັດ ແລະ ເປົ້າຫມາຍສະຫັດສະວັດດ້ານການພັດທະນາ - ຈຸດປະສົງ ແລະ ເປົ້າຫມາຍການພັດທະນາ ຜູກຕິດກັບເວລາ (ຫລືທີ່ກຳນົດເວລາ) ທີ່ໄດ້ຕົກລົງກັນ ໃນປີ 2000 ໂດຍ 189 ປະມຸກລັດ ແລະ ລັດຖະການເພື່ອຫລຸດຜ່ອນຄວາມທຸກຍາກຂອງມະນຸດໃນຂັ້ນພື້ນຖານ ພາຍໃນປີ 2015, ມັນໄດ້ສະໜອງຂໍ້ມູນ ແລະ ສິ່ງພົມສະທ້ອນຕໍ່ ວາລະ 2030 ແລະ ເປົ້າຫມາຍການພັດທະນາແບບຍືນຍົງ

## ການພັດທະນາ ມະນຸດ ສໍາລັບໝົດທຸກຄົນ ແມ່ນສາມາດບັນລຸໄດ້

ດັ່ງທີ່ ຄວາມເປັນສາກົນ ແມ່ນຫຼັກການພື້ນຖານ ຂອງການພັດທະນາມະນຸດ, ສະນັ້ນ ມັນຈະຕ້ອງເປັນ ແລະ ສາມາດບັນລຸໄດ້ໂດຍທຸກຄົນ. ຫຼັກຖານທີ່ເປັນທາງບວກ ແມ່ນເປັນທີ່ໜ້າພໍໃຈ.

ພາຍໃນປີ 2015 ໂລກເຮົາ ໄດ້ບັນລຸໃນບາງສິ່ງທີ່ທ້າທາຍ ອັນໃຫຍ່ຫຼວງ ຕະຫຼອດ 25 ປີທີ່ຜ່ານມາ. ເຖິງແມ່ນວ່າປະຊາກອນໂລກ ໄດ້ເພີ່ມຂຶ້ນອີກ 2 ຕື້ຄົນ -ຈາກຈຳນວນ 5.3 ຕື້ໃນ ປີ 1990 ມາເປັນ 7.3 ຕື້ ໃນປີ 2015 - ຫຼາຍກວ່າ 1 ຕື້ຄົນ ໄດ້ຫຼຸດພົ້ນອອກ ຈາກຄວາມທຸກຍາກ, 2.1 ຕື້ຄົນໄດ້ເຂົ້າເຖິງສຸຂະອະນາໄມທີ່ປັບປຸງ ແລະ ຫຼາຍກວ່າ 2.6 ຕື້ຄົນໄດ້ເຂົ້າເຖິງແຫຼ່ງນ້ຳດື່ມ ທີ່ຖືກປັບປຸງແລ້ວ.[5]

ອັດຕາມການຕາຍຂອງເດັກອາຍຸຕໍ່າກວ່າ 5 ປີ ໃນທົ່ວໂລກ ຫຼຸດລົງຫຼາຍກວ່າເຄິ່ງ ລະຫວ່າງ ປີ 1990 ແລະ 2015 – ຈາກ 91 ຕໍ່ 1.000 ທີ່ເກີດມີຊີວິດ ມາເປັນ 43. ການແຜ່ຫຼາຍຂອງເຊື້ອເອດ, ພະຍາດມາລາເຣຍ ແລະ ວັນນະໂລກ ຫຼຸດຖອຍລົງ ລະຫວ່າງ ປີ 2000 ແລະ 2015. ສັດສ່ວນຂອງທີ່ນັ່ງ ຢູ່ລັດຖະສະພາ ໂດຍເພດຍິງ ໃນທົ່ວໂລກ ເພີ່ມຂຶ້ນມາເປັນ 23 ສ່ວນຮ້ອຍໃນປີ 2016 - ເພີ່ມຂຶ້ນ 6 ຈຸດສ່ວນຮ້ອຍ ຕະຫຼອດໄລຍະທົດສະຫວັດ ທີ່ຜ່ານມາ. ການສູນເສຍສຸດທິຂອງພື້ນທີ່ປ່າໄມ້ ໃນທົ່ວໂລກ, ຈາກ 7.3 ລ້ານເຮັກຕາຕໍ່ປີ ໃນຊຸມປີ 1990 ມາເປັນ 3.3 ລ້ານ ໃນຊ່ວງປີ 2010 ຫາ 2016.[6]

ແຕ່, ເຖິງວ່າ ຈະມີຄວາມຄືບໜ້າທີ່ໜ້າຊົມເຊີຍ, ໂລກຂອງເຮົາ ຍັງປະເຊີນກັບສິ່ງທ້າທາຍ ທີ່ສະຫຼັບຊັບຊ້ອນຫຼາຍປະການ ຂອງການພັດທະນາ. ສິ່ງທ້າທາຍບາງຢ່າງ ແມ່ນຍັງຄືເກົ່າ (ຄວາມຂາດເຂີນ), ບາງຢ່າງໜັກໜ່ວງຂຶ້ນ (ຄວາມບໍ່ສະເໝີ ພາບ) ແລະ ບາງຢ່າງກຳລັງພົ້ນເດັ່ນຂຶ້ນ (ການກໍ່ການຮ້າຍ). ບາງຢ່າງແມ່ນມີໃນທົ່ວໂລກ (ຄວາມບໍ່ສະເໝີພາບລະຫວ່າງ ຍິງ-ຊາຍ), ບາງຢ່າງມີໃນພາກພື້ນ (ການຂາດແຄນນໍ້າ) ແລະ ບາງຢ່າງມີໃນທ້ອງຖິ່ນ (ໄພພິບັດທາງທຳມະຊາດ). ສ່ວນໃຫຍ່ ແມ່ນເສີມແຮງຕື່ມໃສ່ກັນ - ການປ່ຽນແປງດິນຟ້າອາກາດ ຫຼຸດ ການຄໍ້າປະກັນສະບຽງອາຫານລົງ, ການຫັນເປັນຕົວເມືອງຢ່າງໄວວາ ເຮັດໃຫ້ຜູ້ທຸກຍາກໃນຕົວເມືອງ ດ້ອຍໂອກາດຂຶ້ນຕື່ມ. ການຮອດເຖິງ ຈະແມ່ນແນວໃດກໍ່ຕາມແຕ່, ສິ່ງທ້າທາຍເຫຼົ່ານີ້ ມີຜົນກະທົບ ໃນທາງລົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ.

ສິ່ງທີ່ ມວນມະນຸດຊາດ ບັນລຸໄດ້ຕະຫຼອດໄລຍະ 25 ປີ ສ້າງຄວາມຫວັງວ່າການປ່ຽນແປງຢ່າງເປັນພື້ນຖານແມ່ນ ເປັນໄປໄດ້. ການບັນລຸຜົນທີ່ໜ້າປະທັບໃຈ ໄດ້ມີຂຶ້ນຢູ່ໃນພາກພື້ນ ຫຼື ຂົງເຂດທີ່ ຄັ້ງໜຶ່ງໃນເມື່ອກ່ອນແມ່ນຫຼ້າຫຼັງ

ເຖິງວ່າ ສິ່ງທ້າທາຍທັງໝົດເຫຼົ່ານີ້, ສິ່ງທີ່ມະນຸດຊາດ ໄດ້ບັນລຸຕະຫຼອດໄລຍະ 25 ປີ ສ້າງຄວາມຫວັງວ່າການປ່ຽນແປງຢ່າງເປັນພື້ນຖານແມ່ນເປັນໄປໄດ້. ໃນຕົວຈິງ, ການບັນລຸຜົນທີ່ໜ້າປະທັບໃຈ ບາງຢ່າງໄດ້ມີຂຶ້ນ ຢູ່ໃນພາກພື້ນ ຫຼື ຂົງເຂດທີ່ຄັ້ງໜຶ່ງ ໃນເມື່ອກ່ອນແມ່ນຫຼ້າຫຼັງ. ໃນທົ່ວທັງໂລກ ປະຊາຊົນໄດ້ມີສ່ວນຮ່ວມ ຢ່າງເພີ່ມຂຶ້ນ ໃນການສົ່ງຜົນໂນ້ມນ້າວ ຕໍ່ຂະບວນການທີ່ຫຼໍ່ຫຼອມຊີວິດຂອງເຂົາເຈົ້າ. ຄວາມສະຫຼາດສ່ອງໃສ ແລະ ຫົວຄິດປະດິດສ້າງຂອງມະນຸດ ໄດ້ລິເລີ່ມການປະຕິວັດເຕັກໂນໂລຊີ ແລະ ຜັນຂະຫຍາຍສິ່ງເຫຼົ່ານັ້ນ ເຂົ້າໃນທິດທາງ ທີ່ພວກເຮົາເຮັດວຽກງານ, ຄິດ ແລະ ປະພຶດ.

ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນປັດຈຸບັນ ແມ່ນມີຕິກະແສຫຼັກຂອງ ການສົນທະນາຕ່າງໆ ກ່ຽວກັບການພັດທະນາ ແລະ ບໍ່ມີການປະຕິເສດໃດໆ ວ່າດ້ວຍເຈດຕະນາທີ່ຈະ ຜ່ານຜ່າ ພວກມັນໄດ້ຢ່າງສ້າງສັນ, ພື້ນທີ່ສຳລັບການປຶກສາຫາລືແລກປ່ຽນຄຳເຫັນ ແລະ ການສົນທະນາໃນປະເດັນ ຄັ້ງໜຶ່ງໃນເມື່ອກ່ອນ ຖືວ່າຄະລຳ ກຳລັງຄ່ອຍໆເປີດກວ້າງອອກ - ດັ່ງດຽວກັບ ເພດວິຖີ, ການຈຳແນກທີ່ປະເຊີນ ໂດຍພວກຜູ້ຍິງ ທີ່ຮັກຜູ້ຍິງດ້ວຍກັນ, ຜູ້ຊາຍທີ່ຮັກຜູ້ຊາຍດ້ວຍກັນ, ຄົນຮັກສອງເພດ, ຄົນຂ້າມເພດ ແລະ ຄົນທີ່ມີເພດກໍ້າເກິ່ງ ແລະ ການຕັດພາກສ່ວນພາຍນອກອະໄວຍະວະເພດຂອງແມ່ຍິງ.

ຈິດສຳນຶກ ກ່ຽວກັບ ຄວາມຍືນຍົງ ກຳລັງນັບມື້ນັບເຕີບໃຫຍ່. ວາລະ 2030 ແລະ ຂໍ້ຕົກລົງປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແມ່ນຕົວຢ່າງສຳຄັນທີ່ສຸດ. ທັງສອງ ຍັງສະແດງ ເຖິງວ່າ ພາຍໃຕ້ສຽງກຶກກ້ອງ ຂອງການໂຕ້ວາທີ ແລະ ຄວາມແອອັດຕິດຂັດ, ຄວາມເປັນເອກະສັນ ລະດັບໂລກ ທີ່ເລີ້ມຕົ້ນໃໝ່ ກຳລັງພົ້ນເດັ່ນຂຶ້ນ ປິ່ນອ້ອມ ສິ່ງທ້າທາຍຈຳນວນຫຼວງຫຼາຍ ຂອງໂລກ ແລະ ຮັບປະກັນຄວາມຍືນຍົງ ຂອງໂລກ ສຳລັບຄົນ ລຸ້ນຖັດໄປ ໃນອະນາຄົດ.

ການຖົມຊ່ອງວ່າງ ຂອງການພັດທະນາມະນຸດ ແມ່ນສຳຄັນຍິ່ງ, ແຕ່ກໍ່ຍັງແມ່ນ ການຮັບປະກັນວ່າ ຄົນລຸ້ນຖັດໄປ ມີກາລະໂອກາດຄ້າຍຄືກັນ ຫຼື ດີກວ່າ.

ການພັດທະນາ ທີ່ມີແວວວ່າ ຈະດີທັງໝົດເຫຼົ່ານີ້ ສ້າງ ຄວາມຫວັງໃຫ້ໂລກ ວ່າ ສິ່ງຕ່າງໆ ສາມາດປ່ຽນແປງໄດ້ ແລະ ວ່າ ການປ່ຽນຮູບກໍ່ເປັນໄປໄດ້. ໂລກຂອງເຮົາມີເວລາໜ້ອຍກວ່າ 15 ປີ ເພື່ອບັນລຸ ວາລະທີ່ມຸ້ງຫວັງຂອງຕົນ ທີ່ຈະບໍ່ປະປ່ອຍຜູ້ໃດໄວ້ຢູ່ທາງຫຼັງ. ການຖົມຊ່ອງວ່າງຂອງການພັດທະນາມະນຸດ ແມ່ນສຳຄັນຍິ່ງ, ແຕ່ກໍ່ຍັງແມ່ນ ການຮັບປະກັນວ່າ ຄົນລຸ້ນ ຖັດໄປມີກາລະໂອກາດຄ້າຍຄືກັນ ຫຼື ດີກວ່າ.

ການບັນລຸວາລະ 2030 ແມ່ນບາດກ້າວທີ່ສຳຄັນ ໄປສູ່ການເອື້ອອຳນວຍໃຫ້ໝົດທຸກຄົນ ທີ່ຈະບັນລຸ ທ່າແຮງຂອງເຂົາເຈົ້າໄດ້ຢ່າງເຕັມສ່ວນ. ໃນຕົວຈິງ, ແນວທາງການພັດທະນາມະນຸດ ແລະ ວາລະ 2030 ມີສາມສາຍເຊື່ອມໂຍງແບບວິເຄາະຮ່ວມກັນ (ເບິ່ງຮູບທີ 2) :

- ທັງສອງ ຍຶດຕິດໃນຄວາມເປັນສາກົນ - ແນວທາງການພັດທະນາມະນຸດໂດຍການເນັ້ນໜັກໃສ່ເພີ່ມທະວີເສລີພາບ ສຳລັບມະນຸດໝົດທຸກຄົນ ແລະ ວາລະ 2030 ໂດຍການເອົາໃຈໃສ່ເຈາະຈິງທີ່ບໍ່ປະປ່ອຍຜູ້ໃດຢູ່ທາງຫຼັງ.
- ທັງສອງໃຊ້ຮ່ວມກັນຂົງເຂດຈຸດເລັງທີ່ເປັນພື້ນຖານອັນດຽວກັນ - ລົບລ້າງຄວາມທຸກຍາກ, ລົບລ້າງຄວາມອຶດຫິວ, ຫຼຸດຜ່ອນຄວາມບໍ່ສະເໝີພາບ, ຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ ເປັນຕົ້ນ.
- ທັງສອງມີຄວາມຍືນຍົງເປັນຫຼັກການທີ່ສຳຄັນພື້ນຖານ.

ການເຊື່ອມໂຍງລະຫວ່າງແນວທາງການພັດທະນາມະນຸດ, ວາລະ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນເສີມສ້າງເຊິ່ງກັນ ແລະ ກັນໃນສາມທິດທາງ. ປະການທຳອິດ ວາລະ 2030 ສາມາດເບິ່ງອອກ ຂອງແນວທາງ ການພັດທະນາມະນຸດ ໃນເຊີງວິເຄາະໃດ ເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ພື້ນຖານແນວຄິດຂອງມັນ. ຄ້າຍຄືກັນ,ແນວທາງການພັດທະນາມະນຸດ ສາມາດທົບທວນ ອົງປະກອບ ຂອງວາລະ 2030 ທີ່ສາມາດເຮັດໃຫ້ມີຄຸນຄ່າສູງຂຶ້ນ.

ປະການທີ່ສອງ, ຕົວຊີ້ບອກ ເປົ້າໝາຍການພັດທະນາແບບຍືນຍົງ ສາມາດນຳໃຊ້ ຕົວຊີ້ບອກການພັດທະນາມະນຸດ ໃນການປະເມີນຄວາມຄືບໜ້າ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ຄ້າຍຄືດຽວກັນ, ແນວທາງການພັດທະນາມະນຸດ ສາມາດຕື່ມເຕັມໃຫ້ ຕົວຊີ້ບອກ ຂອງເປົ້າໝາຍການພັດທະນາແບບຍືນຍົງ ດ້ວຍຕົວຊີ້ບອກ ເພີ່ມເຕີມ.

ທິດທາງທີ່ສາມ, ບົດລາຍງານ ການພັດທະນາມະນຸດ ສາມາດເປັນເຄື່ອງມື ຊຸກຍູ້ສົ່ງເສີມ ທີ່ຊົງພະລັງທີ່ສຸດ ສຳລັບວາລະ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ. ສ່ວນວ່າ ເປົ້າໝາຍການພັດທະນາແບບຍືນຍົງ ສາມາດເປັນເວທີຢ່າງດີອັນໜຶ່ງ ສຳລັບເພີ່ມທະວີ ທັດສະນະວິໄສ (ຫລື ຄວາມຊັດເຈນ) (ຫລື ການເບິ່ງເຫັນ) ຂອງແນວທາງການພັດທະນາມະນຸດ ແລະ ບົດລາຍງານ ການພັດທະນາມະນຸດ ສຳລັບຊຸມປີຖັດໄປ.

**ຮູບທີ 2**
**ສາຍເຊື່ອມໂຍງເຊີ່ງວິເຄາະ ລະຫວ່າງ ແນວທາງການພັດທະນາມະນຸດ ແລະ ວາລະ 2030**



Source: Human Development Report Office.

## ເຖິງຈະເປັນເຊັ່ນນັ້ນ ຄວາມຂາດເຂີນປັດໃຈພື້ນຖານ ຍັງມີຫລວງຫລາຍ ໃນຈຳນວນ ກຸ່ມປະຊາກອນຕ່າງໆ.

ໜຶ່ງຄົນໃດໃນຈຳນວນເກົ້າຄົນຢູ່ໃນໂລກ ມີຄວາມອຶດຫິວ ແລະ ໜຶ່ງໃນສາມ ມີພາວະໂພຊະນາການຕ່ຳ.[7] ເດັກຍິງປະມານ 15 ລ້ານຄົນ ແຕ່ງງານ ກ່ອນອາຍຸຈະເຖິງ 18 ປີ, ໜຶ່ງຄັ້ງ ໃນແຕ່ລະ 2 ວິນາທີ.[8] ໃນທົ່ວໂລກ 18.000 ຄົນຕໍ່ມື້ ເສຍຊີວິດຍ້ອນພາວະມົນລະພິດຂອງອາກາດ.[9] ແລະ ຕິດເຊື້ອເອດ 2 ລ້ານຄົນຕໍ່ປີ.[10] ໃນແຕ່ລະນາທີ ຈຳນວນ 24 ຄົນ ໂດຍສະເລ່ຍ ຖືກຍົກຍ້າຍຖິ່ນ ຈາກເຮືອນຢູ່ອາໄສຂອງເຂົາເຈົ້າ.[11]

ຄວາມຂາດເຂີນປັດໃຈຂັ້ນພື້ນຖານເຊັ່ນນັ້ນ ແມ່ນສິ່ງທີ່ເກີດຂຶ້ນປະຈຳວັນ ໃນບັນດາກຸ່ມຄົນຕ່າງໆ, ແມ່ຍິງ ແລະ ເດັກຍິງ, ຊົນເຜົ່າສ່ວນນ້ອຍ, ຄົນເຜົ່າພື້ນເມືອງ, ຄົນພິການ, ຄົນຍ້າຍຖິ່ນ - ທັງໝົດ ມີສະພາບຂາດເຂີນ ໃນມິຕິພື້ນຖານຂອງການພັດທະນາມະນຸດ.

ຢູ່ໃນທຸກພາກພື້ນ ແມ່ຍິງ ມີອາຍຸຍືນສະເລ່ຍຍາວນານ ກວ່າຜູ້ຊາຍ ແລະ ຢູ່ໃນພາກພື້ນເກືອບທັງໝົດ ເດັກຍິງ ມີຄາດຄະເນຈຳນວນປີຮຽນໜັງສື ຄ້າຍຄືກັບເດັກຊາຍ. ເຖິງຢ່າງໃດກໍ່ຕາມ ໃນທຸກພາກພື້ນ ໂດຍສະເລ່ຍ ແມ່ຍິງ ມີຄ່າຕໍ່າກວ່າຄ່າດັດຊະນີການພັດທະນາມະນຸດຂອງເພດຊາຍ ຢ່າງບໍ່ປ່ຽນແປງ. ຄວາມແຕກຕ່າງທີ່ໃຫຍ່ທີ່ສຸດ ພົບເຫັນໄດ້ຢູ່ພາກພື້ນອາຊີໃຕ້, ຊຶ່ງຄ່າດັດຊະນີການພັດທະນາມະນຸດ ຂອງແມ່ຍິງ ແມ່ນ 20 ສ່ວນຮ້ອຍ ຕໍ່າກວ່າຄ່າ ດັດຊະນີການພັດທະນາມະນຸດ ຂອງເພດຊາຍ.

ຍັງມີ ພວກມີຖານະຂາດເຂີນ ທີ່ອີງຕາມກຸ່ມຊົນເຜົ່າ, ດັ່ງທີ່ປະກົດ ຢູ່ປະເທດເນປານ. ພວກພາມ ແລະ ພວກເຈເຈຕຣີ ມີຄ່າດັດຊະນີ ການພັດທະນາມະນຸດ ສູງກວ່າໝູ່ (0.538), ຕິດຕາມມາດ້ວຍ ພວກເຈເຈເຕຣີ (0.482), ພວກດາລິດ (0.434) ແລະ ພວກມຸດສະລິມ (0.422). ຄວາມບໍ່ສະເໝີພາບທີ່ໃຫຍ່ທີ່ສຸດແມ່ນຢູ່ໃນລະດັບການສຶກສາ, ໂດຍມີຜົນກະທົບທີ່ເລິກເຊິ່ງຍາວນານ ກ່ຽວກັບຂີດຄວາມສາມາດ [12].

ຄວາມບໍ່ພຽງພໍ ໃນການພັດທະນາມະນຸດຂັ້ນພື້ນຖານ ໃນບັນດາກຸ່ມປະຊາກອນຕ່າງໆ ຍັງມີຢ່າງບໍ່ລົດລະ ຢູ່ສະເໝີ ຍ້ອນສາເຫດຂອງການຈຳແນກ. ແມ່ຍິງ ໂດຍສະເພາະ ຖືກຈຳແນກ ໃນດ້ານກາລະໂອກາດ ແລະ ຈົບລົງດ້ວຍຜົນໄດ້ຮັບທີ່ເສຍປຽບ (ເບິ່ງຮູບທີ 3). ຢູ່ໃນຫຼາຍສັງຄົມມະນຸດ ແມ່ຍິງຖືກຈຳແນກໃນດ້ານການເຂົ້າເຖິງປັດໃຈການຜະລິດ, ດັ່ງເຊັ່ນສິດທິຕໍ່ທີ່ດິນ ແລະ ຊັບສິນ. ດັ່ງທີ່ ເປັນຜົນທີ່ຕາມມາ ຈຶ່ງມີແຕ່ 10-20 ສ່ວນຮ້ອຍ ຂອງຜູ້ມີກຳມະສິດໃນທີ່ດິນຢູ່ປະເທດທີ່ກຳລັງພັດທະນາ ແມ່ນແມ່ຍິງ.[13]

ຊົນເຜົ່າກຸ່ມນ້ອຍ ແລະ ກຸ່ມອື່ນໆຕາມປົກກະຕິ ຖືກກີດກັ້ນຈາກການສຶກສາ, ການແຈ້ງງານ ແລະ ຕຳແໜ່ງການບໍລິຫານ ແລະ ການເມືອງ, ສົ່ງຜົນໃນຄວາມທຸກຍາກ ແລະ ຄວາມສ່ຽງທີ່ສູງຂຶ້ນຕໍ່ອາດຊະຍາກຳ ລວມທັງ ການຄ້າມະນຸດ. ໃນປີ 2012, 51 ສ່ວນຮ້ອຍ ຂອງຊົນເຜົ່າກຸ່ມນ້ອຍ ຢູ່ປະເທດຫວຽດນາມ ດຳລົງຊີວິດຢູ່ໃນຄວາມທຸກຍາກ ຫຼາຍມິຕິ, ທຽບກັບພຽງແຕ່ 17 ສ່ວນຮ້ອຍຂອງຊົນເຜົ່າກິນ ຫຼື ເຜົ່າຫົ່ວ ທີ່ເປັນຊົນເຜົ່າສ່ວນໃຫຍ່.[14]

ຫຼາຍກວ່າ 370 ລ້ານ ຊົນເຜົ່າພື້ນເມືອງ ທີ່ຈຳແນກຕົນເອງ ໃນ 70 ປະເທດ ຍັງປະເຊີນກັບການຈຳແນກ ແລະ ການກີດກັ້ນໃນຂອບທາງດ້ານນິຕິກຳ, ໃນການເຂົ້າເຖິງ ການສຶກສາເປັນພາສາຂອງເຂົາເຈົ້າເອງ ແລະ ໃນການເຂົ້າເຖິງດິນ, ນໍ້າ, ປ່າໄມ້ ແລະ ສິດທິຊັບສິນທາງປັນຍາ.[15]

ຄົນ ຈ□ານວນຫຼາຍກວ່າ 1 ຕື້ ຖືກປະເມີນວ່າ ດຳລົງຊີວິດ ໂດຍມີບາງລັກສະນະ ຂອງຄວາມພິການ ແລະ ແມ່ນຈຳນວນໃນບັນດາຜູ້ດ້ອຍໂອກາດທີ່ສຸດ ໃນສັງຄົມສ່ວນຫຼາຍ. ພວກເຂົາເຈົ້າ ປະເຊີນກັບມົນທິນ, ການຈຳແນກ ແລະ ບໍ່ສາມາດເຂົ້າເຖິງໄດ້ ສະພາບແວດລ້ອມວັດຖຸ ແລະ ເໝືອນຈິງ (ຫຼືເກືອບຂອງແທ້).[16]

ໃນປັດຈຸບັນມີ 244 ລ້ານຄົນ ດຳລົງຊີວິດ ຢູ່ນອກປະເທດບ້ານເກີດຂອງຕົນເອງ.[17] ຈຳນວນຫຼາຍແມ່ນຜູ້ອົບພະຍົບທາງເສດຖະກິດ ຊຶ່ງຫວັງວ່າ ຈະມີຊີວິດທີ່ດີຂຶ້ນ ແລະ ສົ່ງເງິນກັບຄືນມາບ້ານເກີດ. ແຕ່ຄົນຍ້າຍຖິ່ນ ຈ□ານວນຫຼາຍ ໂດຍສະເພາະຜູ້ອົບພະຍົບຫລົບໜີໄພ ຍ້ອນຖືກໃຊ້ກຳລັງ 65 ລ້ານຄົນໃນທົ່ວໂລກ, ປະເຊີນກັບສະພາບເງື່ອນໄຂທີ່ຮຸນແຮງສຸດຂີດ - ຂາດແຄນວຽກເຮັດງານທຳ, ລາຍໄດ້ ແລະ ການເຂົ້າເຖິງການຮັກສາສຸຂະພາບ ແລະ ການບໍລິການທາງສັງຄົມ ນອກເໜືອຈາກການຊ່ວຍເຫຼືອດ້ານມະນຸດສະທຳຍາມສຸກເສີນ. ເຂົາເຈົ້າ ປະເຊີນຢູ່ສະເໝີ ການສ້າງຄວາມລຳບາກໃຈ, ຄວາມກຽດຊັງ (ການກໍ່ກວນ, ການລົບກວນ) ແລະ ຄວາມຮຸນແຮງ ຢູ່ໃນປະເທດເຈົ້າຂອງບ້ານ.

### ການຂາດເຂີນຂອງມະນຸດ ມີລັກສະນະປ່ຽນແປງ ຢູ່ຕະຫຼອດເວລາ. ຂ້າມຜ່ານ ເສັ້ນແບ່ງການພັດທະນາມະນຸດ ຂັ້ນຕໍ່າ ບໍ່ຈຳເປັນ ທີ່ຈະຮັບປະກັນວ່າ ປະຊາກອນ ຈະໄດ້ຮັບການປົກປ້ອງ ຈາກໄພຂົ່ມຂູ່ ທີ່ກຳລັງພົ້ນເດັ່ນ ແລະ ທີ່ຈະມີໃນອະນາຄົດ

ການຂາດເຂີນໃນມະນຸດ ກໍ່ຍັງມີລັກສະນະປ່ຽນແປງຢູ່ຕະຫຼອດເວລາເຊັ່ນກັນ. ຂ້າມຜ່ານຂີດແຫ່ງການພັດທະນາມະນຸດຂັ້ນຕໍ່າ ບໍ່ຈຳເປັນຈະຮັບປະກັນ ວ່າປະຊາກອນ ຈະໄດ້ຮັບການປົກປ້ອງ ຈາກໄພຂົ່ມຂູ່ ທີ່ກຳລັງພົ້ນເດັ່ນ ກໍ່ຄື ທີ່ຈະມີໃນອະ ນາ

ຄົດ. ແນ່ນແຕ່ວ່າ ເມື່ອໃດທີ່ບຸກຄົນ ມີທາງເລືອກຫຼາຍຂຶ້ນ ກວ່າເມື່ອກ່ອນ, ມັນອາດ ຈະມີໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງຂອງຕົວເລືອກເຫຼົ່ານັ້ນ.

ການລະບາດຂອງພະຍາດ, ຄວາມຮຸນແຮງ, ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ ສາມາດທໍາ ລາຍ ຢ່າງໄວວາ ຄວາມຄືບໜ້າ ຂອງບັນດາບຸກຄົນ ທີ່ໄດ້ຫຼຸດພົ້ນອອກຈາກ ຄວາມທຸກຍາກ. ມັນຍັງ ສາມາດສ້າງຄວາມຂາດເຂີນອັນໃໝ່. ຜູ້ຄົນ ຈໍານວນຫລາຍລ້ານ ໃນທົ່ວໂລກ ມີຄວາມສ່ຽງ ຕໍ່ໄພພິບັດທາງທໍາມະຊາດ ທີ່ຕິດພັນກັບພູມີອາ ກາດ, ໄພແຫ້ງແລ້ງ, ນໍ້າຖ້ວມ ແລະ ການບໍ່ຄໍ້າປະກັນສະບຽງອາຫານທີ່ສໍາພັນກັນ, ດໍາລົງຊີວິດລ້ຽງກຸ້ມຕົນເອງຢູ່ພື້ນທີ່ດິນເສື່ອມໂຊມ. ການຂາດເຂີນຂອງຄົນລຸ້ນປັດຈຸບັນ ສາມາດດໍາເນີນຕໍ່ໄປຮອດຄົນລຸ້ນຖັດໄປ. ການສຶກສາຂອງຜູ້ປົກຄອງ, ສຸຂະພາບ ແລະ ລາຍໄດ້ ສາມາດສ້າງຜົນກະທົບ ທີ່ໃຫຍ່ຫຼວງ ຕໍ່ກາລະໂອກາດ ທີ່ມີຕໍ່ລູກຫຼານ ຂອງເຂົາເຈົ້າເອງ.

## ອຸປະສັກທີ່ສໍາຄັນ ຕໍ່ການພັດທະນາ ມະນຸດສໍາລັບໝົດທຸກຄົນ ຍັງຄົງມີ ຢ່າງບໍ່ທົດຖອຍ

ກຸ່ມຄົນ ທີ່ຍັງຄົງຂາດເຂີນ ປາດສະຈາກປັດໃຈພື້ນຖານ ອາດເປັນຈໍານວນທີ່ແທດເຖິງຍາກທີ່ສຸດ - ໃນດ້ານພູມສັນຖານ, ການເມືອງ, ສັງຄົມ ແລະ ເສດຖະກິດ. ຂ້າມຜ່ານອຸປະສັກກີດຂວາງ ອາດຮຽກຮ້ອງ ຊັບພະຍາກອນ ທາງການເງິນທີ່ຫຼາຍຂຶ້ນ ແລະ ການຊ່ວຍເຫຼືອດ້ານການພັດທະນາ, ປະໂຫຍດທີ່ໄດ້ຮັບ ຢ່າງຕໍ່ເນື່ອງ ໃນດ້ານເຕັກໂນໂລຊີ ແລະ ຂໍ້ມູນທີ່ດີຂຶ້ນສໍາລັບການຕິດຕາມ ແລະ ປະເມີນຜົນ.

ຮູບທີ 3

**ການຈຳແນກຕໍ່ແມ່ຍິງ ຈຳກັດກາລະໂອກາດ ຂອງເຂົາເຈົ້າ**




Source: Human Development Report Office.

ການເຮັດໃຫ້ເປັນຈິງ ການພັດທະນາມະນຸດສຳລັບໝົດທຸກຄົນ ໃນທາງປະຕິບັດ ແມ່ນເປັນໄປໄດ້, ແຕ່ອຸປະສັກຕົ້ນຕໍ ແລະ ຮູບແບບຂອງການກີດກັນ ຈະຕ້ອງຂ້າມຜ່ານໃຫ້ໄດ້ເສຍກ່ອນ

ແຕ່ ອຸປະສັກບາງຢ່າງ ຝັງເລິກໃນເອກະລັກ (ຫລື ອັດຕະລັກ) ແລະ ສາຍພົວພັນທາງດ້ານສັງຄົມ ແລະ ການເມືອງ - ດັ່ງເຊັ່ນ ຄວາມຮຸນແຮງຢ່າງໂຈ່ງແຈ້ງ, ກົດໝາຍທີ່ຈຳແນກ, ບັນທັດຖານທາງສັງຄົມທີ່ກີດກັ້ນ, ການມີສ່ວນຮ່ວມທາງການເມືອງທີ່ບໍ່ດຸ່ນດ່ຽງ, ການກະຈາຍກາລະໂອກາດທີ່ບໍ່ສະເໝີພາບ. ການຂ້າມຜ່ານສິ່ງເຫຼົ່ານີ້ ຈະຮຽກຮ້ອງໃຫ້ມີຄວາມເມດຕາກາຣຸນາ, ຂັນຕິທຳ (ຄວາມອົດທົນ ຫຼື ອົດກັ້ນ) ແລະ ຄວາມຮັບຜິດຊອບທາງສິນທຳຕໍ່ຄວາມຍຸຕິທຳໂດຍລວມໃນທົ່ວໂລກ ແລະ ຄວາມຍືນຍົງ ຢູ່ໃຈກາງຂອງຕົວເລືອກ ສ່ວນບຸກຄົນ ແລະ ສ່ວນລວມ. ຄົນທັງຫຼາຍຄວນຄິດຢ່າງລະອຽດວ່າເຂົາເຈົ້າເປັນ

ສ່ວນ ທີ່ສອດຄ່ອງທົ່ວທັງໝົດຂອງໂລກ ແທນທີ່ຈະແມ່ນດິນແດນ ທີ່ຕັດແຍກຈາກກັນຂອງກຸ່ມຄົນ ແລະ ກຸ່ມຜົນປະໂຫຍດທີ່ເປັນຄູ່ແຂ່ງ.

ເພື່ອກ້າວໄປສູ່ການພັດທະນາມະນຸດສໍາລັບໝົດທຸກຄົນ, ກໍານົດໃຫ້ມີຄວາມສໍານຶກ ແລະ ເຂົ້າໃຈໃນບັນດາຕົວຂັບເຄື່ອນ ແລະ ພະລັງຂອງການປ່ຽນແປງ ທີ່ວ່າກຸ່ມຄົນ ຖືກເຮັດໃຫ້ດ້ອຍຄ່າ (ບໍ່ມີຄວາມສໍາຄັນ) ນັ້ນ ຄືແນວໃດ, ຊຶ່ງຈະຫລີກຫລ່ຽງບໍ່ໄດ້ໃນທົ່ວປະເທດ ແລະ ພາກພື້ນ. ໃນທາງປະຕິບັດ ການເຮັດໃຫ້ເປັນຈິງ ການພັດທະນາມະນຸດສໍາລັບໝົດທຸກຄົນ ແມ່ນເປັນໄປໄດ້, ແຕ່ອຸປະສັກຕົ້ນຕໍ ແລະ ຮູບແບບຂອງການກີດກັນ ຈະຕ້ອງຂ້າມຜ່ານໃຫ້ໄດ້ເສຍກ່ອນ. (ຮູບທີ 4).

ບໍ່ວ່າ ຈະໂດຍເຈດຕະນາ ຫຼື ບໍ່ເຈດຕະນາກໍ່ຕາມ, ການກີດກັ້ນສາມາດມີຜົນຄ້າຍຄືກັນ - ບາງບຸກຄົນ ອາດຈະດ້ອຍໂອກາດ ກວ່າຄົນອື່ນ ແລະ ທຸກຄົນ ຈະບໍ່ມີ ກາລະໂອກາດ ເທົ່າທຽມກັນ ເພື່ອເຮັດສໍາເລັດ ຢ່າງເຕັມສ່ວນ ທ່າແຮງຂອງເຂົາ ເຈົ້າ. ຄວາມບໍ່ສະເໝີພາບໃນກຸ່ມ ສະທ້ອນເຖິງການແບ່ງແຍກ ທີ່ສ້າງຂຶ້ນຈາກສັງຄົມ ແລະ ຕໍ່ເນື່ອງຍືນຍາວ ເພາະວ່າມັນສ້າງຕັ້ງພື້ນຖານ ສໍາລັບການເຂົ້າເຖິງ ທີ່ບໍ່ເທົ່າທຽມກັນ ຕໍ່ຜົນໄດ້ຮັບທີ່ມີຄຸນຄ່າ ແລະ ຊັບພະຍາກອນ ທີ່ບໍ່ພຽງພໍ (ຫລື ຫາຍາກ). ຂອບເຂດ ແລະ ກົນໄກ ຂອງການກີດກັ້ນ ກໍ່ຍັງປ່ຽນແປງຢູ່ສະເໝີ, ດັ່ງເຊັ່ນດຽວກັບລັກສະນະສະເພາະກຸ່ມ ທີ່ໃຊ້ເປັນພື້ນຖານສໍາລັບການກີດກັ້ນ.

ຮູບທີ 4

**ອຸປະສັກຕໍ່ຄວາມເປັນສາກົນນິຍົມ**




Source: Human Development Report Office.

ຄວາມບໍ່ສະເໝີພາບ ໃນລາຍໄດ້ ມີອິດທິພົນ ຕໍ່ຄວາມບໍ່ສະເໝີພາບໃນມິຕິອື່ນໆ ຂອງຊີວິດການເປັນຢູ່ທີ່ດີ, ແລະ ໃນທາງກັບກັນ

ສະຖາບັນດ້ານນິຕິກຳ ແລະ ດ້ານການເມືອງ ສາມາດຖືກນຳໃຊ້ໃນທາງທີ່ດີ ແລະ ໃຊ້ໃນທາງທີ່ຜິດ ເພື່ອເຮັດໃຫ້ການແບ່ງແຍກໃນກຸ່ມເປັນການຖາວອນ. ກໍລະນີຮ້າຍແຮງ ຕິດພັນກັບສິດທິ ຂອງບັນດາຊຸມຊົນຜູ້ຍິງທີ່ຮັກຜູ້ຍິງດ້ວຍກັນ, ຜູ້ຊາຍທີ່ຮັກຜູ້ຊາຍດ້ວຍກັນ, ຄົນຮັກສອງເພດ, ຄົນຂ້າມເພດ ແລະ ຄົນມີລັກສະນະທາງຊີວະພາບຂອງທັງເພດຍິງ ແລະ ເພດຊາຍໃນ 73 ປະເທດ ແລະ ດິນແດນ ຫ້າແຫ່ງ (ອານະເຂດ) ຊຶ່ງພຶດຕິກຳຮັກຮ່ວມເພດ (ຫລື ມີເພດສຳພັນກັບເພດດຽວກັນ) ແມ່ນຜິດກົດໝາຍ[18]. ກົດໝາຍ ມີລັກສະນະຈຳແນກ ໃນກໍລະນີອື່ນໆ ເພາະວ່າ ມັນກີດຂວາງ ຄົນບາງກຸ່ມ ຈາກການເຂົ້າເຖິງການບໍລິການ ຫຼື ກາລະໂອກາດ.

ບັນທັດຖານ (ຫລື ກົດເກນ) ທາງສັງຄົມບາງຢ່າງ ສາມາດເປັນປະໂຫຍດສຳລັບການຢູ່ຮ່ວມກັນຢ່າງກົມກຽວໃນສັງຄົມ, ແຕ່ໃນສ່ວນອື່ນໆ ສາມາດເປັນການເລືອກປະຕິບັດ, ມີອະຄະຕິ (ມີຄວາມລຳອຽງ) ແລະ ຈຳເພາະເຈາະຈົງ. ບັນທັດຖານທາງສັງຄົມ ຢູ່ໃນຫຼາຍປະເທດ ຫຼຸດຜ່ອນທາງເລືອກ ແລະ ກາລະໂອກາດ ສຳລັບແມ່ຍິງ ແລະ ເດັກຍິງ, ຊຶ່ງຕາມປົກກະຕິແມ່ນຮັບຜິດຊອບສຳລັບຫຼາຍກວ່າສາມສ່ວນສີ່ (3/4) ຂອງວຽກຄົວເຮືອນທີ່ບໍ່ໄດ້ຄ່າແຮງ (ຫລືຄ່າຈ້າງ)[19]. ການມີໜ້າຂອງແມ່ຍິງໃນຖານະລູກຄ້າຢູ່ຮ້ານກາເຟ ຫຼື ຮ້ານອາຫານ ອາດຈະຖືກເຮັດໃຫ້ຫຍໍ້ທໍ້ (ຫຼື ທໍ້ຖອຍ) ແລະ ໃນບາງກໍລະນີມັນແມ່ນສິ່ງທີ່ຄະລຳສຳລັບແມ່ຍິງ ທີ່ຈະເດີນທາງໃນສະຖານທີ່ສາທາລະນະ ໂດຍປາດສະຈາກ ການມີເພດຊາຍຮ່ວມເດີນທາງນຳ [20].

ບາງທີ່ ກົນໄກທາງກົງທີ່ສຸດ ຂອງການກີດກັ້ນແມ່ນຄວາມຮຸນແຮງ. ແຮງຈູງໃຈ ປະກອບດ້ວຍ ການລວມເປັນໜຶ່ງ ອຳນາດທາງການເມືອງ, ການພິທັກ (ຫລື ປົກປ້ອງ) ຊີວິດການເປັນຢູ່ທີ່ດີ ຂອງຊົນຊັ້ນສູງໃນສັງຄົມ, ການຄວບຄຸມການກະຈາຍຊັບພະຍາກອນ, ການຍຶດຄອງດິນແດນ ແລະ ຊັບພະຍາກອນ ແລະ ການຍົກຍ້ອງ (ຊື່ນຊົມ) ອຸດົມການ (ຄະຕິນິຍົມ) ທີ່ອີງໃສ່ຄວາມເປັນເລີດ (ຄວາມຍິ່ງໃຫຍ່) ຂອງອັດຕະລັກໃດໜຶ່ງ ແລະ ຊຸດຂອງຄຸນຄ່າ.

ກຸ່ມຄົນ ຈຳນວນໜຶ່ງສ່ວນຮ້ອຍ ຢູ່ຈອມ ຂອງການກະຈາຍຄວາມຮັ່ງມີ ໃນໂລກ ຄອບຄອງ 46 ສ່ວນຮ້ອຍຂອງຄວາມຮັ່ງມີຂອງໂລກ[21]. ຄວາມບໍ່ສະເໝີພາບໃນລາຍໄດ້ມີອິດທິພົນຕໍ່ຄວາມບໍ່ສະເໝີພາບໃນມິຕິອື່ນໆຂອງຊີວິດການເປັນຢູ່ທີ່ດີ ແລະ ໃນທາງກັບກັນ. ໂດຍທີ່ຮູ້ວ່າ ຄວາມບໍ່ສະເໝີພາບໃນປັດຈະບັນ, ກຸ່ມຄົນທີ່ຖືກກີດກັ້ນ ມີຈຸດຢືນທີ່ອ່ອນແອ ທີ່ຈະລິເລີ່ມການ ປ່ຽນຮູບແບບສະຖາບັນ. ເຂົາເຈົ້າຂາດແຄນຕົວແທນ ແລະ ສິດສຽງ ເພາະສະນັ້ນຈຶ່ງມີແຮງງັດທາງການເມືອງບໍ່ຫຼາຍພໍ ທີ່ຈະມີອິດທິພົນຕໍ່ນະໂຍບາຍ ແລະ ນິຕິກຳ ຜ່ານພາຫະ (ຫລືເຄື່ອງມື, ກົນໄກ) ແບບດັ້ງເດີມ.

ໃນເວລາທີ່ບາດກ້າວ ແລະ ການຮ່ວມມືໃນທົ່ວໂລກ ແມ່ນສິ່ງຈຳເປັນ ທີ່ຫຼີກລ່ຽງບໍ່ໄດ້, ເອກະລັກສ່ວນບຸກຄົນ ແມ່ນແຄບ ລົງ. ຂະບວນການເຄື່ອນໄຫວທາງ ສັງຄົມ ແລະ ການເມືອງ ທີ່ເຊື່ອມໂຍງກັບ ເອກະລັກ, ຊຶ່ງຈະແມ່ນຊາດນິຍົມ ຫຼື ນະໂຍບາຍບົນພື້ນຖານຊົນເຜົ່າ, ຄ້າຍກັບວ່າຈະນັບມື້ນັບຮຸນແຮງຂຶ້ນ. ການຖອນຕົວອອກຈາກສະຫະພາບເອີຣົບຂອງສະຫະລາ ຊະອານາຈັກ (Brexit) ແມ່ນໜຶ່ງ ໃນຕົວຢ່າງທີ່ລ້າສຸດກວ່າໝູ່ ຂອງການຖອຍຄືນສູ່ລັດທິຊາດນິຍົມ ເມື່ອໃດທີ່ບຸກຄົນຮູ້ສຶກແປກ ແລະ ແຕກແຍກບໍ່ເປັນມິດ ໃນທ້າມກາງໂລກ ທີ່ກຳລັງປ່ຽນແປງ.

ຄວາມບໍ່ມີຂັນຕິທຳ (ຫລື ການຂາດຄວາມອົດທົນ) ຕໍ່ຄົນອື່ນໃນທຸກຮູບແບບ - ນິຕິກຳ, ສັງຄົມ ຫຼື ແບບບັງຄັບ - ແມ່ນກົງກັນຂ້າມກັບການພັດທະນາມະນຸດ ແລະ ຫຼັກການຂອງຄວາມເປັນສາກົນນິຍົມ.

## ການພັດທະນາ ມະນຸດ ສຳລັບໝົດທຸກຄົນ ຮຽກຮ້ອງ ການຫັນທິດທາງ ໃນບາງບັນຫາໃນເຊີງວິເຄາະ

ການພັດທະນາມະນຸດ ກ່ຽວພັນການຂະຫຍາຍກວ້າງການເລືອກ, ຊຶ່ງກຳນົດວ່າພວກເຮົາແມ່ນໃຜ ແລະ ພວກເຮົາເຮັດຫຍັງຢູ່. ປັດໃຈຫຼາຍຢ່າງເປັນຫຼັກພື້ນຖານການເລືອກເຫຼົ່ານີ້, ຂອບເຂດທີ່ກວ້າງຂອງທາງເລືອກ ທີ່ພວກເຮົາຕ້ອງເລືອກເອົາມາ -

ຂີດຄວາມສາມາດຂອງພວກເຮົາ; ຂໍ້ຈຳກັດທາງສັງຄົມ ແລະ ທາງການຮັບຮູ້ ຫຼື ເຂົ້າໃຈ ແລະ ບັນທັດຖານທາງສັງຄົມ ແລະ ການຊຸກຍູ້ (ຈູງໃຈ ຫຼື ອິດທິພົນ) ທີ່ຫຼໍ່ຫຼອມຄຸນຄ່າ ແລະ ການເລືອກຂອງພວກເຮົາ; ການສ້າງຄວາມເຂັ້ມແຂງຂອງ ພວກເຮົາເອງ ແລະ ຕົວແທນ ທີ່ພວກເຮົາປະຕິບັດ ໂດຍສ່ວນບຸກຄົນ ແລະ ເປັນສ່ວນຂອງກຸ່ມ ໃນການຫຼໍ່ຫຼອມທາງເລືອກຂອງພວກເຮົາ ແລະ ກາລະໂອກາດ, ແລະ ກົນໄກທີ່ມີຢູ່ແລ້ວ ເພື່ອແກ້ໄຂ ການກ່າວອ້າງທີ່ແຂ່ງຂັນກັນ ໃນລັກສະນະທີ່ສະເໝີພາບ ແລະ ນຳໄປສູ່ການເຮັດສຳເລັດທ່າແຮງຂອງມະນຸດ.

ແນວທາງການພັດທະນາມະນຸດ ສະໜອງທິດທາງຢ່າງເປັນລະບົບ ເພື່ອເຊື່ອມຕໍ່ແນວຄິດເຫຼົ່ານີ້. ມັນສາມາດມີພະລັງໂດຍສະເພາະ ໃນການເບິ່ງແສງສະຫວ່າງ ການມີປະຕິກຳລິຍາຕໍ່ກັນ ບັນດາປັດໃຈ ທີ່ສາມາດປະຕິບັດງານ ຕໍ່ຂໍ້ເສຍປຽບຂອງບຸກຄົນ ແລະ ກຸ່ມຄົນຢູ່ໃນສະພາບເງື່ອນໄຂຕ່າງໆ.

ສິດທິມະນຸດ ແມ່ນພື້ນຖານ ຂອງການພັດທະນາມະນຸດ. ສິດທິມະນຸດ ມອບທັດສະນະທີ່ເປັນປະໂຫຍດ ສຳລັບການວິເຄາະການພັດທະນາມະນຸດ. ຜູ້ດຳລົງຕຳແໜ່ງໜ້າທີ່ ສະໜັບສະໜູນ ແລະ ເອື້ອເຟື້ອຊ່ວຍເຫຼືອ ການພັດທະນາມະນຸດ ແລະ ມີຄວາມຮັບຜິດຊອບ ສຳລັບຄວາມຫຼົ້ມເຫຼວ ຂອງລະບົບສັງຄົມ ທີ່ຈະສະໜອງການພັດທະນາມະນຸດ. ທັດສະນະຄະຕິເຫຼົ່ານີ້ ບໍ່ພຽງແຕ່ຈະກວ້າງໄກ ເກີນກວ່າ ການຮຽກຮ້ອງຂັ້ນຕໍ່າສຸດ ຂອງການພັດທະນາມະນຸດ ແຕ່ຍັງສາມາດຮັບໃຊ້ເປັນດັ່ງເຄື່ອງມື ທີ່ມີພະລັງໃນການສະແຫວງຫາວິທີແກ້ໄຂ (ຄຳຕອບ).

## ສິດສຽງໃນການສະແດງຄວາມຄິດເຫັນ ແລະ ຄວາມເປັນອິດສະຫຼະ, ຕາມທີ່ເປັນສ່ວນ ຂອງເສລີພາບຂອງຕົວແທນ ແລະ ອິດສະຫຼະພາບ ຂອງຊີວິດການເປັນຢູ່, ເປັນສ່ວນປະກອບທີ່ສຳຄັນຕໍ່ການພັດທະນາມະນຸດ

ຄວາມຄິດຂອງຄວາມໝັ້ນຄົງມະນຸດ ຄວນເນັ້ນໜັກ ໃສ່ຄວາມເຂົ້າໃຈຢ່າງເລິກເຊິ່ງ ຕໍ່ໄພຂົ່ມຂູ່, ຄວາມສ່ຽງ ແລະ ວິກິດ ສຳລັບມາດຕະການ (ບາດກ້າວ) ຮ່ວມໃນການພັດທະນາມະນຸດ ແລະ ແນວທາງຄວາມໝັ້ນຄົງມະນຸດ. ສິ່ງທ້າທາຍແມ່ນເພື່ອດຸ່ນດ່ຽງການຕອບສະໜອງ (ຮັບມື) ທີ່ຂັບເຄື່ອນ ໂດຍການກະທົບຢ່າງແຮງ ຕໍ່ໄພຂົ່ມຂູ່ລະດັບໂລກ ແລະ ການສົ່ງເສີມວັດທະນະທຳຂອງການປ້ອງກັນເຫດ.

ສິດທິໃນການສະແດງຄວາມຄິດເຫັນ ແລະ ຄວາມເປັນອິດສະຫຼະ (ເອກະລາດ), ຕາມທີ່ເປັນສ່ວນ ຂອງເສລີພາບ ຂອງຕົວແທນ ແລະ ເສລີພາບຂອງຊີວິດການເປັນຢູ່ທີ່ດີ, ແມ່ນສ່ວນປະກອບຫຼັກຂອງການພັດທະນາມະນຸດ. ຄວາມອາດສາມາດທີ່ຈະມີສ່ວນຮ່ວມໂດຍເຈດຕະນາ ໃນການໂຕ້ວາທີສາທາລະນະ ແລະ ເປັນຕົວແທນໃນການຫຼໍ່ຫຼອມຊີວິດຄົນໆໜຶ່ງ ແລະ ສິ່ງ ແວດລ້ອມ ແມ່ນລັກສະນະພື້ນຖານ ຂອງການພັດທະນາມະນຸດສຳລັບໝົດທຸກຄົນ. ຈຸດເລັ່ງຕົ້ນຕໍ ຂອງແນວທາງການພັດ ທະນາມະນຸດສ່ວນໃຫຍ່ ຍັງຄົງກ່ຽວກັບເສລີພາບ ໃນຊີວິດການເປັນຢູ່ທີ່ດີ. ແຕ່ໃນຂະນະທີ່ ຊີວິດການເປັນຢູ່ທີ່ດີ ມີຄວາມຄືບໜ້າ, ການເນັ້ນໜັກໃສ່ເສລີພາບຂອງຕົວແທນ ໄດ້ກາຍເປັນຄວາມສຳຄັນຫຼາຍຂຶ້ນ.

ການພັດທະນາມະນຸດ ເປັນບັນຫາ ກ່ຽວກັບການສົ່ງເສີມ ບໍ່ພຽງແຕ່ສະເພາະ ເສລີພາບຂອງສ່ວນບຸກຄົນ, ແຕ່ຍັງແມ່ນເສລີ ພາບຂອງກຸ່ມຄົນ ຫຼື ລວມໝູ່. ສຳລັບຜູ້ທີ່ດ້ອຍໂອກາດກວ່າໝູ່ ແລະ ຄົນທີ່ຂາດເຂີນທີ່ສຸດ ໜ້າທີ່ຕົວແທນລວມໝູ່ ສາມາດມີພະລັງ ຫຼາຍຂຶ້ນກວ່າ ຕົວແທນສ່ວນບຸກຄົນ. ບຸກຄົນໆໜຶ່ງ ແມ່ນບໍ່ແນ່ນອນ ທີ່ຈະບັນລຸໄດ້ຫຼວງຫຼາຍໂດຍລຳພັງ ແລະ ອຳ ນາດ ອາດສາມາດເຮັດສຳເລັດໄດ້ ພຽງແຕ່ຜ່ານທາງມາດຕະການລວມໝູ່.

ເອກະລັກມີອິດທິພົນຕໍ່ (ຫລື ສິ່ງຜົນກະທົບຕໍ່) ໜ້າທີ່ຕົວແທນ ແລະ ຄວາມເປັນເອກະລາດ. ຄົນ ມີເສລີພາບໃນການເລືອກເອກະລັກຂອງເຂົາເຈົ້າເອງ, ເສລີພາບທີ່ສຳຄັນຢ່າງໜຶ່ງ ທີ່ຈະຮັບຮູ້, ຄຸນຄ່າ ແລະ ປົກປ້ອງ. ແຕ່ລະຄົນ ສົມຄວນໄດ້ຮັບທາງເລືອກ ໃນການຕັດສິນໃຈ ຕໍ່ບັນດາເອກະລັກ ທີ່ແຕກຕ່າງກັນ ຊຶ່ງພວກເຂົາເຈົ້າ ນັບຖືຄຸນຄ່າ. ການຮັບຮູ້ ແລະ ເຄົາລົບທາງເລືອກເຊັ່ນນັ້ນ ແມ່ນສິ່ງຈຳເປັນ ສຳລັບການຢູ່ຮ່ວມກັນ ໂດຍສັນຕິ ໃນສັງຄົມ ພະຫຸຊົນເຜົ່າ ແລະ ພະຫຸວັດທະນະທຳ (ຫລື ຊົນເຜົ່າ ແລະ ວັດທະນະທຳທີ່ຫຼາກຫຼາຍ).

ສາມບັນຫາ ຂອງເອກະລັກ ມີຜົນສະທ້ອນ ສຳລັບການພັດທະນາມະນຸດ ທົ່ວທັງໂລກ (ຫລື ເພື່ອໝົດທຸກຄົນ). ບັນຫາທີ່ໜຶ່ງ, ພື້ນທີ່ ສຳລັບການມີ ເອກະລັກຫຼາຍຢ່າງ ແມ່ນຈຳກັດຫຼາຍຂື້ນ ໃນບັນດາບຸກຄົນທີ່ດ້ອຍໂອກາດ ແລະ ບຸກຄົນເຫຼົ່ານີ້ ອາດຂາດແຄນອິດສະຫຼະ ພາບ ທີ່ຈະຕັດສິນໃຈເລືອກເອົາເອກະລັກທີ່ເຂົາເຈົ້ານັບຖືຄຸນຄ່າ. ບັນຫາທີ່ສອງ, ການຍຶດໝັ້ນຕໍ່ໜຶ່ງເອກະ ລັກທີ່ໂຕ້ແຍ້ງບໍ່ໄດ້ ແລະ ການປະຕິເສດຕໍ່ເຫດຜົນ ແລະ ການເລືອກເອກະລັກອາດນຳໄປສູ່ການກໍ່ການຮ້າຍ ແລະ ຄວາມຮຸນແຮງ ແລະ ເພາະສະນັ້ນຈຶ່ງເປັນໄພຂົ່ມຂູ່ຕໍ່ການພັດທະນາມະນຸດ. ບັນຫາທີ່ສາມ ກຸ່ມເອກະລັກ ແຂ່ງຂັນກັນ ຍາດແຍ່ງຊັບພະຍາກອນທາງເສດຖະກິດ ແລະ ການເມືອງທີ່ມີຈຳກັດ ລວມທັງອຳນາດ; ກຸ່ມດ້ອຍໂອກາດ ແລະ ກຸ່ມສ່ຽງ ເປັນຝ່າຍພ່າຍແພ້. ໃນກໍລະນີເກືອບທັງໝົດ ຄຸນຄ່າ ແລະ ບັນທັດຖານຂອງສັງຄົມສອນທາງກັບຄວາມຕ້ອງການຂອງຜູ້ດ້ອຍໂອກາດທີ່ສຸດ; ໂດຍທີ່ບູລິມະສິດ ກໍ່ຕັ້ງຂື້ນເລື້ອຍໆໂດຍຮີດຄອງທາງສັງຄົມຂອງອະພິສິດ (ຫລື ເອກະສິດ) ແລະ ການຢູ່ໃຕ້ບັງຄັບບັນຊາ; ແຕ່ການປ່ຽນຄຸນຄ່າ ແລະ ບັນທັດຖານ ສາມາດປ່ຽນແປງການລຳອຽງດັ່ງກ່າວນີ້ ທີ່ມີຕໍ່ກຸ່ມຄົນຜູ້ດ້ອຍໂອກາດ.

ເສລີພາບ ແມ່ນການເພິ່ງພາອາໄສກັນ ແລະ ການເພິ່ງພາອາໄສກັນ ເຊັ່ນນັ້ນ ອາດຖືກເສີມສ້າງໃຫ້ແຂງແຮງ. ຍົກຕົວຢ່າງ, ຜູ້ອອກແຮງງານໜຶ່ງຄົນ ຊົມໃຊ້ເສລີພາບ ເພື່ອເຮັດໃຫ້ພື້ນທີ່ ບ່ອນເຮັດວຽກ ເປັນສີຂຽວ ຫລືເປັນມິດກັບ ສິ່ງແວດລ້ອມຫຼາຍຂຶ້ນ ສາມາດປະກອບສ່ວນໃຫ້ແກ່ເສລີພາບ ຂອງເພື່ອນຮ່ວມງານ ໄດ້ຫັນໃຈເອົາອາກາດທີ່ສະອາດ. ແຕ່ເສລີພາບ ຂອງບຸກຄົນໜຶ່ງ ອາດຈະລ່ວງລະເມີດ (ຫຼື ກະທົບຕໍ່) ຕໍເສລີພາບຂອງຄົນອື່ນໆ. ຄົນຮັ່ງມີ ຈະມີເສລີພາບ ທີ່ຈະສ້າງເຮືອນຫຼາຍຊັ້ນ, ແຕ່ວ່າ ອາດຕັດທອນເພື່ອບ້ານ ທີ່ທຸກຍາກ ຈາກແສງຕາເວັນ ແລະ ສະພາບແວດລ້ອມ ທີ່ລົມລ່ວງດີ.

ການຈຳກັດ ເສລີພາບຂອງຄົນອື່ນ ອາດຈະບໍ່ແມ່ນ ຜົນຕາມມາ ຊຶ່ງວາງແຜນເອົາໄວ້ ຂອງການຊົມໃຊ້ເສລີພາບ ຂອງບຸກຄົນໃດໜຶ່ງ, ແຕ່ບາງບາດກ້າວທີ່ຈຳກັດຮັດແຄບເສລີພາບຂອງບຸກຄົນອື່ນ ອາດຈະເຮັດໂດຍເຈດຕະນາ, ກຸ່ມຄົນຮັ່ງມີ ແລະ ມີອຳນາດ ອາດຈະພະຍາຍາມ ທີ່ຈະຈຳກັດເສລີພາບຂອງຄົນອື່ນໆ.

ສິ່ງດັ່ງກ່າວນີ້ ສະທ້ອນອອກ ໃນການລຳອຽງຄວາມຮັ່ງມີ ໃນທາງເລືອກ ນະໂຍບາຍ ຢູ່ໃນຫຼາຍເສດຖະກິດ, ໃນລັກສະນະຊຶ່ງລະບົບກົດໝາຍ ຖືກສ້າງຂື້ນ ແລະ ໃນວິທີທາງປະຕິບັດງານ ຂອງສະຖາບັນ. ສັງຄົມທັງໝົດ ຈະຕ້ອງໄດ້ດຳເນີນການແລກປ່ຽນ ແລະ ພາຍຫຼັງການໂຕ້ວາທີຢ່າງມີເຫດຜົນ, ກຳນົດຫຼັກການສຳລັບ ການຕົກລົງແກ້ໄຂບັນຫາ, ໃນລັກສະນະທີ່ປ່ຽນແປງຢູ່ສະເໜີ, ຕາມຈັງຫວະທີ່ມັນຜັນຂະຫຍາຍ ແລະ ເຮັດໃຫ້ເປັນຈິງສັງຄົມໜຶ່ງທີ່ທ່ຽງທຳຫຼາຍຂຶ້ນ.

ການພັດທະນາແບບຍືນຍົງ ແມ່ນບັນຫາ ຫຼື ຫົວຂໍ້ໜຶ່ງ ຂອງຄວາມຍຸຕິທຳທາງສັງຄົມ. ມັນກ່ຽວພັນກັບຄວາມສະເໝີພາບລະຫວ່າງລຸ້ນຄົນ, ໝາຍຄວາມວ່າ ເສລີພາບຂອງຄົນລຸ້ນຖັດໄປ (ຫຼື ລຸ້ນໜ້າ) ຫຼື ລຸ້ນໃນອະນາຄົດ ແລະ ຄົນລຸ້ນປັດຈຸບັນ. ສະນັ້ນ, ແນວທາງການພັດທະນາມະນຸດ ຄຳນຶງເຖິງຄວາມຍືນຍົງ ເປັນເໝືອນບັນຫາ ຂອງຄວາມສະເໝີພາບ ທີ່ແບ່ງປັນ (ຫລື ກະຈາຍຢ່າງທົ່ວເຖິງ), ທັງພາຍໃນລຸ້ນຄົນ ແລະ ຈາກລຸ້ນນີ້ໄປຫາລຸ້ນອື່ນ.

## ມຸມມອງການວິເຄາະທີ່ເຈາະຈົງ ສາມາດຮັບປະກັນ ວ່າຮອດເຖິງໝົດທຸກຄົນ

ນັກວິຊາການດ້ານການພັດທະນາ ເຫັນດ້ວຍ ໃນຫຼັກການທີ່ວ່າ ການເອື້ອອຳນວຍໝົດທຸກຄົນ ໃຫ້ໄດ້ປະໂຫຍດຈາກຄວາມກ້າວໜ້າໃນການພັດທະນາມະນຸດ ຕ້ອງການ ຂໍ້ມູນແຍກປະເພດ ກ່ຽວກັບ ຄຸນລັກສະນະ ດັ່ງເຊັ່ນພາກພື້ນ, ເພດ (ບົດບາດຍິງ-ຊາຍ), ທີ່ຕັ້ງຊົນນະບົດ-ຕົວເມືອງ, ສະຖານະພາບດ້ານເສດຖະກິດ-ສັງຄົມ, ເຊື້ອຊາດ ແລະ ຊົນເຜົ່າ. ແຕ່ມັນຍັງບໍ່ແຈ່ມແຈ້ງປານໃດ ກ່ຽວກັບການຮັບປະກັນ ການມີພ້ອມຂອງຂໍ້ມູນດັ່ງກ່າວ. ການກຳນົດເສັ້ນແບ່ງຂອງ ການແຍກປະເພດໃດແດ່ທີ່ຈຳເປັນ ເພື່ອຊີ້ບອກ ເຖິງຄວາມບໍ່ສະເໝີພາບ ຂອງຂໍ້ມູນ ໃນມິຕິສະເພາະເຈາະຈົງ ສາມາດເປັນສິ່ງຫຍຸ້ງຍາກ ຖ້າປາດສະຈາກການມີຢູ່ແລ້ວ ໃນຄວາມເຂົ້າໃຈບາງຢ່າງ ໃນຂະບວນການກີດກັ້ນ ແລະ ການເຮັດໃຫ້ດ້ອຍໂອກາດຂອງສັງຄົມ. ອີກຢ່າງ

ຄວາມລະອຽດອ່ອນທາງການເມືອງ, ສັງຄົມ ແລະ ວັດທະນະທຳ ສາມາດສົ່ງເສີມ ການກີດກັ້ນ ແລະ ການຕັດທອນສິດ (ຫລື ການຖືກປະຖິ້ມ).

ການແຍກປະເພດຂໍ້ມູນ ອີງຕາມເພດ ແມ່ນສິ່ງສຳຄັນ ສຳລັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ. ສິ່ງນີ້ ແມ່ນເຫດຜົນທ່ອງແທ້ ວ່າຍ້ອນຫຍັງ ວາລະ 2030, ໂດຍສະເພາະເປົ້າໝາຍການພັດທະນາແບບຍືນຍົງ ທີ່ 5 ກ່ຽວກັບການບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງທຸກຄົນ, ເລັງໃສ່ຄາດໝາຍ ທີ່ອຳນວຍຄວາມສະດວກການແຍກປະເພດຂໍ້ມູນອີງຕາມເພດ.

ເຖິງແມ່ນວ່າ ເສລີພາບຂອງຕົວແທນ ຈະແມ່ນສ່ວນທີ່ສຳຄັນ ຂອງການພັດທະນາມະນຸດ, ແນວທາງການພັດທະນາມະນຸດຕາມແບບແຜນດັ້ງເດີມ ແມ່ນເລັງໃສ່ຊີວິດການເປັນຢູ່ທີ່ດີ ຫຼາຍກວ່າ ກ່ຽວກັບການເປັນຕົວແທນ. ຕົວຢ່າງ ດັດຊະນີການພັດທະນາມະນຸດ (HDI) ແມ່ນສັກຂີພະຍານໜຶ່ງ. ແຕ່ການເປັນຕົວແທນ ໂດຍທຳມະຊາດ ແມ່ນຫຍຸ້ງຍາກ ທີ່ຈະວັດແທກຫຼາຍກວ່າຊີວິດການເປັນຢູ່ທີ່ດີ.

## ການພັດທະນາແບບຍືນຍົງ ແມ່ນປະເດັນໜຶ່ງຂອງຄວາມຍຸຕິທຳທາງສັງຄົມ

ສາຍສຳພັນ ລະຫວ່າງເສລີພາບຂອງຊີວິດການເປັນຢູ່ທີ່ດີ ແລະ ເສລີພາບຂອງຕົວແທນ ໂດຍທົ່ວໄປ ເປັນທາງບວກ. ສິ່ງດັ່ງກ່າວນີ້ ສະໜັບສະໜູນທັດສະນະທີ່ວ່າ ສອງລັກສະນະຂອງການພັດທະນາມະນຸດ, ຖ້າຫາກບໍ່ສຳພັນກັນຢ່າງສົມບູນແບບ , ແມ່ນຕື່ມເຕັມກັນ. ເວົ້າອີກຢ່າງ, ສັງຄົມອາດໄດ້ບັນລຸລະດັບສູງໂດຍສະເລ່ຍຂອງຂີດຄວາມສາມາດ ຫຼື ຊີວິດການເປັນຢູ່ທີ່ດີ ໂດຍປາດສະຈາກການບັນລຸການເປັນຕົວແທນ (ໃນສິດທິການອອກຄຳຄິດເຫັນ ແລະ ຄວາມເປັນເອກະລາດ).

ການວັດແທກອື່ນໆຂອງຊີວິດການເປັນຢູ່ທີ່ດີຂອງມະນຸດ, ດັ່ງເຊັ່ນດັດຊະນີຄວາມກ້າວໜ້າທາງສັງຄົມ [22]. ດັດຊະນີຄວາມ ສຸກຂອງໂລກ [23] ແລະ ດັດຊະນີຊີວິດທີ່ດີກວ່າ [24], ສາມາດປະເມີນຢ່າງເປັນປະໂຫຍດ ວ່າຊີວິດການເປັນຢູ່ທີ່ດີ ແມ່ນຮອດເຖິງທຸກຄົນ. ຢູ່ໃນບາງປະເທດ ຍັງສະໜັບສະໜູນ ມາດຕະການອັດຕະວິໄສ (ນາມມະທຳ) ຂອງຊີວິດການເປັນຢູ່ທີ່ດີ ຫຼື ຄວາມສຸກ (ຫລື ຄວາມຜາສຸກ), ດັ່ງເຊັ່ນ ດັດຊະນີຄວາມສຸກລວມແຫ່ງຊາດ ຢູ່ປະເທດພູຖານ [25].

ການພັດທະນາມະນຸດ ສຳລັບໝົດທຸກຄົນ ຍັງຮຽກຮ້ອງ ການລວບລວມ ແລະ ນຳສະເໜີ ຂໍ້ມູນພາຍໃຕ້ມຸມມອງແນວໃໝ່, ດັ່ງເຊັ່ນຂໍ້ມູນໃນເວລາຕົວຈິງ ແລະ ແຜງອຸປະກອນການຕິດຕາມ. ແນວທາງອຸປະກອນການຕິດຕາມ, ຕາຕະລາງໃສ່ລະຫັດສີຕ່າງໆ, ສາມາດບົ່ງບອກລະດັບ ແລະ ຄວາມຄືບໜ້າ ຂອງຕົວຊີ້ບອ ກການພັດທະນາຕ່າງໆ. ດັ່ງນັ້ນ, ມັນສາມາດມີປະສິດທິຜົນ ໃນການປະເມີນຊີວິດການເປັນຢູ່ທີ່ດີ ຂອງມະນຸດ. ມັນຍັງ ບົ່ງບອກຂະບວນການ ແບບທົ່ວເຖິງນຳເອົາຄົນທີ່ຫຼາຍ ຂຶ້ນເຂົ້າມາຮ່ວມ ເພື່ອສ້າງ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ໂດຍນຳໃຊ້ເຕັກໂນໂລຊີສະໄໝໃໝ່.

ໃນປີ 2013 ຄະນະກຳມະການລະດັບສູງ ວ່າດ້ວຍການພັດທະນາແບບຍືນຍົງ ແຕ່ງຕັ້ງໂດຍ ເລຂາທິການໃຫຍ່ ອົງການສະ ຫະປະຊາຊາດ ຮຽກຮ້ອງ ໃຫ້ມີການປະຕິວັດແຫ່ງລະບົບຂໍ້ມູນ ສຳລັບການພັດທະນາແບບຍືນຍົງ, ດ້ວຍແນວຄິດລິເລີ່ມສາກົນອັນໃໝ່ ເພື່ອປັບປຸງຄຸນນະພາບ ຂອງຂໍ້ມູນຂ່າວສານ ແລະ ສະຖິຕິ ທີ່ມີຢູ່ ໃຫ້ແກ່ພົນລະເມືອງ [26]. ຂໍ້ມູນຂະໜາດໃຫຍ່ ໝາຍເຖິງຂໍ້ມູນຂະໜາດມະຫາສານ - ແບບເປັນໂຄງສ້າງ ແລະ ແບບບໍ່ເປັນໂຄງສ້າງ - ທີ່ອົງການຈັດຕັ້ງຕ່າງໆ ເກັບກຳໂດຍນຳໃຊ້ເຕັກໂນໂລຊີໃໝ່ ແລະ ສາມາດນຳມາເຊື່ອງທັດສະນະອັນໃໝ່ ເພີ່ມໃສ່ຂໍ້ມູນແບບດັ່ງເດີມ ແລະ ສະຖິຕິ.

ຮູບທີ 5

**ນະໂຍບາຍແຫ່ງຊາດເພື່ອເອົາໃຈໃສ່ສຳລັບບັນດາຄົນທີ່ຖືກປະຖິ້ມ - ນະໂຍບາຍສີ່ງ່າມ**




## ທາງເລືອກທີ່ເປັນນະໂຍບາຍຕົ້ນຕໍ

ແນວທາງນະໂຍບາຍແຫ່ງຊາດແບບສີ່ງ່າມ (ຫລືສີ່ດ້ານ) ສາມາດຮັບປະກັນວ່າ ການພັດທະນາມະນຸດ ຮອດເຖິງໝົດທຸກຄົນ (ຮູບທີ 5). ລຳດັບທຳອິດ ນະໂຍບາຍເພື່ອໝົດທຸກຄົນ ແມ່ນສິ່ງທີ່ຕ້ອງການເພື່ອຮອດເຖິງ ກຸ່ມຄົນທີ່ຖືກປະຖິ້ມ, ແຕ່ໃນພາກປະ ຕິບັດ ຫຼັກການທັນເປັນສາກົນ ໃນນະໂຍບາຍ ແມ່ນສິ່ງທ້າທາຍ. ຍົກຕົວຢ່າງ, ປະເທດໜຶ່ງ ອາດຈະໃຫ້ຄຳໝັ້ນສັນ ຍາຕໍ່ການຮັກສາສຸຂະພາບ ເພື່ອໝົດທຸກຄົນ, ແຕ່ພູມສັນຖານທີ່ກັນດານ ອາດເປັນອຸປະສັກ ໃນການສ້າງຕັ້ງ ສູນຮັກສາສຸ ຂະພາບ

ທີ່ເຂົ້າເຖິງໄດ້ ໂດຍທ້ອງຖິ່ນທັງໝົດ ຢູ່ໃນບໍລິເວນນັ້ນ. ສະນັ້ນ, ນະໂຍບາຍການພັດທະນາມະນຸດສໍາລັບໝົດທຸກຄົນ ຕ້ອງການ ໃຫ້ປັບທິດທາງ ເພື່ອແທດເຖິງກຸ່ມຄົນທີ່ຖືກປະຖິ້ມ.

ງ່າມທີ່ສອງ ແມ່ນແຕ່ ຈະມີຈຸດເລັງອັນໃໝ່ ຕໍ່ນະໂຍບາຍສໍາຄັນສໍາລັບໝົດທຸກຄົນ, ບາງກຸ່ມຄົນ ມີຄວາມຕ້ອງການເປັນພິເສດ ທີ່ບໍ່ສາມາດບັນລຸໄດ້. ສະຖານະການຂອງເຂົາເຈົ້າ ຕ້ອງການ ມາດຕະການສະເພາະ ແລະ ຄວາມເອົາໃຈໃສ່. ຍົກຕົວຢ່າງ, ຄົນພິການ ຕ້ອງການມາດຕະການ ເພື່ອຮັບປະກັນ ການເຄື່ອນທີ່ໄປມາ, ການມີສ່ວນ ແລະ ກາລະໂອກາດມີວຽກເຮັດງານທໍາ ຂອງເຂົາເຈົ້າ.

ງ່າມທີສາມ, ການພັດທະນາມະນຸດ ທີ່ບັນລຸໄດ້ ບໍ່ໄດ້ໝາຍຄວາມວ່າ ການພັດທະນາມະນຸດ ຈະຍືນຍົງ. ຄວາມກ້າວໜ້າໃນການພັດທະນາມະນຸດ ອາດຈະຊ້າລົງ ຫຼື ແມ່ນແຕ່ຖອຍກັບຫຼັງ ຍ້ອນສາເຫດຂອງການກະທົບທີ່ຮຸນແຮງ ແລະ ສະພາບຄວາມສ່ຽງ, ໂດຍມີ ຜົນສະທ້ອນ ສ□າລັບປະຊາກອນ ຊຶ່ງບັນລຸໄດ້ແຕ່ພຽງຂັ້ນພື້ນຖານ ຂອງການພັດທະນາມະນຸດ ແລະ ສໍາລັບປະຊາກອນ ຊຶ່ງຍັງບໍ່ທັນໄດ້ບັນລຸ ແມ່ນແຕ່ຂັ້ນພື້ນຖານ. ສະນັ້ນ ການພັດທະນາມະນຸດຈະຕ້ອງໄດ້ເປັນແບບປັບໂຕເຂົ້າກັບສະພາບການ (ຫລື ຍືດຢຸ່ນ) (ຫຼື ຟື້ນຄືນສະພາບໄດ້ໄວ).

ງ່າມທີ່ສີ່, ປະຊາກອນ ກຸ່ມທີ່ຖືກປະຖິ້ມ ຈະໄດ້ຮັບການສ້າງໃຫ້ເຂັ້ມແຂງ ເພື່ອວ່າຖ້າຫາກ ນະໂຍບາຍ ແລະ ຜູ້ມີບົດບາດທີ່ກ່ຽວຂ້ອງ ຫຼົ້ມເຫຼວ ທີ່ຈະສະໜອງໄດ້, ປະຊາກອນເຫຼົ່ານີ້ ສາມາດໃຊ້ສິດການອອກສຽງໃຫ້ຜູ້ກ່ຽວຂ້ອງໄດ້ຍິນ, ຮຽກຮ້ອງເອົາສິດທິຂອງເຂົາເຈົ້າ ແລະ ສະແຫວງຫາກົນໄກການຊົດເຊີຍສະຖານະການ.

ຢູ່ໃນຍຸກແຫ່ງໂລກາພິວັດ ນະໂຍບາຍແຫ່ງຊາດ ສໍາລັບການພັດທະນາມະນຸດທີ່ເປັນສາກົນ ຈະຕ້ອງຖືກຕື່ມເຕັມ ແລະ ເສີມຕື່ມ ໂດຍລະບົບລະດັບໂລກ ທີ່ສະເໝີພາບ ແລະ ທີ່ເຮັດໃຫ້ ການພັດທະນາມະນຸດ ມີຄຸນຄ່າຫຼາຍຂຶ້ນ.

## ແທດເຖິງບັນດາກຸ່ມຄົນທີ່ຖືກປະຖິ້ມໂດຍການນໍາໃຊ້ນະໂຍບາຍທີ່ເປັນສາກົນ

ການຫັນທິດທີ່ແທດເໝາະຂອງນະໂຍບາຍທີ່ເປັນສາກົນ ສາມາດເຮັດໃຫ້ສິ່ງທີ່ຂາດແຄນລົງ ໃນການພັດທະນາມະນຸດໃນບັນດາກຸ່ມຄົນທີ່ຖືກປະຖິ້ມ. ສິ່ງສໍາຄັນດັ່ງກ່າວນີ້ ແມ່ນການເຮັດໃຫ້ ລຸລ່ວງການເຕີບໂຕແບບທົ່ວເຖິງ, ເສີມສ້າງຄວາມເຂັ້ມແຂງ ກາລະໂອກາດ ສໍາລັບແມ່ຍິງ, ແກ້ໄຂ ວົງຈອນຊີວິດ ຂີດຄວາມສາມາດ ແລະ ການລະດົມຊັບພະຍາກອນ ສໍາລັບບູລິມະສິດໃນການພັດທະນາມະນຸດ.

### ສືບຕໍ່ເຮັດໃຫ້ລຸລ່ວງການພັດທະນາແບບທົ່ວເຖິງ

ເພື່ອທີ່ການພັດທະນາມະນຸດ ແທດເຖິງທຸກຖ້ວນໜ້າ, ການເຕີບໂຕ ຈະຕ້ອງເປັນແບບທົ່ວເຖິງ ແລະ ຕັ້ງຢູ່ບົນ ສີ່ເສົາຫຼັກ ທີ່ຄໍ້າໜູນເຊິ່ງກັນ ແລະ ກັນ - ການກໍານົດ ຍຸດທະສາດການເຕີບໂຕ ທີ່ຂັບເຄື່ອນ ດ້ວຍການສ້າງວຽກເຮັດງານທໍາ, ການເສີມສ້າງຄວາມເຂັ້ມແຂງ ດ້ານການເງິນແບບມີສ່ວນ, ການລົງທຶນ ໃສ່ບູລິມະສິດການພັດທະນາມະນຸດ ແລະ ດໍາເນີນການເຂົ້າແກ້ໄຂ ແບບຫຼາຍມິຕິ ທີ່ສ້າງຜົນກະທົບສູງ (ຍຸດທະສາດ ທີ່ຊະນະທັງສອງຝ່າຍ).

ຍຸດທະສາດການເຕີບໂຕ ທີ່ນໍາໜ້າດ້ວຍ ການສ້າງວຽກເຮັດງານທໍາ ຈະເລັງໃສ່ມາດຕະການ ດັ່ງເຊັ່ນ ການທັບມ້າງອຸປະສັກຕໍ່ການພັດທະນາ ທີ່ຖືເອົາວຽກເຮັດງານທໍາເປັນໃຈກາງ, ການອອກແບບ ແລະ ຈັດຕັ້ງປະຕິບັດ ຂອບແຜນງານດ້ານລະບຽບການທີ່ອຸປະຖໍາ ເພື່ອຈັດການແກ້ບັນຫາວຽກງານທີ່ບໍ່ເປັນທາງການ, ສ້າງຄວາມເຂັ້ມແຂງການເຊື່ອມໂຍງ ລະຫວ່າງທຸລະກິດຂະໜາດໃຫຍ່ ແລະ ຂະໜາດກາງ ແລະ ນ້ອຍ, ໂດຍເລັງໃສ່ພວກທີ່ຜູ້ທຸກຍາກ ດໍາລົງຊີວິດ ແລະ ເຮັດວຽກງານ, ໂດຍ

ສະເພາະ ຢູ່ຂົງເຂດຊົນນະບົດ ແລະ ດັດປັບການກະຈາຍຂອງທຶນ ແລະ ແຮງງານໃນການໃຊ້ຈ່າຍຂອງພາກລັດ ເພື່ອສ້າງວຽກເຮັດງານທຳ.

## ເພື່ອວ່າການພັດທະນາມະນຸດແທດເຖິງທຸກຖ້ວນໜ້າ, ການເຕີບໂຕຈະຕ້ອງເປັນແບບທົ່ວເຖິງ

ມາດຕະການຫຼາຍ ຢ່າງສາມາດເສີມສ້າງຄວາມເຂັ້ມແຂງ ທາງການເງິນແບບທົ່ວເຖິງ ຂອງປະຊາກອນທີ່ທຸກຍາກ, ດັ່ງເຊັ່ນ ການຂະຫຍາຍ ກວ້າງອອກ ການບໍລິການ ຂອງທະນາຄານ ຕໍ່ກຸ່ມຄົນທີ່ດ້ອຍໂອກາດ ແລະ ກຸ່ມສ່ຽງ, ໂດຍອາໄສ ຂະບວນການທີ່ກະທັດຮັດ ແລະ ໃຊ້ປະໂຫຍດ ຈາກເຕັກໂນໂລຊີສະໄໝໃໝ່ ເພື່ອສົ່ງເສີມການເງິນແບບມີສ່ວນຮ່ວມ. ຢູ່ພາກພື້ນລຸ່ມທະເລຊາຍສະຮາຣາ ຂອງທະວີບແອຟຣິກາ 12 ສ່ວນຮ້ອຍ ຂອງຄົນໄວອອກແຮງງານ ມີບັນຊີຢູ່ທະນາຄານເຄື່ອນທີ່, ທຽບກັບ 2 ສ່ວນຮ້ອຍໃນທົ່ວໂລກ. [27]

ການລົງທຶນ ທີ່ເລັ່ງໃສ່ບູລິມະສິດ ການພັດທະນາມະນຸດ ສາມາດສະໜອງການບໍລິການລາຄາຖືກ ແຕ່ມີຄຸນນະພາບສູງ ແລະ ໂຄງລ່າງພື້ນຖານ ໃຫ້ແກ່ກຸ່ມຄົນຜູ້ດ້ອຍໂອກາດ ແລະ ກຸ່ມສ່ຽງ.

ການເຂົ້າເຖິງທີ່ມີປະສິດທິຜົນ ຂອງການບໍລິການ ໂດຍປະຊາກອນທີ່ທຸກຍາກ ຕ້ອງການຄ່າໃຊ້ຈ່າຍທີ່ບໍ່ແພງ ແລະ ການດັດ ປັບ ໃນວິທີປະຕິບັດ ທາງວັດທະນະທຳ. ຢູ່ປະເທດນິກາຣາກົວ, ເຄື່ອງກວດ ບົ່ງມະຕິດ້ວຍຄື້ນສຽງ ຄວາມຖີ່ສູງ ລາຄາຖືກ, ຊຶ່ງສາມາດເຄື່ອນຍ້າຍດ້ວຍລົດຖີບ, ອຳນວຍຄວາມສະດວກ ການຕິດຕາມສຸຂະພາບ ຂອງແມ່ຍິງທີ່ຖືພາ [28]. ການມີໜ້າຂອງ ທ່ານໝໍເພດຊາຍ ພຽງຄົນດຽວ ຢູ່ສູນຮັກສາສຸຂະພາບແມ່ ແລະ ເດັກ ໃນທ້ອງຖິ່ນ ອາດຈະເປັນອຸປະສັກ ສ້າງຄວາມບໍ່ຈູງໃຈ (ເປັນເຫດໃຫ້ທໍ້ໃຈ) ສຳລັບແມ່ຍິງ ແລະ ເດັກຍິງ ທີ່ຈະຊົມໃຊ້ການບໍລິການຂອງສູນ.

ການລົງທຶນ ການພັດທະນາມະນຸດທີ່ເປັນບູລິມະສິດ ບາງຢ່າງ ມີຜົນກະທົບທີ່ເລິກເຊິ່ງ ແລະ ຫຼາກຫຼາຍ. ໂຄງການອາຫານໂຮງຮຽນ, ຍົກຕົວຢ່າງ, ຊຶ່ງສະໜອງປະໂຫຍດຫຼາຍຢ່າງ: ການປົກປ້ອງທາງສັງຄົມ ໂດຍການຊ່ວຍເຫຼືອຄອບຄົວ ສົ່ງສອນລູກຂອງເຂົາເຈົ້າ ແລະ ປົກປ້ອງ ການຄໍ້າປະກັນສະບຽງອາຫານ ລູກຂອງເຂົາເຈົ້າ ໃນຍາມວິກິດ; ໂພຊະນາການ, ເພາະວ່າຢູ່ໃນປະເທດທຸກຍາກ, ອາຫານໂຮງຮຽນ ເປັນພຽງແຕ່ ຄາບອາຫານຕາມປົກກະຕິ ແລະ ທີ່ມີໂພຊະນາການ ເທົ່ານັ້ນ ແລະ ເປັນສິ່ງຈູງໃຈ ອັນແຮງກ້າ ທີ່ສົ່ງເດັກນ້ອຍ ໄປໂຮງຮຽນ ແລະ ເຂົ້າຮຽນໜັງສື ຢູ່ໂຮງຮຽນ. ຫຼັກຖານ ທີ່ມາຈາກ ປະເທດບອດສະວານາ, ກາບູ ເວີດີ, ກົດດີວົວເອີ, ການາ, ເຄັນຢາ, ມາລີ, ນາມີເບຍ, ໄນຈີເຣຍ ແລະ ອາຟຣິກາໃຕ້ ເປັນຫຼັກຖານຕໍ່ໜ້າປະໂຫຍດດັ່ງກ່າວນີ້ [29].

ໂຄງລ່າງພື້ນຖານຊົນນະບົດ, ໂດຍສະເພາະ ເສັ້ນທາງ ແລະ ໄຟຟ້າ, ແມ່ນຂົງເຂດໜຶ່ງ. ການສ້າງເສັ້ນທາງຊົນນະບົດຫຼຸດຜ່ອນຄ່າຂົນສົ່ງ, ເຊື່ອມຈອດຊາວກະສິກຳຊົນນະບົດກັບຕະຫຼາດ, ອຳນວຍໃຫ້ຜູ້ອອກແຮງງານ (ຊາວກຳມະກອນ) ເຄື່ອນທີ່ໂດຍສະດວກຫຼາຍຂຶ້ນ ແລະ ສົ່ງເສີມການເຂົ້າເຖິງໂຮງຮຽນ ແລະ ສະຖານທີ່ຮັກສາສຸຂະພາບ. ການຕິດຕັ້ງ ຕາຄ່າຍໄຟຟ້າຢູ່ຊຸມຊົນຊົນນະບົດ ຢູ່ປະເທດກວາເຕມາລາ ແລະ ປະເທດອາຟຣິກາໃຕ້ ໄດ້ຊ່ວຍເພີ່ມທະວີການຈ້າງງານໃນບັນດາກຸ່ມສ່ຽງ [30].

ການປັບປຸງຄືນໃໝ່ ການກະຈາຍຊັບສິນ ຍັງສາມາດ ນຳເອົາ ບັນດາກຸ່ມຄົນ ທີ່ຖືກປະຖິ້ມ ເຂົ້າມາສູ່ ຂະບວນການເຕີບໂຕ. ທຶນຮອນມະນຸດ ແມ່ນຊັບສິນອັນໜຶ່ງ ແລະ ຄວາມແຕກຕ່າງ ໃນການບັນລຸຜົນສຳເລັດ ດ້ານການສຶກສາ ຂັດຂວາງ ຜູ້ທຸກຍາກຈາກການກາຍມາເປັນສ່ວນ ຂອງຂະບວນການເຕີບໂຕທາງຜະລິດຕະພາບທີ່ສູງ. ການເຮັດໃຫ້ ການສຶກສາເປັນປະ ຊາທິປະໄຕ ໂດຍສະເພາະ ການສຶກສາຊັ້ນສູງ, ຈະໃຫ້ປະໂຫຍດຕໍ່ປະຊາກອນ ທີ່ມີພູມຫຼັງ ທີ່ທຸກຍາກກວ່າ.

ໃນທຳນອງດຽວກັນ, ການເຮັດສິ່ງຂອງ ຢູ່ໃນທ້ອງຖິ່ນ ອາດນຳມາ ຊຶ່ງຜົນກະທົບຫຼາຍຢ່າງ ຕໍ່ການພັດທະນາ. ການສະໜອງຄວາມເປັນເອກະລາດ ໃຫ້ແກ່ອົງການປົກຄອງທ້ອງຖິ່ນ ໃນການກຳນົດ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາທ້ອງຖິ່ນ ອຳ ນວຍໃຫ້ ແຜນການ ຈະສະທ້ອນເຖິງ ຄວາມມຸ້ງມາດປາດຖະໜາ ຂອງຊຸມຊົນທ້ອງຖິ່ນ. ການແບ່ງຂັ້ນຄຸ້ມຄອງດ້ານງົບ

ປະ ມານ ຍັງສາມາດ ສ້າງຄວາມເຂັ້ມແຂງ ໃຫ້ແກ່ອົງການປົກຄອງທ້ອງຖິ່ນ ເພື່ອເກັບກຳລາຍຮັບຂອງເຂົາເຈົ້າເອງ ແລະ ເພິ່ງພາ ໜ້ອຍລົງ ຕໍ່ເງິນຊ່ວຍເຫຼືອ (ຫຼື ເກື້ອກູນ, ອຸດໜູນ) ຈາກລັດຖະບານຂັ້ນສູນກາງ. ແຕ່ຖ້າຫາກ ວ່າ (ຫຼື ໃນຂະນະດຽວກັນ) ແນວທາງທ້ອງຖິ່ນ ແນໃສ່ ຮັບປະກັນ ການພັດທະນາມະນຸດ ສຳລັບກຸ່ມຄົນທີ່ຖືກປະຖິ້ມ, ມັນຍັງ ຈະຮຽກຮ້ອງ ການມີສ່ວນຮ່ວມຂອງປະຊາກອນ ແລະ ຂີດຄວາມສາມາດ ຂອງອົງການປົກຄອງທ້ອງຖິ່ນທີ່ໃຫຍ່ຂຶ້ນ.

## ເສີມສ້າງກາລະໂອກາດສຳລັບແມ່ຍິງ

ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແມ່ນມິຕິຂັ້ນພື້ນຖານ ຂອງການພັດທະນາມະນຸດ. ເພາະວ່າເຄິ່ງໜຶ່ງ ຂອງມະນຸດໂລກ ບໍ່ໄດ້ຊົມໃຊ້ຄວາມກ້າວໜ້າໃນການພັດທະນາມະນຸດ, ການພັດທະນາເຊັ່ນນັ້ນບໍ່ເປັນສາກົນ.

ການລົງທຶນໃຫ້ແກ່ແມ່ຍິງ ແລະ ເດັກຍິງ ມີປະໂຫຍດໃນຫຼາຍມິຕິ - ຍົກຕົວຢ່າງ, ຖ້າຫາກ ເດັກຍິງທັງໝົດ ໃນປະເທດທີ່ກຳລັງພັດທະນາໄດ້ຮຽນຈົບຊັ້ນມັດທະຍົມສຶກສາ, ອັດຕາການຕາຍຂອງເດັກເກນອາຍຸຕໍ່າກວ່າ 5 ປີ ຈະຫຼຸດລົງເຄິ່ງໜຶ່ງ.[31] ແມ່ຍິງ ຍັງຮຽກຮ້ອງການສະໜັບສະໜູນ ເພື່ອສຳເລັດການສຶກສາທີ່ສູງກວ່າ ໂດຍສະເພາະ ໃນສາຍວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ຊຶ່ງຄວາມຕ້ອງການຈະຫຼາຍໃນອະນາຄົດ ສຳລັບ ວຽກເຮັດງານທຳລະດັບສູງ ທີ່ຈະເກີດຂຶ້ນ.

## ເພາະວ່າເຄິ່ງໜຶ່ງ ຂອງມະນຸດໂລກ ບໍ່ໄດ້ຊົມໃຊ້ຄວາມກ້າວໜ້າ ໃນການພັດທະນາມະນຸດ, ການພັດທະນາ ເຊັ່ນນັ້ນ ບໍ່ເປັນສາກົນ

ແມ່ຍິງ ຍັງຈະໄດ້ ສັບປ່ຽນໄປມາ ໃຫ້ເໝາະສົມ ການເຮັດວຽກທີ່ໄດ້ຄ່າຈ້າງຢູ່ນອກເຮືອນ ແລະ ການເຮັດວຽກດູແລພາຍໃນເຮືອນ ທີ່ບໍ່ມີຄ່າຈ້າງ ດັ່ງດຽວກັບ ດຸ່ນດ່ຽງບົດບາດ ການຜະລິດ ແລະ ການຈະເລີນພັນຂອງເຂົາເຈົ້າ. ການຈັດລຳດັບເວລາເຮັດວຽກທີ່ຍືດຍຸ່ນ ແລະ ທາງເລືອກ ການດູແລທີ່ຂະຫຍາຍກວ້າງອອກ, ລວມທັງ ສູນລ້ຽງເດັກກາງເວັນ, ແຜນງານຫຼັງຈາກເລີກຮຽນ, ເຮືອນດູແລຄົນສູງອາຍຸ ແລະ ສະຖານທີ່ອຳນວຍ ຄວາມສະດວກການດູແລ ໄລຍະຍາວ, ສາມາດຊ່ວຍແມ່ ຍິງຂະຫຍາຍກວ້າງຂຶ້ນ ຕົວເລືອກຂອງເຂົາເຈົ້າ .

ມາດຕະການທີ່ຊຸກຍູ້ການເປັນຜູ້ປະກອບການຂອງແມ່ຍິງ ປະກອບມີ ການສ້າງຕັ້ງຂອບແຜນງານນິຕິກຳ ທີ່ທັບມ້າງອຸປະສັກກີດຂວາງ ຕໍ່ແມ່ຍິງ ໃນການເປັນເຈົ້າກຳມະສິດທີ່ດິນ, ຊັບສິນທີ່ສຳຄັນ ໂດຍສະເພາະ ໃນການຜະລິດກະສິກຳ. ດັ່ງນັ້ນ ນະໂຍບາຍວ່າດ້ວຍທີ່ດິນ, ການອອກກົດໝາຍ ແລະ ການບໍລິການ ຕ້ອງການ ໃຫ້ປ່ຽນແປງ ເພື່ອປັບໃຫ້ເຂົ້າກັບແມ່ຍິງ - ແລະ ກົດລະບຽບອັນໃໝ່ ຈະຕ້ອງຖືກບັງຄັບໃຊ້.

ເພດານແກ້ວ, ເຖິງແມ່ນວ່າ ຈະແຕກແຫງ ຢູ່ຫຼາຍຈຸດ, ແມ່ນຍັງຫ່າງໄກຈາກການຖືກທຳລາຍ ໃຫ້ແຕກລະອຽດ. ຂໍ້ກຳນົດບົດບາດ ຍິງ-ຊາຍໃນການຄັດເລືອກ ແລະ ການສັນຫາ ແລະ ກົນໄກທີ່ເປັນສິ່ງຈູງໃຈ ສຳລັບການຮັກສາໄວ້ ສາມາດປັບປຸງໃຫ້ດີຂຶ້ນ ໃນການເປັນຕົວແທນຂອງແມ່ຍິງຢູ່ພາກລັດ ແລະ ເອກະຊົນ. ເກນກຳນົດສຳລັບການສົ່ງເສີມເພດຊາຍ ແລະ ແມ່ຍິງໃນຕຳແໜ່ງບໍລິຫານອາວຸໂສ ຄວນເປັນແບບດຽວກັນ, ໂດຍອີງໃສ່ຄວາມສະເໝີພາບ ໃນຄ່າແຮງ ສຳລັບວຽກງານທີ່ເທົ່າທຽມກັນ. ການໃຫ້ຄຳປຶກສາ, ການຝຶກສອນ ແລະ ການອຸປະຖຳ ສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ຢູ່ໃນສະຖານທີ່ເຮັດວຽກງານ ໂດຍການນຳໃຊ້ ຜູ້ຈັດການເພດຍິງອາວຸໂສ ທີ່ປະສົບຜົນສຳເລັດ ເປັນດັ່ງຕົວແບບ ແລະ ຜູ້ອຸປະຖຳ.

ເພື່ອຮັບປະກັນວ່າ ການພັດທະນາມະນຸດ ແທດເຖິງຈໍານວນຄົນທີ່ຖືກປະຖິ້ມ, ການສ້າງຂີດຄວາມສາມາດ ຄວນເປັນແບບຕະຫລອດຊົ່ວຊີວິດ ຕາມທີ່ປະຊາກອນປະເຊີນກັບຄວາມສ່ຽງຫຼາກຫຼາຍຊະນິດ ໃນຊ່ວງຕ່າງໆໃນຊີວິດຂອງເຂົາເຈົ້າ.

ການພັດທະນາມະນຸດທີ່ຍືນຍົງ ແມ່ນຈະແນ່ນອນຫຼາຍຂຶ້ນ ເມື່ອໃດທີ່ເດັກນ້ອຍທັງໝົດ ສາມາດໄດ້ມາຊຶ່ງທັກສະ ທີ່ເຂົ້າກັນກັບກາລະໂອກາດ ທີ່ເປີດກວ້າງອອກ ຕໍ່ຊາວໜຸ່ມໃນການເຂົ້າຮ່ວມເປັນກໍາລັງແຮງງານ. ການເອົາໃຈໃສ່ທີ່ຫຼວງຫຼາຍ ແມ່ນເລັງໃສ່ຢ່າງຖືກຕ້ອງ ຕໍ່ສິ່ງທີ່ຕ້ອງການ ເພື່ອຮັບປະກັນວ່າ ເດັກນ້ອຍທັງໝົດ ຢູ່ທຸກຫົນແຫ່ງ, ຮຽນຈົບຫຼັກສູດການສຶກສາຢ່າງຄົບຖ້ວນ ລວມທັງ ຊັ້ນກຽມປະຖົມ. ທະນາຄານໂລກ ພົບເຫັນວ່າ ເງິນແຕ່ລະໂດລາ ທີ່ໃຊ້ຈ່າຍໃນ ຊັ້ນກຽມປະຖົມສຶກສາຕອນເຍົາໄວ ສ້າງໄດ້ກໍາໄລແຕ່ 6 ຫາ 17 ໂດລາສະຫະລັດອາເມລິກາ ໃນປະໂຫຍດສາທາລະນະ; ໃນຮູບແບບຂອງກໍາລັງແຮງງານທີ່ມີສຸຂະພາບດີກວ່າ ແລະ ຜະລິດຕະພາບຫຼາຍຂຶ້ນ.[32] ປັດຈຸບັນ ຢູ່ປະເທດການາ ມີການບັນຈຸຕື່ມອີກສອງປີ ໃນຊັ້ນກຽມປະຖົມ ຂອງລະບົບການສຶກສາ. ປະເທດຈີນ ກໍາລັງພິຈາລະນາ ການສະໜອງ ສິ່ງອໍານວຍຄວາມສະດວກຊັ້ນກຽມປະຖົມສໍາລັບເດັກນ້ອຍໝົດທຸກຄົນ.[33]

ການສ້າງຄວາມເຂັ້ມແຂງໃຫ້ແກ່ຄົນໜຸ່ມ ກໍານົດໃຫ້ມີບາດກ້າວ ທັງດ້ານການເມືອງ ແລະ ເສດຖະກິດ. ໃນດ້ານການເມືອງຢ່າງໜ້ອຍ 30 ປະເທດ ໄດ້ມີບາງລັກສະນະ ຂອງໂຄງສ້າງແບບສະພາ ສໍາລັບຄົນທີ່ຍັງບໍ່ເຖິງກະສຽນ, ໃນທ້ອງປະເທດ ຫຼື ໃນເມືອງໃຫຍ່, ບ້ານ ຫຼື ໂຮງຮຽນ.[34]. ດັ່ງນັ້ນ ຄໍາຄິດເຫັນຂອງຄົນໜຸ່ມ ໃນຮູບແບບທີ່ຫຼາກຫຼາຍ ຂອງການມີສ່ວນຮ່ວມ - ໃນບົດບາດ ໃຫ້ຄໍາປຶກສາທີ່ອຸປະຖໍາ ໂດຍລັດຖະບານ, ສະພາ ແລະ ໂຕະມົນແລກປ່ຽນຄໍາເຫັນຂອງຊາວໜຸ່ມ - ຖືກເຊື່ອມສານເຂົ້າໃນການກໍານົດນະໂຍບາຍ.

ໃນດ້ານເສດຖະກິດ ການສ້າງກາລະໂອກາດອັນໃໝ່ ສໍາລັບຄົນໜຸ່ມ ແລະ ກຽມຄວາມພ້ອມຂອງຄົນໜຸ່ມດ້ວຍທັກສະທີ່ເຂົາເຈົ້າຕ້ອງການ ເພື່ອກໍາເອົາປະໂຫຍດ ຂອງກາລະໂອກາດ ແມ່ນສິ່ງຈໍາເປັນ. ທັກສະທີ່ສໍາຄັນຫຼາຍກວ່າໜຶ່ງ ສ່ວນສາມຂອງເສດຖະກິດໃນທຸກວັນນີ້ ຈະໄດ້ປ່ຽນແປງ ພາຍໃນປີ 2020 [35] ການໄດ້ມາຂອງທັກສະ ສ□າລັບສັດຕະຫວັດ ທີ່ 21 ຈະເປັນສ່ວນ ຂອງການຮຽນຮູ້ຕະຫຼອດຊົ່ວຊີວິດ ຂອງ ສີ່ອັກສອນຫຍໍ້ ຕົວ C ຂອງພາສາອັງກິດ: ການຄິດວິເຄາະ, ການສ້າງຄວາມຮ່ວມມື, ການປະດິດສ້າງ ແລະ ການສື່ສານ (ຮູບທີ 6).

ສໍາລັບຄົນສູງອາຍຸ ແລະ ຄົນພິການ, ມາດຕະການສໍາຄັນ ປະກອບດ້ວຍ ການສ້າງຕັ້ງ ການສະໜອງບໍລິການ ຜູ້ສູງອາຍຸແບບປະສົບກັນລະຫວ່າງລັດ ແລະ ເອກະຊົນ, ເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ການປົກປ້ອງທາງສັງຄົມ ສໍາລັບຄົນສູງອາຍຸຜ່ານທາງບໍານານທາງສັງຄົມຂັ້ນພື້ນຖານແບບບໍ່ໄດ້ອອກເງິນສົມທົບ (ດັ່ງເຊັ່ນຢູ່ປະເທດບຣາຊິນ).[36] ແລະ ການສ້າງຕັ້ງກາລະໂອກາດສໍາລັບຄົນສູງອາຍຸໃຫ້ໄດ້ເຮັດວຽກງານ ຢູ່ບ່ອນທີ່ເຂົາເຈົ້າສາມາດປະກອບສ່ວນ, ລວມທັງ ການສັ່ງສອນເດັກນ້ອຍ, ວຽກງານການດູແລ ແລະ ວຽກງານອາສາສະໝັກ.

ຮູບທີ 6

**ທັກສະ (ຫຼື ຄວາມສາມາດ) ທີ່ຕ້ອງການສຳລັບສັດຕະຫວັດທີ 21**




Source: Human Development Report Office.

## ການລະດົມຊັບພະຍາກອນ ສຳລັບບູລິມະສິດການພັດທະນາມະນຸດ

ທາງເລືອກສຳລັບການລະດົມຊັບພະຍາກອນ ສຳລັບບູລິມະສິດການພັດທະນາມະນຸດ ມີຂອບເຂດນັບຈາກການສ້າງພື້ນທີ່ດ້ານການເງິນ ຈົນເຖິງການນຳໃຊ້ການສະໜອງທຶນດ້ານພູມິອາກາດ ແລະ ຈາກການຕັດເງິນອຸດໜູນ (ຫລື ເງິນເກື້ອກູນ) ທີ່ບໍ່ສ້າງປະໂຫຍດໃຫ້ແກ່ຜູ້ທຸກຍາກ ຈົນເຖິງການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ. ພື້ນທີ່ດ້ານການເງິນມີ ສີ່ເສົາຫຼັກ: ການຊ່ວຍເຫຼືອເປັນທາງການເພື່ອການພັດທະນາ, ລາຍຮັບພາຍໃນປະເທດ, (ງົບການເງິນ) ການສະໜອງທຶນແບບຂາດດຸນ (ຜ່ານທາງ ການກູ້ຢືມຈາກແຫລ່ງພາຍໃນ ແລະ ຕ່າງປະເທດ) ແລະ ຄວາມແຕກຕ່າງໃນລະດັບບູລິມະສິດຂອງລາຍຈ່າຍ ແລະ ປະສິດທິຜົນ.

ການເລືອກເອົາເສົາຫຼັກທີ່ຈະນຳໃຊ້ ເພື່ອເພີ່ມທະວີ ຫຼື ສ້າງຄືນໃໝ່ ພື້ນທີ່ທາງການເງິນ ຂຶ້ນກັບຄຸນລັກສະນະຂອງປະເທດເປັນສ່ວນໃຫຍ່. ໃນປີ 2009 ປະເທດການາ ໄດ້ພິຈາລະນາການປັບປຸງການຈັດເກັບລາຍຮັບ ເພື່ອເພີ່ມທະວີງົບປະມານສາທາລະນະສຸກ, ເຖິງແມ່ນວ່າສັດສ່ວນຂອງງົບປະມານທັງໝົດຂອງລັດຖະບານ ທີ່ຈັດສັນໃຫ້ຂະແໜງສາທາລະນະສຸກແມ່ນບໍ່ປ່ຽນແປງ.[37]

ການລວມເຂົ້າກັນ ແລະ ປັບປຸງ ໃຫ້ມີປະສິດທິພາບຂຶ້ນ ການສົ່ງເງິນ ສາມາດເປັນແຫຼ່ງສະໜອງທຶນ ສຳລັບບູລິມະສິດການພັດທະນາມະນຸດ. ທະນາຄານສຳລັບການສົ່ງເງິນ ສາມາດສ້າງຕັ້ງຂຶ້ນຢູ່ບັນດາປະເທດ ຊຶ່ງກະແສການໂອນເງິນມີຂະໜາດໃຫຍ່ ດັ່ງເຊັ່ນ ປະເທດບັງຄລາເທັດ, ຈໍແດນ ແລະ ຟີລິບປິນ. ກົນໄກການສົ່ງເງິນ ຖືກກົດໝາຍ ທີ່ສະດວກ ແລະ ໂປ່ງໃສ ສາມາດຈັດໃຫ້ມີ ໂດຍການປຶກສາຫາລື ນຳປະເທດເຈົ້າບ້ານ.

ຢູ່ໃນຫຼາຍປະເທດພັດທະນາລ້າຊ້າ (ຫຼື ດ້ອຍພັດທະນາ), ບ່ອນທີ່ອັດຕາການປ່ອຍທາດອາຍພິດ ຍັງຕໍ່າຢູ່, ການສະໜອງທຶນພູມິອາກາດ ສາມາດຂະຫຍາຍກວ້າງ ວິຖີຊີວິດທີ່ສາມາດປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ, ປັບປຸງລະບົບນໍ້າ ແລະ ສຸຂະອະນາໄມ ແລະ ຮັບປະກັນການຄໍ້າປະກັນສະບຽງອາຫານ. ການລົງທຶນເຫຼົ່ານີ້ ມີຂອບເຂດເກີນກວ່າ ແຜນງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຄວາມໝາຍທີ່ແຄບ ແລະ ເລັ່ງໃສ່ຫຼາຍຂຶ້ນ ການບັນລຸ ການພັດທະນາມະນຸດ ໂດຍການເພີ່ມທະວີ ຄວາມສາມາດປັບຕົວເຂົ້າກັບພູມິອາກາດ ໃນໄລຍະຍາວຂອງເສດຖະກິດ ແລະ ສັງຄົມ.

ທາງເລືອກສໍາລັບການລະດົມຊັບພະຍາກອນ ສໍາລັບບູລິມະສິດການພັດທະນາມະນຸດ ມີຂອບເຂດນັບຈາກການສ້າງພື້ນທີ່ດ້ານການເງິນ ຈົນເຖິງການນໍາໃຊ້ ການສະໜອງທຶນ ດ້ານພູມີອາກາດ, ແລະ ຈາກການຕັດເງິນອຸດໜູນ (ຫລື ເງິນເກື້ອກູນ) ທີ່ບໍ່ສ້າງປະໂຫຍດ ໃຫ້ແກ່ຜູ້ທຸກຍາກ ຈົນເຖິງການນໍາໃຊ້ຊັບພະຍາກອນ ຢ່າງມີປະສິດທິພາບ

ການຍົກເລີກ (ຫລື ການຢຸດຕິ) ການອຸດໜູນເຊື້ອໄຟຊາກດຶກດໍາບັນ ສາມາດປົດປ່ອຍ ຊັບພະຍາກອນ ສໍາລັບການພັດທະນາມະນຸດ. ອີກດ້ານປະສິດທິພາບ ໃນການນໍາໃຊ້ຊັບພະຍາກອນ ມີຄ່າເທົ່າກັບການສ້າງຊັບພະຍາກອນເພີ່ມເຕີມ. ຍົກຕົວຢ່າງ ການແພດທາງໄກ ສາມາດສະໜອງຄໍາແນະນໍາທາງການແພດ ແລະ ທາງເລືອກ ໃນການປິ່ນປົວໃຫ້ແກ່ຄົນປ່ວຍໂດຍ ບໍ່ມີຂໍ້ຈໍາກັດວ່າເຂົາເຈົ້າຈະຢູ່ແຫ່ງຫົນໃດ - ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍໃນການໃຫ້ບໍລິການ.

## ສືບຕໍ່ດໍາເນີນ ມາດຕະການ ສໍາລັບກຸ່ມຄົນ ທີ່ມີຄວາມຕ້ອງການເປັນພິເສດ

ຍ້ອນເຫດຜົນທີ່ວ່າ ບາງກຸ່ມຄົນໃນສັງຄົມ (ຊົນເຜົ່າສ່ວນນ້ອຍ, ຄົນພື້ນເມືອງ, ຄົນພິການ) ຖືກຈໍາແນກຢ່າງເປັນລະບົບ ແລະ ດ້ອຍເຫດນັ້ນ ຈຶ່ງຖືກປະປ່ອຍ, ມາດຕະການພິເສດ ແມ່ນສິ່ງຈໍາເປັນ ເພື່ອທີ່ເຂົາເຈົ້າ ອາດບັນລຸຜົນໄດ້ຮັບແບບສະ ເ ໝີພາບໃນການພັດທະນາມະນຸດ.

### ການນໍາໃຊ້ບາດກ້າວທີ່ເປັນທາງບວກ

ບາດກ້າວ ທີ່ເປັນທາງບວກ ແມ່ນສໍາຄັນ ໃນການແກ້ໄຂ ຄວາມແຕກໂຕນ ທີ່ເກີດຂຶ້ນໃນປະຫວັດສາດ ແລະ ຍັງຄົງມີຢູ່ຕໍ່ໄປ ລະຫວ່າງກຸ່ມ ແລະ ເການເລືອກປະຕິບັດລະຫວ່າງກຸ່ມ. ອາດເລືອກເອົາ ຮູບແບບການສະໝັກເຂົ້າຮຽນ ເປັນໂຄຕາ ສໍາ ລັບຊົນເຜົ່າສ່ວນນ້ອຍໃນການສຶກສາຊັ້ນສູງ ຫຼື ປະຕິບັດການໃຫ້ສິດພິເສດສໍາລັບຜູ້ປະກອບການເພດຍິງ ໃນການໄດ້ຮັບສິນເຊື່ອແບບອຸດໜູນຜ່ານທາງລະບົບທະນາຄານ.

ບາດກ້າວທີ່ເປັນທາງບວກ ໄດ້ກໍ່ໃຫ້ເກີດ ຄວາມແຕກຕ່າງ ໃນການເປປັນຕົວແທນ ຂອງແມ່ຍິງຢູ່ລັດຖະສະພາ. ພາຍຫຼັງຖະແຫຼງການປັກກິ່ງ ແລະ ເວທີສໍາລັບການປະຕິບັດງານຢູ່ກອງປະຊຸມລະດັບໂລກຄັ້ງທີສີ່ ຂອງອົງການສະຫະປະຊາຊາດໃນປີ 1995, ບາງປະເທດ ໄດ້ຮັບຮອງເອົາ ໂຄຕາທາງເພດ ເພື່ອເພີ່ມຫຼາຍຂຶ້ນ ສັດສ່ວນຂອງທີ່ນັ່ງຂອງແມ່ຍິງ, ສະໜອງຄວາມໝັ້ນໃຈ ແລະ ສິ່ງຈູງໃຈສໍາລັບແມ່ຍິງ ເພື່ອສະໝັກຮັບເລືອກຕັ້ງ ແລະ ມີໄຊຊະນະ. ປະເທດຣະວັນດາ ຊຶ່ງແມ່ຍິງມີຈໍານວນ 64 ສ່ວນຮ້ອຍຂອງຜູ້ແທນປະຊາຊົນ ຢູ່ໃນສະພາຕໍ່າ, ແມ່ນຕົວຢ່າງໜຶ່ງທີ່ດີເດັ່ນ.[38]

### ສົ່ງເສີມການພັດທະນາມະນຸດສໍາລັບກຸ່ມດ້ອຍໂອກາດ

ເຖິງແມ່ນວ່າຈະມີຄວາມຫຼາກຫຼາຍ ທີ່ສໍາຄັນໃນເອກະລັກ (ຫຼື ອັດຕະລັກ) ແລະ ຄວາມຕ້ອງການ, ກຸ່ມຜູ້ດ້ອຍໂອກາດ ດັ່ງເຊັ່ນ ຊົນເຜົ່າສ່ວນນ້ອຍ, ຄົນພື້ນເມືອງ, ຄົນພິການ, ຄົນທີ່ດໍາລົງຊີວິດ ໂດຍຕິດເຊື້ອເອດ ແລະ ໂລກເອດ ແລະ ບຸກຄົນປະເພດເຊັ່ນ ຜູ້ຍິງທີ່ຮັກຜູ້ຍິງດ້ວຍກັນ, ຜູ້ຊາຍທີ່ຮັກຜູ້ຊາຍດ້ວຍກັນ, ຄົນຮັກສອງເພດ, ຄົນຂ້າມເພດ, ຊາຍ ຫຼື ຍິງທີ່ມີອະໄວຍະວະສືບພັນຂອງສອງເພດ ປະເຊີນຂໍ້ຈໍາກັດຮັດແຄບ ຄ້າຍຄືກັນຢູ່ສະເໝີມາ, ດັ່ງເຊັ່ນການຈໍາແນກ, ມົນທິນ (ຫຼື ຮອຍດ່າງ) ທາງສັງຄົມ ແລະ ຄວາມສ່ຽງທີ່ ຈະຖືກທໍາຮ້າຍຈົນໄດ້ຮັບບາດເຈັບ. ແຕ່ວ່າ ແຕ່ລະກຸ່ມ ຍັງມີຄວາມຕ້ອງການທີ່ພິເສດ ທີ່ຕ້ອງໄດ້ຮັບການຕອບສະໜອງ ຖ້າຫາກ ວ່າເຂົາເຈົ້າ ຈະໄດ້ປະໂຫຍດຈາກຄວາມກ້າວໜ້າໃນການພັດທະນາມະນຸດ.

ສຳລັບກຸ່ມສ່ຽງບາງກຸ່ມ, ດັ່ງເຊັ່ນຊົນເຜົ່າສ່ວນນ້ອຍ ຫຼື ຄົນພິການ, ສິດທີ່ຕໍ່ຕ້ານການຈຳແນກ ຫຼື ສິດທິອື່ນໆ ໄດ້ຮັບການຄ້ຳປະກັນຢູ່ໃນລັດຖະທຳມະນູນ ແລະ ນິຕິກຳອື່ນໆ. ຄ້າຍຄືກັນ ຂໍ້ກຳນົດພິເສດສ່ວນໃຫຍ່ ປົກປ້ອງຄົນພື້ນເມືອງ ຢູ່ສະເໝີມາ, ດັ່ງເຊັ່ນຢູ່ປະເທດແຄນາດາ ແລະ ນິວຊີແລນ.[39] ຢ່າງໃດກໍ່ຕາມ ໃນຫຼາຍໆກໍລະນີ ກົນໄກທີ່ມີປະສິດທິຜົນ ສຳລັບການຈັດຕັ້ງປະຕິ ບັດ ແລະ ຄວາມສະເໝີພາບຢ່າງເຕັມສ່ວນ ໃນກົດໝາຍມີບໍ່ພຽງພໍ. ຄະນະກຳມະການແຫ່ງຊາດດ້ານສິດທິມະ ນຸດ ຫຼື ຄະນະກຳມະການສຳລັບກຸ່ມສະເພາະເຈາະຈົງ ສາມາດສະໜອງການຕິດຕາມກວດກາ ແລະ ຮັບປະກັນວ່າສິດທິຂອງກຸ່ມເຫຼົ່ານີ້ ຈະບໍ່ຖືກລ່ວງລະເມີດ (ຫຼື ໄດ້ຮັບການເຄົາລົບ). ການເອົາຊະນະການຈຳແນກ ແລະ ການຂົ່ມເຫັງ (ຫຼື ການປະຕິບັດບໍ່ດີຕໍ່) ຕໍ່ສະມາຊິກໃນຊຸມຊົນທີ່ມີ ຜູ້ຍິງທີ່ຮັກຜູ້ຍິງດ້ວຍກັນ, ຜູ້ຊາຍທີ່ຮັກຜູ້ຊາຍດ້ວຍກັນ, ຄົນຮັກສອງເພດ, ຄົນຂ້າມເພດ, ຊາຍ ຫຼື ຍິງທີ່ມີອະໄວຍະວະສືບພັນຂອງສອງເພດ ຮຽກຮ້ອງໃຫ້ມີຂອບແຜນງານດ້ານນິຕິກຳ ທີ່ສາມາດປ້ອງກັນສິດທິມະນຸດຂອງເຂົາເຈົ້າ.

ການມີສ່ວນຮ່ວມໃນຂະບວນການທີ່ຫຼໍ່ຫຼອມຊີວິດ ຂອງກຸ່ມດ້ອຍໂອກາດ ຈະຕ້ອງຖືກຮັບປະກັນ. ຍົກຕົວຢ່າງ, ໂຄຕາສຳລັບ ຊົນເຜົ່າສ່ວນນ້ອຍ ແລະ ການເປັນຕົວແທນ ຂອງຄົນພື້ນເມືອງ ໃນລັດຖະສະພາ ແມ່ນແນວທາງ ເພື່ອຊ່ວຍເຂົາເຈົ້າຍົກຂຶ້ນໃຫ້ເຫັນຄວາມກັງວົນໃຈຂອງເຂົາເຈົ້າ. ຄົນພື້ນເມືອງບາງກຸ່ມ ມີສະພາຜູ້ແທນ ຫຼື ສະພາເຫດສະບານຂອງເຂົາເຈົ້າເອງ , ຊຶ່ງມີໜ້າທີ່ເປັນອົງກອນສຳລັບໃຫ້ຄຳປຶກສາ. ປະເທດນິວຊີແລນ ມີປະຫວັດ ສາດຍາວນານທີ່ສຸດ ຂອງການມີຕົວແທນຄົນພື້ນເມືອງໃນສະພານິຕິບັນຍັດແຫ່ງຊາດ.[40]

ສຳລັບຄົນພິການ, ການມີສ່ວນ ແລະ ການອຳນວຍຄວາມສະດວກແມ່ນສິ່ງສຳຄັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າທີ່ຈະດຳລົງຊີວິດ ຢ່າງເປັນອິດສະຫຼະ (ຫຼື ເອກະລາດ), ຄົນພົບວຽກເຮັດງານທຳ ແລະ ປະກອບສ່ວນແກ່ສັງຄົມ.ແນວຄິດລິເລີ່ມການຝຶກອົບຮົມດ້ານວິຊາຊີບທີ່ພິເສດ ຄວນໄດ້ດຳເນີນການເພື່ອພັດທະນາທັກສະຂອງເຂົາເຈົ້າ. ການເຂົ້າເຖິງທີ່ເພີ່ມທະວີຕໍ່ຊັບພະຍາກອນການຜະລິດ, ດັ່ງເຊັ່ນການສະໜອງທຶນສຳລັບການປະກອບອາຊີບອິດສະຫຼະ ແລະ ການສະໜອງຂໍ້ມູນຂ່າວສານໂດຍທາງເຄື່ອງມືສື່ສານເຄື່ອນທີ່ສາມາດຊ່ວຍເຂົາເຈົ້າປະກອບອາຊີບອິດສະຫຼະ, ໂຄງລ່າງພື້ນຖານທີ່ແທດເໝາະ, ລວມມີເທັກໂນໂລຊີ, ສາມາດເອື້ອອຳນວຍໃຫ້ຄົນທີການເຄື່ອນທີ່ໄດ້ຫຼາຍຂຶ້ນ.

ກຸ່ມຜູ້ດ້ອຍໂອກາດ ປະເຊີນຂໍ້ຈຳກັດຮັດແຄບຢູ່ສະເໝີມາ, ດັ່ງເຊັ່ນ ການຈ□າແນກ, ແຕ່ວ່າ ແຕ່ລະກຸ່ມ ຍັງມີຄວາມຕ້ອງການທີ່ພິເສດ ທີ່ຕ້ອງໄດ້ຮັບການຕອບສະໜອງ ຖ້າຫາກ ວ່າເຂົາເຈົ້າ ຈະໄດ້ປະໂຫຍດຈາກຄວາມກ້າວໜ້າໃນການພັດທະນາມະນຸດ

ຜູ້ຍ້າຍຖິ່ນຖານ ແລະ ຜູ້ອົບພະຍົບ ຕົກຢູ່ໃນສະພາບສ່ຽງ ຢູ່ປະເທດເຈົ້າບ້ານ ແລະ ບາດກ້າວ ປະຕິບັດງານແຫ່ງຊາດ ແມ່ນສິ່ງຈຳເປັນ ເພື່ອແກ້ໄຂລັກສະນະ ແນວໃໝ່ ຂອງການຍ້າຍຖິ່ນຖານ ແລະ ວິວັດທະນາການຂອງມັນ. ປະເທດຕ່າງໆ ຄວນຜ່ານກົດໝາຍ ທີ່ປົກປ້ອງຜູ້ອົບພະຍົບ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ເພາະເຂົາເຈົ້າເປັນສັດສ່ວນໃຫຍ່ຂອງປະຊາກອນອົບພະຍົບ ແລະ ເປັນຜູ້ເຄາະຮ້າຍຕົ້ນຕໍ. ປະເທດທີ່ເປັນທາງຜ່ານ ແລະ ປະເທດຈຸດໝາຍປາຍທາງ ຄວນສະໜອງສາທາລະນະປະໂຫຍດ ທີ່ຈຳເປັນໃນການເຝົ້າດູແລ ແລະ ເອົາໃຈໃສ່ ຕໍ່ຜູ້ອົບພະຍົບລີ້ໄພ, ດັ່ງເຊັ່ນ ການຈັດຫາສະຖານທີ່ການຮຽນ-ການສອນ ສຳລັບເດັກນ້ອຍລູກ-ຫຼານຂອງຜູ້ອົບພະຍົບ. ອີກຢ່າງ ປະເທດເຈົ້າບ້ານ ຄວນກຳນົດ ນະໂຍບາຍກ່ຽວກັບວຽກເຮັດງານທຳຊົ່ວຄາວ ແລະ ການຈັດຫາວຽກເຮັດງານທຳໃຫ້ແກ່ຜູ້ອົບພະຍົບ.

## ສ້າງການພັດທະນາມະນຸດໃຫ້ສາມາດປັບຕົວໄດ້

ຄວາມກ້າວໜ້າ ໃນການພັດທະນາມະນຸດ ສ່ວນຫຼາຍບໍ່ເໜັງຕີງ ຫຼື ຈາງຫາຍໄປ ຖ້າຫາກ ຖືກຂົ່ມຂູ່ດ້ວຍການກະທົບ - ດັ່ງເຊັ່ນ ໂຣກລະບາດລະດັບໂລກ, ການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທຳມະຊາດ, ຄວາມຮຸນແຮງ ແລະ ຄວາມ ຂັດແຍ້ງ (ຫຼື ການຕໍ່ສູ້). ກຸ່ມຄົນທີ່ດ້ອຍໂອກາດ ແລະ ກຸ່ມສ່ຽງ ເປັນພວກໄດ້ຮັບເຄາະຮ້າຍຕົ້ນຕໍ.

### ການແກ້ໄຂບັນຫາໂຣກລະບາດ, ການກະທົບ ແລະ ໄພອັນຕະລາຍ

ຄວາມກ້າວໜ້າຫຼວງຫຼາຍ ບັນລຸໄດ້ ໃນການຂະຫຍາຍ ການຮັກສາຣີໂຕຼໄວຣັສ, ແຕ່ຄົນຈຳນວນ 18 ລ້ານ ທີ່ດຳລົງຊີວິດໂດຍຕິດເຊື້ອເອດ ຈະບໍ່ມີການເຂົ້າເຖິງຕໍ່ການບຳບັດດັ່ງກ່າວ.[41] ແມ່ຍິງໜຸ່ມ, ຊຶ່ງອາດ ຈະປະເຊີນຕໍ່ຄວາມຮຸນແຮງ ທີ່ມີຖານທາງເພດ ແລະ ມີການເຂົ້າເຖິງຢ່າງຈຳກັດຕໍ່ຂໍ້ມູນຂ່າວສານ ແລະ ການຮັກສາສຸຂະພາບ, ແມ່ນຈຳນວນທີ່ປະເຊີນໄພອັນຕະລາຍຫຼາຍກວ່າໝູ່, ດັ່ງດຽວກັບ ບັນດານັກໂທດ, ຜູ້ຂາຍບໍລິການທາງເພດ, ຜູ້ຊົມໃຊ້ຢາເສບຕິດ ແລະ ຄົນຂ້າມເພດ. ເຖິງວ່າ ຈະມີຜົນສຳເລັດ ໃນການຫຼຸດຜ່ອນອັດຕາການຊຶມເຊື້ອ ໃນບັນດາແມ່ຍິງ ແລະ ເດັກນ້ອຍ ລວມທັງໃນການຂະ ຫຍາຍກວ້າງຂຶ້ນການເຂົ້າເຖິງຂອງເຂົາເຈົ້າ ຕໍ່ການປິ່ນປົວ.

ຢູ່ໃນໂລກ ທີ່ນັບມື້ ນັບເຊື່ອມໂຍງກັນ, ການມີສະພາບກຽມພ້ອມຕໍ່ໜ້າການເກີດວິກິດທາງສຸຂະພາບທີ່ເປັນໄປໄດ້ ໄດ້ກາຍມາເປັນບູລິມະສິດຢ່າງໜຶ່ງ. ການລະບາດຂອງໂລກຊິກາ (Zika) ໃນໄລຍະຫຼັງ ສະໜອງເປັນຕົວຢ່າງທີ່ດີອັນໜຶ່ງ. ຫຼາຍປະເທດ ມີປະຕິກິລິຍາໂຕ້ຕອບໃນທິດທາງແຕກຕ່າງກັນໄປຕໍ່ການແຜ່ລາມຂອງໄວຣັດຊິກາ. ປະເທດທີ່ກຳລັງມີການແຜ່ເຊື້ອໄວຣັດ, ດັ່ງເຊັ່ນປະເທດໂຄລອມເບຍ, ສາທາລະນະລັດໂດມິນີກັນ, ເອຄວາດໍ ແລະ ຈາໄມກາ, ໄດ້ແຈ້ງເຕືອນແກ່ແມ່ຍິງ ເພື່ອເລື່ອນເວລາຂອງການຖືພາອອກໄປ.[42] ຢູ່ປະເທດບຣາຊິນ ຍຸງສາຍພັນໃໝ່ຖືກປ່ອຍສູ່ທຳມະຊາດ ເພື່ອພະຍາຍາມ ຕໍ່ ສູ້ກັບເຊື້ອໄວຣັດຊິກາ ແລະ ກອງທັບ ໄດ້ສົ່ງທະຫານໄປ ໃນທົ່ວປະເທດ ເພື່ອໃຫ້ຄວາມຮູ້ ແກ່ປະຊາຊົນກ່ຽວກັບການຄວບຄຸມຍຸງ ແລະ ເພື່ອແຈ້ງເຕືອນເຂົາເຈົ້າຂອງໄພອັນຕະລາຍທີ່ຕິດພັນກັບເຊື້ອໄວຣັດ.[43]

ໃນຫວ່າງຫຼັງສຸດນີ້, ແຜນຍຸດທະສາດການຮັບມືທີ່ທົບທວນໃໝ່ ອອກແບບໂດຍ ອົງການອະນາໄມໂລກ ໂດຍການຮ່ວມມືກັບ () ຫຼາຍກວ່າ 60 ຄູ່ຮ່ວມມື ເລັ່ງໃສ່ການຄົ້ນຄວ້າ, ການກວດກາ, ການປ້ອງກັນ ແລະ ການດູແລ ກໍ່ຄືການສະໜັບສະໜູນອຸ້ມຊູ.[44]

ການສ້າງ ຄວາມສາມາດຟື້ນຄືນສະພາບປົກກະຕິ ຈາກໄພພິບັດ ເຂົ້າໃນນະໂຍບາຍ ແລະ ແຜນງານ ຢູ່ໃນທຸກລະດັບສາມາດຫຼຸດຜ່ອນ ຄວາມສ່ຽງຕໍ່ໄພອັນຕະລາຍ ແລະ ບັນເທົາຜົນກະທົບຂອງໄພພິບັດ, ໂດຍສະເພາະສຳລັບຜູ້ທຸກຍາກ. ແຜນງານ ທີ່ມີຫົວຄິດປະດິດສ້າງ ແມ່ນນອນ ຢູ່ໃຈກາງຂອງແຜນງານເຊັນໄດ ສຳລັບການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ຮັບຮອງເອົາ ໂດຍສະມັດຊາໃຫຍ່ສະຫະປະຊາຊາດ ພາຍຫຼັງ ກອງປະຊຸມ ສະຫະປະຊາຊາດລະດັບໂລກ ວ່າດ້ວຍການຫຼຸດ ຜ່ອນຄວາມສ່ຽງຈາກໄພພິບັດ ຄັ້ງທີ່ 3 ໃນປີ 2015.

### ແກ້ໄຂບັນຫາຄວາມຮຸນແຮງ ແລະ ຮັບປະກັນຄວາມສະຫງົບສຸກຂອງປະຊາກອນ

ຕົວຂັບເຄື່ອນຂອງຄວາມຮຸນແຮງແມ່ນສະຫຼັບຊັບຊ້ອນ ແລະ ເພາະສະນັ້ນ ຮຽກຮ້ອງເຖິງແນວທາງແບບຫຼາຍງ່າມ (ຫຼື ຫຼາຍດ້ານ) ທີ່ປະກອບດ້ວຍ ການສົ່ງເສີມ ການປົກຄອງດ້ວຍກົດໝາຍ (ຫຼື ຫຼັກນິຕິທຳ; ຫຼັກບັງຄັບແຫ່ງກົດໝາຍ) ທີ່ອີງໃສ່ຄວາມເປັນທຳ ແລະ ຂັນຕິທຳຕໍ່ຄວາມຮຸນແຮງເທົ່າກັບສູນ; ການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການປົກຄອງທ້ອງຖິ່ນ, ກົນລະຍຸດ

ຕໍາຫຼວດຊຸມຊົນ ຫຼື ຮັບໃຊ້ຊຸມຊົນ (ທິດສະດີຕໍາຫຼວດຜູ້ຮັບໃຊ້ປະຊາຊົນ) ແລະ ຈັດກໍາລັງຜູ້ບັງຄັບໃຊ້ກົດໝາຍຢູ່ຈຸດຫຼໍ່ແຫຼມຂອງຄວາມຮຸນແຮງ ແລະ ການພັດທະນາໜ່ວຍງານຮັບມື ແລະ ໃຫ້ຄວາມຊ່ວຍເຫຼືອ ເພື່ອແກ້ໄຂຄວາມຮຸນແຮງ ແລະ ຜູ້ເຄາະຮ້າຍຍ້ອນຄວາມຮຸນແຮງ.

ນະໂຍບາຍທາງເລືອກທີ່ໃຊ້ການໄດ້ ປະກອບດ້ວຍ ການພັດທະນາໂຄງລ່າງພື້ນຖານຄຸນນະພາບສູງ, ການປັບປຸງການຂົນສົ່ງ ສາທາລະນະຢູ່ທ້ອງຖິ່ນ ທີ່ມີອາດຊະຍາກໍາສູງ, ການປຸກສ້າງເຮືອນຢູ່ອາໄສ ໃນເຂດພື້ນທີ່ທຸກຍາກ ຂອງຕົວເມືອງ ແລະ ສະໜອງທາງເລືອກທົດແທນທາງເສດຖະກິດ-ສັງຄົມ ຕໍ່ຄວາມຮຸນແຮງ, ໂດຍສະເພາະໃຫ້ແກ່ຊາວໜຸ່ມ, ຊັກຈູງ (ດຶງດູດ) ເອົາເຂົາເຈົ້າ ເຂົ້າມາມີສ່ວນ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມເຊື່ອມແໜ້ນທາງສັງຄົມ.

## ການໃຫ້ຄວາມຊ່ວຍເຫຼືອສະໜັບສະໜູນຊີວິດການເປັນຢູ່ທີ່ດີຂອງມະນຸດ ໃນສະຖານະການ ພາຍຫຼັງການຂັດແຍ້ງດ້ວຍກໍາລັງອາວຸດ

ໃນດ້ານການເມືອງ ການປ່ຽນຮູບສະຖາບັນແມ່ນສິ່ງຈໍາເປັນ. ມັນຈະຮັບປະກັນ ຄວາມສະຫງົບຂອງປະຊາກອນ ຜ່ານທາງທິດສະດີຕໍາຫຼວດຜູ້ຮັບໃຊ້ຊຸມຊົນ, ເຮັດໃຫ້ລຸລ່ວງ ດ້ວຍການປະຕິບັດຢ່າງໄວວາ ໃນຂອດການປົກຄອງ (ດັ່ງເຊັ່ນ ຂະບວນການຈັດການຢ່າງໄວວາເອກະສານວຽກງານທັງຫຼາຍທີ່ຮັບຜິດຊອບ) ແລະ ການກັບຄືນສູ່ສັງຄົມ ຂອງອະດີດນັກຮົບ (ຫລືນັກຮົບເກົ່າ) ໂດຍການປົດອາວຸດ ແລະ ປົດປະຈໍາການ ຫຼັງຈາກສິ້ນສຸດສົງຄາມ.

ໃນດ້ານເສດຖະກິດ ການຟື້ນຟູການບໍລິການຂອງສັງຄົມຂັ້ນພື້ນຖານ, ສະໜັບສະໜູນວຽກງານໃນຂະແໜງສຸຂະພາບເພື່ອປົກຄຸມໃນຫຼາຍເປົ້າໝາຍ, ລິເລີ່ມແຜນງານໂຍທາທິການ ແລະ ກໍານົດ ແລະ ຈັດຕັ້ງປະຕິບັດແຜນງານທ້ອງຖິ່ນ ທີ່ເລັງຄາດໝາຍ (ດັ່ງເຊັ່ນ ອາຄານຊົ່ວຄາວຂອງໂຮງຮຽນ ເພື່ອເດັກນ້ອຍຈະບໍ່ໄດ້ເສຍການຮຽນ) (ຫລືການເຂົ້າເຖິງການສຶກສາ) ແມ່ນສໍາຄັນ ສໍາລັບການກ້າວໄປຂ້າງໜ້າ ໃນພາວະຕໍ່ເນື່ອງຂອງການພັດທະນາ.

## ແກ້ໄຂການປ່ຽນແປງດິນຟ້າອາກາດ

ການປ່ຽນແປງດິນຟ້າອາກາດ ເປັນໄພຕໍ່ຊີວິດ ແລະ ວິຖີຊີວິດຂອງຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ. ການແກ້ໄຂບັນຫານີ້ຮຽກຮ້ອງ ສາມມາດຕະການຍຸດທະສາດ ໃນເບື້ອງຕົ້ນ. ການກໍານົດລາຄາ ກ່ຽວກັບການປົນເປື້ອນ ຍ້ອນທາດກາກບອນ - ຜ່ານທາງ ລະບົບການຊື້ຂາຍທາດອາຍພິດ ຫຼື ພາສີທາດກາກບອນ - ເຮັດໃຫ້ການປ່ອຍອາຍພິດຫຼຸດຕໍ່າລົງ ແລະ ຂັບເຄື່ອນການລົງທຶນເຂົ້າສູ່ພະລັງງານທົດແທນ ຫຼື ພະລັງງານທາງເລືອກທີ່ສະອາດກວ່າ. ໂດຍປະມານ 40 ປະເທດ ແລະ ຫຼາຍກວ່າ 20 ເມືອງໃຫຍ່, ລັດ ແລະ ແຂວງ ນໍາໃຊ້ການກໍານົດລາຄາການປ່ອຍທາດກາກບອນ.[45]

ການເກັບພາສີນໍ້າມັນເຊື້ອໄຟ, ຍົກເລີກການອຸດໜູນ (ຫລື ເກື້ອກູນ) ພະລັງງານເຊື້ອໄຟຊາກດຶກດໍາບັນ ແລະ ລວມເຂົ້າກັນ ລະບຽບການວ່າດ້ວຍ “ຄ່າທາງສັງຄົມຂອງທາດກາກບອນ” ເປັນແນວທາງອ້ອມຫຼາຍຕື່ມ ຂອງການກໍານົດລາຄາທາດກາກບອນຢ່າງຖືກຕ້ອງ. ໂດຍການຄ່ອຍໆ ເຊົາໃຊ້ເງິນອຸດໜູນ (ຫລື ເກື້ອກູນ) ເຊື້ອໄຟຊາກດຶກດໍາບັນ ທີ່ເປັນໄພອັນຕະ ລາຍ, ປະເທດຕ່າງໆ ສາມາດຈັດສັນຄືນໃໝ່ ລາຍຈ່າຍຂອງເຂົາເຈົ້າ ໃຫ້ແກ່ບ່ອນທີ່ຮຽກຮ້ອງຕ້ອງການທີ່ສຸດ ແລະ ຢ່າງມີປະສິດທິຜົນທີ່ສຸດ, ລວມທັງການເລັງຄາດໝາຍສະໜັບສະໜູນສໍາລັບຜູ້ທຸກຍາກ.

## ຄວາມກ້າວໜ້າ ໃນການພັດທະນາມະນຸດ ສ່ວນຫຼາຍ ບໍ່ໝັ້ນຄົງ ຫຼື ຈາງຫາຍໄປຢູ່ສະເໝີມາ ຖ້າຫາກຖືກຂົ່ມຂູ່ດ້ວຍການກະທົບ. ກຸ່ມຄົນທີ່ດ້ອຍໂອກາດ ແລະ ກຸ່ມສ່ຽງ ເປັນພວກໄດ້ຮັບເຄາະຮ້າຍຕົ້ນຕໍ

ການກຳນົດ (ຫຼື ການຕັ້ງລາຄາໃຫ້ຖືກຕ້ອງ ຫຼື ລາຄາໃຫ້ເໝາະສົມ) ເປັນພຽງແຕ່ສ່ວນໜຶ່ງຂອງສົມຜົນ. ນະຄອນໃຫຍ່ (ຫຼື ຕົວເມືອງໃຫຍ່) ກຳລັງເຕີບໂຕຢ່າງໄວວາ ໂດຍສະເພາະ ຢູ່ປະເທດກຳລັງພັດທະນາ. ດ້ວຍການວາງແຜນທີ່ຮອບຄອບໃນລະບົບຂົນສົ່ງ ແລະ ການນຳໃຊ້ທີ່ດິນ ແລະ ການສ້າງຕັ້ງມາດຕະຖານຂອງປະສິດທິພາບດ້ານພະລັງງານ, ນະຄອນໃຫຍ່ສາມາດ ຫຼີກລ່ຽງ ການຕິດກັບ ຢູ່ໃນຮູບແບບທີ່ບໍ່ຍືນຍົງ ແລະ ສາມາດເປີດກວ້າງ ການເຂົ້າເຖິງຕໍ່ວຽກເຮັດງານທຳ ແລະ ກາລະໂອກາດ ສຳລັບຜູ້ທຸກຍາກ, ໃນຂະນະດຽວກັນ ການຫຼຸດຜ່ອນມົນລະພາວະທາງອາກາດ.

ການເພີ່ມຫຼາຍຂຶ້ນ ປະສິດທິພາບຂອງການໃຊ້ພະລັງງານ ແລະ ພະນັກງານທົດແທນ ແມ່ນສຳຄັນຢ່າງຍິ່ງ. ການລິເລີ່ມ ພະລັງງານທົດແທນແບບຍືນຍົງ ສຳລັບໝົດທຸກຄົນ ກຳນົດສາມເປົ້າໝາຍ ສຳລັບປີ 2030: ບັນລຸການເຂົ້າເຖິງພະລັງງານທີ່ທັນສະໄໝ ສຳລັບໝົດທຸກຄົນ, ເພີ່ມຂຶ້ນເປັນສອງເທົ່າອັດຕາຂອງການປັບປຸງໃນປະສິດທິພາບພະລັງງານ ແລະ ເພີ່ມຂຶ້ນເປັນສອງເທົ່າ ສ່ວນແບ່ງຂອງພະລັງງານທົດແທນ ຢູ່ໃນສ່ວນປະສົມພະລັງງານລະດັບໂລກ. ຢູ່ໃນຫຼາຍປະເທດ ການພັດ ທະນາພະລັງງານທົດແທນຂະໜາດໃຫຍ່ ໃນປະຈຸບັນແມ່ນຖືກກວ່າ, ຫຼື ໃນລາຄາເທົ່າທຽມກັນ, ໂຮງງານທີ່ໃຊ້ພະລັງງານເຊື້ອໄຟຈາກຊາກດຶກດຳບັນ.[46]

ເຕັກນິກ ການຜະລິດກະສິກຳທີ່ປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ຊ່ວຍຊາວກະສິກອນ ເພີ່ມຜະລິດຕະພາບຂອງເຂົາເຈົ້າ ໃຫ້ຫຼາຍຂຶ້ນ ແລະ ຄວາມສາມາດຟື້ນຄືນສະພາບປົກກະຕິຕໍ່ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ໃນຂະນະດຽວກັນ ການສ້າງແຫຼ່ງກັກເກັບ ທາດກາກບອນ ທີ່ຫຼຸດຜ່ອນການປ່ອຍອາຍພິດແບບສຸດທິ. ປ່າໄມ້, ປອດຂອງໜ່ວຍໂລກ, ດູດຊັບເອົາທາດກາກບອນ ແລະ ກັກເກັບມັນໄວ້ຢູ່ໃນດິນ, ຕົ້ນໄມ້ ແລະ ໃບພືດ.

ການເລັ່ງເອົາໃຈໃສ່ການເຊື່ອມຈອດລະຫວ່າງຄວາມທຸກຍາກ ແລະ ສິ່ງແວດລ້ອມ, ຊຶ່ງສະຫຼັບຊັບຊ້ອນ ແຕ່ຫົວລ້ຽວຫົວຕໍ່ ສຳລັບຜູ້ດ້ອຍໂອກາດ, ຍັງແມ່ນສິ່ງສຳຄັນ, ຜູ້ທຸກຍາກແບກຫາບສ່ວນທີ່ໜັກໜ່ວງທີ່ສຸດຂອງຄວາມເສຍຫາຍທີ່ສ້າງຂຶ້ນຕໍ່ສິ່ງແວດລ້ອມ, ເຖິງແມ່ນວ່າເຂົາເຈົ້າບໍ່ຄ່ອຍຈະເປັນຜູ້ກໍ່ເຫດແຕ່ປະການໃດ. ນະໂຍບາຍທີ່ປົກປ້ອງຊັບສິນສ່ວນລວມ (ດັ່ງເຊັ່ນປ່າໄມ້ຊຸມຊົນ), ຮັບປະກັນສິດທິ ແລະ ການມີສິດໄດ້ຮັບປະໂຫຍດຂອງຜູ້ທຸກຍາກ ແລະ ສະໜອງພະລັງງານທົດແທນສຳລັບຜູ້ທຸກຍາກ ຈະປັບປຸງຊີວະນາໆພັນ, ຊຶ່ງຊີວິດຂອງຜູ້ທຸກຍາກເພິ່ງພາ ແລະ ຖອຍກັບຈາກການໝູນເປັນດຽວລົງເລິກ ຊັກໃຊ້ຂອງຄວາມທຸກຍາກ ແລະ ຄວາມເສຍຫາຍທີ່ສ້າງຂຶ້ນຕໍ່ສິ່ງແວດລ້ອມ.

## ສົ່ງເສີມການປົກປ້ອງທາງສັງຄົມ

ນະໂຍບາຍທາງເລືອກ ທີ່ຈະຂະຫຍາຍກວ້າງ ການປົກປ້ອງທາງສັງຄົມ ສູ່ກຸ່ມດ້ອຍໂອກາດ ປະກອບດ້ວຍການເຮັດໃຫ້ລຸລ່ວງແຜນງານການປົກປ້ອງທາງສັງຄົມ, ການລວມເຂົ້າກັນ ລະຫວ່າງ ການປົກປ້ອງທາງສັງຄົມ ກັບ ຍຸດທະສາດການສ້າງວຽກເຮັດງານທຳທີ່ແທດເໝາະ ແລະ ການສະໜອງລາຍໄດ້ຂັ້ນຕ່ຳເພື່ອການດຳລົງຊີວິດ.

ການປົກປ້ອງທາງສັງຄົມຂັ້ນຕ່ຳສຸດ ສາມາດຄ້ຳປະກັນ ການຮັກສາສຸຂະພາບຂັ້ນພື້ນຖານ, ເງິນບຳນານ ແລະ ສິດທິທາງສັງຄົມອື່ນໆ ສຳລັບທຸກຖ້ວນໜ້າ. ການສ້າງວຽກເຮັດງານທຳ ຜ່ານທາງ ແຜນງານວຽກສາທາລະນະ ສາມາດຫຼຸດຜ່ອນຄວາມທຸກຍາກ ຜ່ານທາງການສ້າງລາຍໄດ້, ສ້າງໂຄງລ່າງພື້ນຖານດ້ານວັດຖຸ ແລະ ປົກປ້ອງຜູ້ທຸກຍາກຕໍ່ການກະທົບທີ່ຮຸນແຮງ. ແຜນງານການສ້າງວຽກເຮັດງານທຳ ຢູ່ຊົນນະບົດ ເພື່ອການກໍ່ສ້າງປັດໃຈ ສາທາລະນະ ຢູ່ປະເທດບັງຄລາເທັດ ແມ່ນຕົວ ຢ່າງທີ່ສົມບູນແບບ.**[47]**

ລາຍໄດ້ຂັ້ນພື້ນຖານ ທີ່ຄ້ຳປະກັນ ສຳລັບພົນລະເມືອງ, ເປັນອິດສະຫຼະ ຈາກຕະຫຼາດແຮງງານ, ຍັງແມ່ນນະໂຍບາຍທາງເລືອກທີ່ບັນດາປະເທດ (ດັ່ງເຊັ່ນ ປະເທດຟິນແລນ[48]). ກຳລັງທົດລອງເປັນເຄື່ອງມື ສ□າລັບການປົກປ້ອງທາງສັງຄົມ ໂດຍສະເພາະສຳລັບກຸ່ມຜູ້ມີຖານະຂາດເຂີນ.

## ສ້າງຄວາມເຂັ້ມແຂງແກ່ຄົນທີ່ຖືກປະຖິ້ມ

ຖ້າຫາກນະໂຍບາຍບໍ່ສະໜອງໄດ້ ຊີວິດການເປັນຢູ່ທີ່ດີໃຫ້ແກ່ກຸ່ມດ້ອຍໂອກາດ ແລະ ກຸ່ມສ່ຽງ ແລະ ຖ້າຫາກສະຖາບັນຫຼົ້ມເຫຼວ ທີ່ຈະຮັບປະກັນວ່າປະຊາກອນບໍ່ຖືກປະປ່ອຍ, ມັນຈະຕ້ອງມີເຄື່ອງມື ແລະ ກົນໄກແກ້ໄຂໃຫ້ຖືກຕ້ອງ ທີ່ປະຊາກອນເຫຼົ່ານີ້ ສາມາດທວງເອົາສິດຂອງເຂົາເຈົ້າ. ພວກເຂົາເຈົ້າ ຈະຕ້ອງໄດ້ຮັບການສ້າງຄວາມເຂັ້ມແຂງ ໂດຍການຄໍ້າໝູນສິດທິມະນຸດ, ຮັບປະກັນການເຂົ້າເຖິງຕໍ່ຄວາມຍຸຕິທຳ, ສົ່ງເສີມການມີສ່ວນ ແລະ ຮັບປະກັນຄວາມຮັບຜິດຊອບ.

### ສະໜັບສະໜູນ (ຫຼື ຄໍ້າໝູນ) ສິດທິມະນຸດ

ການພັດທະນາມະນຸດ ສ□າລັບໝົດທຸກຄົນ ຮຽກຮ້ອງ ໃຫ້ມີສະຖາບັນສິດທິມະນຸດລະດັບຊາດ ທີ່ເຂັ້ມແຂງ ພ້ອມດ້ວຍຂີດຄວາມສາມາດ, ອຳນາດໜ້າທີ່ ແລະ ຄວາມມຸ້ງມາດປາດຖະໜາທີ່ຈະແກ້ໄຂການຈຳແນກ ແລະ ຮັບປະກັນການປົກປ້ອງສິດທິມະນຸດ. ຄະນະກຳມະການສິດທິມະນຸດ ແລະ ຜູ້ກວດການແຜ່ນດິນທີ່ມາຈາກຝ່າຍນິຕິບັນຍັດ ຫຼື ຈາກຝ່າຍບໍລິຫານຈັດການຄຳຮ້ອງທຸກ ກ່ຽວກັບການລະເມີດຕໍ່ສິດທິ, ສຶກສາອົບຮົມອົງການຈັດຕັ້ງທາງສັງຄົມ ແລະ ລັດ ກ່ຽວກັບສິດທິມະນຸດ ແລະ ໃຫ້ຄຳແນະນຳການປະຕິຮູບກົດໝາຍ.

ແຕ່ຄຳໝັ້ນສັນຍາຂອງລັດ ຕໍ່ການສະໜັບສະໜູນສິດທິເຫຼົ່ານີ້ແຕກຕ່າງກັນ, ສະຖາບັນແຫ່ງຊາດມີຂີດຄວາມສາມາດຈັດຕັ້ງປະຕິບັດແຕກຕ່າງກັນ ແລະ ກົນໄກຄວາມຮັບຜິດຊອບແມ່ນຂາດຫາຍໄປໃນບາງຄັ້ງ, ຈຸດອ່ອນທາງດ້ານສະຖາບັນອີກຕ່າງຫາກ, ຍຶດຖືການພັດທະນາຄືກັບສິດທິມະນຸດຢ່າງໜຶ່ງ ໄດ້ເປັນເຄື່ອງມືໃນການຫຼຸດຜ່ອນຄວາມຍາກໄຮ້ (ຄວາມຂາດເຂີນ) ໃນບາງມິຕິ ແລະ ສະພາບແວດລ້ອມ.

ຢູ່ໃນໂລກທີ່ເຊື່ອມສານກັນ ຮູບແບບຂອງຄວາມຮັບຜິດຊອບທີ່ຍຶດຖືເອົາລັດເປັນສູນກາງ ຈະຕ້ອງໄດ້ຂະຫຍາຍກວ້າງອອກໄປເຖິງພັນທະກໍລະນີຂອງຜູ້ມີບົດບາດທີ່ບໍ່ແມ່ນລັດ ແລະ ໄປເຖິງພັນທະກໍລະນີຂອງລັດເກີນກວ່າຂອບເຂດຊາຍແດນແຫ່ງຊາດ. ສິດທິມະນຸດບໍ່ສາມາດເຮັດຫຼ້ອນໄດ້ຢ່າງທົ່ວເຖິງ ໂດຍປາດສະຈາກກົນໄກພາຍ ໃນປະເທດ ທີ່ເປັນທີ່ຍອມຮັບແລ້ວ ແລະ ບາດກ້າວສາກົນທີ່ມີພະລັງ.

### ຮັບປະກັນການເຂົ້າເຖິງຄວາມຍຸຕິທຳ

ການເຂົ້າເຖິງຄວາມຍຸຕິທຳ ແມ່ນຄວາມອາດສາມາດຂອງປະຊາກອນທີ່ຈະສະແຫວງຫາ ແລະ ໄດ້ຮັບການແກ້ໄຂ ຜ່ານທາງສະຖາບັນດ້ານນິຕິກຳທີ່ເປັນທາງການ ຫຼື ບໍ່ເປັນທາງການ.

ຜູ້ທຸກຍາກ ແລະ ຜູ້ມີຖານະຂາດເຂີນ ປະເຊີນອຸປະສັກທີ່ໃຫຍ່ຫຼວງ, ລວມທັງ ການຂາດແຄນຂອງຄວາມຮັບຮູ້ຂອງເຂົາເຈົ້າ ແລະ ຄວາມຮູ້ດ້ານກົດໝາຍ, ສົມທົບເຂົ້າໃສ່ໂດຍ ພາວະຫ່າງເຫີນ (ຫລື ແປກແຍກ ແລະ ພາວະຜິດປົກກະຕິ) ດ້ານໂຄງສ້າງ ແລະ ສ່ວນບຸກຄົນ. ຜູ້ທຸກຍາກຂາດແຄນການເຂົ້າເຖິງທີ່ພຽງພໍຕໍ່ການບໍລິການຂອງລັດ, ຊຶ່ງໂດຍສ່ວນໃຫຍ່ລາຄາແພງ ແລະ ອຶດອາດ ແລະ ມີຊັບພະຍາກອນບໍ່ຫຼາຍ, ບຸກຄະລາກອນ ແລະ ສິ່ງອຳນວຍຄວາມສະດວກ. ຫ້ອງການຕຳຫຼວດ ແລະ ສານ ອາດຈະບໍ່ມີຕັ້ງຢູ່ເຂດຫ່າງໄກສອກຫຼີກ ແລະ ຜູ້ທຸກຍາກ ບໍ່ຄ່ອຍຈະ ສາມາດແບກຫາບຄ່າໃຊ້ຈ່າຍ ຂອງຂະບວນການທາງກົດໝາຍ. ກົນໄກກຶ່ງຕຸລາການ (ຫຼື ຄ້າຍຄືຕຸລາການ) ອາດຈະຍັງເຂົ້າບໍ່ເຖິງ ຫຼື ທີ່ເປັນຜົນຮ້າຍ.

ອຸປະສັກຕໍ່ຄວາມຍຸຕິທໍາສໍາລັບຊົນພື້ນເມືອງ ແລະ ສໍາລັບຊົນກຸ່ມນ້ອຍທາງເຊື້ອຊາດ (ຜິວພັນ) ແລະ ຊົນເຜົ່າເກີດມາຈາກສະຖານະພາບຊັ້ນຕໍ່າທາງປະຫວັດສາດ ແລະ ຈາກລະບົບສັງຄົມການເມືອງທີ່ເສີມເຂົ້າດ້ວຍອະຄະຕິ (ຫຼື ການລໍາອຽງ) ໃນຂອບແຜນງານດ້ານກົດໝາຍ ແລະ ລະບົບຍຸຕິທໍາ.

## ສົ່ງເສີມຄວາມທົ່ວເຖິງ

ການພັດທະນາມະນຸດ ສໍາລັບຄົນທຸກຖ້ວນໜ້າ ຮຽກຮ້ອງຄວາມທົ່ວເຖິງຂອງໝົດທຸກຄົນ ໃນອາທະກໍາການພັດທະນາ ແລະ ຂະບວນການ.

ຮູບແບບໂດຍລວມ (ຫຼື ທົ່ວໂລກ) ແລະ ວິທີການຂອງການຈັດຕັ້ງ ແລະ ການສື່ສານ ອໍານວຍຄວາມສະດວກ ໂດຍເຕັກໂນໂລຊີ ແລະ ສື່ສັງຄົມ. ພວກມັນ ໄດ້ປຸກລະດົມຄວາມເຄື່ອນໄຫວລະດັບຄົນທໍາມະດາ (ຫຼື ລະດັບສາມັນຊົນ) ແລະ ນໍາເອົາມາຄົນ ແລະ ກຸ່ມຄົນເພື່ອສະແດງອອກຄໍາເຫັນຂອງເຂົາເຈົ້າ, ໂດຍສະເພາະໃນຮູບແບບຄວາມເຄື່ອນໄຫວທາງອິນເຕີເນັດ. ການປັບປຸງຄຸນນະພາບ ແລະ ຂອບເຂດ ຂອງການເຂົ້າມີສ່ວນ ໂດຍພົນລະເມືອງ ໃນສະຖາບັນຂອງລັດ ພົວພັນເຖິງການສຶກສາ ໜ້າທີ່ຂອງພົນລະເມືອງດີ, ການສ້າງຂີດຄວາມສາມາດ ແລະ ການແລກປ່ຽນຄໍາເຫັນທາງການເມືອງ.

## ຮັບປະກັນຄວາມຮັບຜິດຊອບ

ຄວາມຮັບຜິດຊອບ ແມ່ນຂອດໃຈກາງທີ່ຈະຮັບປະກັນວ່າ ການພັດທະນາມະນຸດແຫດເຖິງຄົນທຸກຖ້ວນໜ້າ ໂດຍສະເພາະໃນການປົກປ້ອງສິດທິຂອງຜູ້ຖືກກົດກັນ.

ເອກະສານສໍາຄັນຢ່າງໜຶ່ງ ສໍາລັບການຮັບປະກັນຄວາມຮັບຜິດຊອບຂອງສະຖາບັນທາງສັງຄົມ ແມ່ນສິດທິໃນຂໍ້ມູນຂ່າວສານ. ນັບຕັ້ງແຕ່ຊຸມປີ 1990 ຫຼາຍກວ່າ 60 ປະເທດ ໄດ້ຮັບຮອງເອົາເຄື່ອງມືອັນໃໝ່ ທີ່ປົກປ້ອງສິດທິໃນຂໍ້ມູນຂ່າວສານ, ສ່ວນຫຼາຍ ເນື່ອງຈາກການຂ້າມຜ່ານ ທີ່ເປັນປະຊາທິປະໄຕ ແລະ ການມີສ່ວນຮ່ວມ ຢ່າງຫ້າວຫັນຂອງອົງການຈັດຕັ້ງທາງສັງຄົມໃນຊີວິດສາທາລະນະ.[49]

ສິດທິໃນຂໍ້ມູນຂ່າວສານ ຕ້ອງການເສລີພາບ ທີ່ຈະນໍາໃຊ້ຂໍ້ມູນ-ຂ່າວສານດັ່ງກ່າວນັ້ນ ເພື່ອປະກອບສ້າງຄໍາເຫັນສ່ວນໃຫຍ່ຂອງປະຊາຊົນ, ຮຽກຮ້ອງລັດຖະບານໃຫ້ຮັບຜິດຊອບ, ມີສ່ວນຮ່ວມໃນການຕັດສິນໃຈ ແລະ ຊົມໃຊ້ສິດທິໃນເສລີພາບຂອງການສະແດງຄໍາເຫັນ, ເຕັກໂນໂລຊີ ຂໍ້ມູນ-ຂ່າວສານ ແລະ ການສື່ສານ ແມ່ນນັບມື້ນັບຖືກນໍາໃຊ້ ເພື່ອຮັບປະກັນຄວາມຮັບ ຜິດຊອບ.

ການໃຊ້ສິດແບບມີສ່ວນຮ່ວມ ເພື່ອຍຶດແໜ້ນ ຄວາມຮັບຜິດຊອບ ຂອງສະຖາບັນລັດ, ດັ່ງເຊັ່ນ ການສໍາຫຼວດ ການຕິດຕາມລາຍຈ່າຍຂອງລັດ, ບັດປະເມີນຜົນພົນລະເມືອງ, ບັດຄະແນນ, ການກວດສອບທາງສັງຄົມ ແລະ ການຕິດຕາມໂດຍຊຸມຊົນ, ຖືກຊົມໃຊ້ທັງໝົດ ເພື່ອພັດທະນາສາຍສໍາພັນ ຄວາມຮັບຜິດຊອບໂດຍກົງ ລະຫວ່າງ ຜູ້ຊົມໃຊ້ການບໍລິການ ແລະ ຜູ້ສະໜອງການບໍລິການ.

**ການປະຕິຮູບ ທາງດ້ານສະຖາບັນໃນລະດັບໂລກ ແລະ ລະບົບຫຼາຍຝ່າຍທີ່ສະເໝີພາບຫຼາຍຂຶ້ນ ຈະຊ່ວຍບັນລຸ ເປົ້າໝາຍການພັດທະນາມະນຸດ ສໍາລັບຄົນທຸກຖ້ວນໜ້າ**

ພວກເຮົາດຳລົງຊີວິດຢູ່ໃນໂລກຍຸກໂລກາພິວັດ, ບ່ອນທີ່ຜົນໄດ້ຮັບ ຂອງການພັດທະນາມະນຸດ ຖືກກຳນົດ ບໍ່ສະເພາະແຕ່ການດຳເນີນງານ ຢູ່ໃນລະດັບປະເທດເທົ່ານັ້ນ, ແຕ່ຍັງແມ່ນ ໂດຍໂຄງສ້າງ, ເຫດການ ແລະ ວຽກງານໃນລະດັບໂລກ. ຄວາມບົກຜ່ອງ ໃນລະບົບໂຄງສ້າງຍຸກປັດຈຸບັນຂອງລະບົບໂລກ ເປັນຕົ້ນເຫດຄວາມທ້າທາຍສຳລັບການພັດທະນາມະນຸດໃນສາມດ້ານ. ຜົນທີ່ຕາມມາ ຈາກການກະຈາຍຂອງໂລກາພິວັດທີ່ບໍ່ສະເໝີພາບ ໄດ້ສົ່ງເສີມຄວາມກ້າວໜ້າຂອງບາງກຸ່ມຂອງປະຊາກອນ, ປະຖິ້ມກຸ່ມຜູ້ທຸກຍາກ ແລະ ກຸ່ມສ່ຽງ. ໂລກາພິວັດ ຍັງເຮັດໃຫ້ຈຳນວນ ກຸ່ມທີ່ຖືກປະປ່ອຍ ມີສະພາບບໍ່ຄ້ຳປະກັນທາງດ້ານເສດຖະກິດ. ສະນັ້ນ, ປະຊາກອນ ຈຶ່ງທົນທຸກ ຢູ່ໃນທ່າມກາງ ການສູ້ຮົບທີ່ຍືດເຍື້ອຕໍ່ໄປ. ສະຫລຸບຄວາມແລ້ວ, ສິ່ງທີ່ກ່າວມາເຫຼົ່ານີ້ ທັງໝົດ ບັ່ນທອນ (ຫຼື ທຳລາຍ) ແລະ ຈຳກັດຄວາມພະຍາຍາມຂອງຊາດ ແລະ ຕັ້ງທ່າເປັນອຸປະສັກຕໍ່ການພັດທະນາມະນຸດສຳລັບຄົນທຸກຖ້ວນໜ້າ.

ການປະຕິຮູບທາງດ້ານສະຖາບັນໃນທົ່ວໂລກ ຄວນກວມລວມ ເອົາຂົງເຂດທີ່ກວ້າງຂຶ້ນ ຂອງລະບຽບການຂອງຕະຫຼາດໂລກ, ການປົກຄອງຂອງສະຖາບັນພະຫຸພາຄີ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງທາງສັງຄົມໃນທົ່ວໂລກ ໂດຍແຕ່ລະຂົງເຂດ ສະທ້ອນເຖິງບາດກ້າວ ທີ່ເຈາະລົງ.

## ສະຖຽນລະພາບຂອງເສດຖະກິດໂລກ

ການປະຕິຮູບ ຄວນເລັງໃສ່ການສ້າງລະບຽບການທຸລະກຳເງິນຕາ ແລະ ກະແສໄຫຼວຽນຂອງທຶນ ແລະ ນະໂຍບາຍ ແລະ ລະບຽບການເສດຖະກິດມະຫາພາກທີ່ປະສານງານກັນ. ທາງເລືອກອັນໜຶ່ງແມ່ນການເກັບພາສີຫຼາຍຝ່າຍໃນທຸລະກຳຂ້າມແດນ, ອີກຢ່າງແມ່ນການນຳໃຊ້ການຄວບຄຸມເງິນທຶນໂດຍແຕ່ລະປະເທດ.

ການປະຕິຮູບທາງດ້ານສະຖາບັນໃນທົ່ວໂລກ ຄວນກວມລວມ ເອົາຂົງເຂດທີ່ກວ້າງຂຶ້ນຂອງລະບຽບການຂອງຕະຫຼາດໂລກ, ການປົກຄອງຂອງສະຖາບັນພະຫຸພາຄີ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງທາງສັງຄົມໃນທົ່ວໂລກ ໂດຍແຕ່ລະຂົງເຂດສະທ້ອນເຖິງບາດກ້າວທີ່ເຈາະລົງ

## ການໃຊ້ປະຕິບັດການຄ້າທີ່ເປັນທຳ ແລະ ກົດລະບຽບການລົງທຶນ

ວາລະສາກົນ ຄວນແມ່ນເພື່ອກຳນົດກົດລະບຽບ ເພື່ອຂະຫຍາຍກວ້າງການຄ້າຂາຍສິນຄ້າ, ການບໍລິການ ແລະ ຄວາມຮູ້ ເພື່ອເອື້ອອຳນວຍ ການພັດທະນາມະນຸດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ. ການປະຕິຮູບທີ່ສຳຄັນ ເພື່ອເຄື່ອນໄປຂ້າງໜ້າ ວາລະດັ່ງກ່າວນີ້ ປະກອບດ້ວຍການເຮັດໃຫ້ສົມບູນການເຈລະຈາຮອບໂດຮາ ຂອງອົງການການຄ້າໂລກ, ການປະຕິຮູບກົດເກນສາກົນຂອງສິດທິຊັບສິນທາງປັນຍາ ແລະ ປະຕິຮູບກົດເກນປົກປ້ອງນັກລົງທຶນໃນທົ່ວໂລກ.

## ຮັບຮອງເອົາລະບົບການຍ້າຍຖິ່ນທີ່ເປັນທຳ

ມາດຕະການເປັນທີ່ຕ້ອງການ ເພື່ອເສີມສ້າງຄວາມເຂັ້ມແຂງ ຍຸດທະສາດທີ່ປົກປ້ອງສິດທິ ຂອງຜູ້ຍ້າຍຖິ່ນ ແລະ ສົ່ງເສີມກາລະໂອກາດສຳລັບຜູ້ຍ້າຍຖິ່ນ, ເພື່ອສ້າງກົນໄກລະດັບໂລກ ເພື່ອປະສານງານການຍ້າຍຖິ່ນທາງເສດຖະກິດ (ໂດຍສະໝັກໃຈ) ແລະ ເພື່ອອຳນວຍຄວາມສະດວກການຂໍລີ້ໄພ ທີ່ຮັບປະກັນສຳລັບບຸກຄົນທີ່ຍ້າຍຖິ່ນໂດຍຖືກບັງຄັບ. ອົງການສາ ກົນ

ສໍາລັບຍ້າຍຖິ່ນຖານ ໄດ້ເຂົ້າຮ່ວມໃນລະບົບຂອງອົງການສະຫະປະຊາຊາດຢ່າງເປັນທາງການ ໃນເດືອນກັນຍາ 2016 ແລະ ວຽກງານ ແລະ ບາດກ້າວຂອງອົງການນີ້ ໄດ້ຮັບການຄາດໝາຍວ່າ ຈະຂະຫຍາຍກວ້າງຂຶ້ນ ແລະ ກ້າວໄປຂ້າງໜ້າ..

## ຮັບປະກັນຄວາມສະເໝີພາບທີ່ໃຫຍ່ຂຶ້ນ ແລະ ຄວາມຊອບທໍາຂອງສະຖາບັນແບບພະຫຸພາຄີ

ການເວລາ ໄດ້ມາຮອດແລ້ວ ເພື່ອກວດກາ ການເປັນຕົວແທນ, ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ ຂອງສະຖາບັນແບບພະຫຸພາຄີ.. ທາງເລືອກ ຂອງນະໂຍບາຍບາງຢ່າງ ທີ່ຈະເຄື່ອນຍ້າຍສະຖາບັນເຫຼົ່ານີ້ ໄປສູ່ຄວາມສະເໝີພາບ ທີ່ໃຫຍ່ຂຶ້ນ ແລະ ຄວາມຊອບທໍາ ແມ່ນເພີ່ມທະວີ ສິດສຽງປະເທດທີ່ກໍາລັງພັດທະນາ ໃນອົງການຈັດຕັ້ງແບບພະຫຸພາຄີ ແລະ ເພີ່ມທະວີ ການປະສານງານ ແລະ ປະສິດທິຜົນ ເພື່ອບັນລຸເປົ້າໝາຍ ທີ່ຍຶດຖືເອົາຄົນເປັນໃຈກາງ.

## ການປະສານງານດ້ານພາສີອາກອນ ແລະ ການຕິດຕາມດ້ານການເງິນໃນທົ່ວໂລກ

ການກ້າວໄປສູ່ ການແລກປ່ຽນຂໍ້ມູນ-ຂ່າວສານ ແບບອັດຕະໂນມັດ ໃນລະດັບໂລກ (ດັ່ງເຊັ່ນ ການລົງທະບຽນທາງການເງິນລະດັບໂລກ) ຈະອໍານວຍ ຄວາມສະດວກ ວຽກງານຂອງໜ່ວຍງານພາສີ-ອາກອນ ແລະ ຄຸ້ມຄອງ ໃນການຕິດຕາມລາຍຮັບ ແລະ ກວດກາ ກະແສການໄຫຼວຽນທາງດ້ານການເງິນທີ່ຜິດກົດໝາຍ, ຊຶ່ງອາດຖືກລະດົມສໍາລັບການພັດທະນາມະນຸດ. ສິ່ງດັ່ງກ່າວນີ້ ຈະຮຽກຮ້ອງ ການເພີ່ມທະວີ ຂີດຄວາມສາມາດດ້ານວິຊາການ ຂອງບັນດາປະເທດ ເພື່ອປະມວນຜົນຂໍ້ມູນ-ຂ່າວສານ ແລະ ຈັດຕັ້ງປະຕິບັດ ນະໂຍບາຍທີ່ຫ້າວຫັນ ຕ້ານການໜີພາສີ, ການຫຼົບຫຼີກພາສີອາກອນ ແລະ ກະແສໄຫຼວຽນເງິນທີ່ຜິດກົດໝາຍ.

## ສ້າງໃຫ້ເສດຖະກິດໂລກມີຄວາມຍືນຍົງ

ກິດຈະກໍາການພັດທະນາແບບຍືນຍົງ ຢູ່ໃນລະດັບປະເທດ ຕ້ອງຖືກຕື່ມເຕັມ ເຂົ້າກັບປະຕິບັດການ ໃນລະດັບໂລກ. ການຄວບຄຸມ ພາວະໂລກຮ້ອນແມ່ນເປັນໄປໄດ້. ການປະຕິບັດການ ໃນລະດັບໂລກທີ່ປະສານຮ່ວມມື ໄດ້ສົ່ງຜົນທີ່ດີໃນອະດີດ, ດັ່ງເຊັ່ນ ໃນມາດຕະການເພື່ອຢັບຢັ້ງ ການສູນສິ້ນຊັ້ນໂອໂຊນ ໃນຊຸມປີ 1990.

ການສືບຕໍ່ ການສົ່ງເສີມ ແລະ ການສື່ສານ ກ່ຽວກັບຄວາມຕ້ອງການເພື່ອແກ້ໄຂການປ່ຽນແປງດິນຟ້າອາກາດ ແລະ ປົກປ້ອງ ສິ່ງແວດລ້ອມ ແມ່ນສິ່ງຈໍາເປັນ ເພື່ອເຕົ້າໂຮມ ການສະໜັບສະໜູນ ຈາກຜູ້ມີສ່ວນກ່ຽວຂ້ອງທັງຫຼາຍ (ລວມທັງທະນາຄານພັດທະນາທີ່ຮ່ວມມືກັນຫລາຍຝ່າຍ). ທະນາຄານພັດທະນາໃໝ່ ທີ່ສ້າງຕັ້ງຂຶ້ນ ເມື່ອບໍ່ດົນມານີ້ ໄດ້ໃຫ້ຄໍາໝັ້ນສັນຍາຢ່າງແຈ່ມແຈ້ງ ທີ່ຈະໃຫ້ບູລິມະສິດຕໍ່ໂຄງການພະລັງງານສະອາດ.

## ຮັບປະກັນ ການສະໜອງທຶນເປັນຢ່າງດີ ໃຫ້ແກ່ ພະຫຸພາຄີນິຍົມ ແລະ ການຮ່ວມມື

ທະນາຄານພັດທະນາແບບຫຼາຍຝ່າຍ ແລະ ພາກພື້ນ ສາມາດເພີ່ມທະວີ ບາດກ້າວ ເພື່ອແກ້ໄຂສິ່ງທ້າທາຍຫຼາຍຢ່າງ ຂອງໂລກາພິວັດ. ການເພີ່ມຫຼາຍຂຶ້ນ ຂອງການຊ່ວຍເຫຼືອເປັນທາງການເພື່ອການພັດທະນາ ທີ່ມາຈາກ ແຫຼ່ງຜູ້ໃຫ້ທຶນດັ່ງເດີມ, ການ

ຂະຫຍາຍກວ້າງການມີສ່ວນຮ່ວມຂອງປະເທດທີ່ກຳລັງພັດທະນາ ຜ່ານທາງການຮ່ວມມືລະຫວ່າງໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ ແລະ ການສຳຫຼວດທາງເລືອກ ແບບປະດິດສ້າງ ສຳລັບການສະໜອງທຶນ ຈະເປັນປະໂຫຍດ.

### ປ້ອງກັນຄວາມປອດໄພຂອງມະນຸດໃນທົ່ວໂລກ

ໃນທັດສະນະໜຶ່ງ ຂອງການພັດທະນາມະນຸດ, ຄວາມຊ່ວຍເຫຼືອ ໃນການເຫດການສຸກເສີນ ແລະ ວິກິດຂອງມະນຸດ ແມ່ນພັນທະໜ້າທີ່ທາງດ້ານຈາລິຍະທຳ. ໃນກໍລະນີເຊັ່ນນັ້ນ ວິທີແກ້ບັນຫາທີ່ນຳສະເໜີ ປະກອບດ້ວຍ ການປັບປ່ຽນໂຄງສ້າງໃໝ່ກົນໄກໃນປັດຈຸບັນ ໄປສູ່ການປ້ອງກັນ ເສີມເຕີມໃສ່ ການຮັບມືໃນໄລຍະສັ້ນ ຕໍ່ການກະທົບຮຸນແຮງ, ກຳນົດເປັນບູລິມະສິດການດຳເນີນງານພາກສະໜາມ ແລະ ປະສານຮ່ວມມືໃຫ້ດີຫຼາຍຂຶ້ນ ທັງພາຍໃນ ແລະ ກັບພາຍນອກ ຮ່ວມກັບການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ.

### ສົ່ງເສີມການມີສ່ວນຮ່ວມ ທີ່ຫລວງຫລາຍ ແລະ ດີຂຶ້ນ ຂອງການຈັດຕັ້ງທາງສັງຄົມ ໃນທົ່ວໂລກ

ເພື່ອນຳໃຊ້ປະໂຫຍດ ທ່າແຮງ ຂອງການຈັດຕັ້ງທາງສັງຄົມ ຮຽກຮ້ອງການຂະຫຍາຍກວ້າງ ກົນໄກເພື່ອໃຫ້ມັນ ມີສ່ວນຮ່ວມໃນສະຖາບັນແບບຫຼາຍຝ່າຍ; ການຍົກລະດັບຄວາມໂປ່ງໃສ ແລະຄວາມຮັບຜິດຊອບຂອງສະຖາບັນແບບຫຼາຍຝ່າຍ; ການສົ່ງເສີມ ແລະ ສະໜັບສະໜູນການມີສ່ວນ ເຄືອຂ່າຍການຈັດຕັ້ງທາງສັງຄົມໃນທົ່ວໂລກທີ່ເລັງໃສ່ ກຸ່ມຄົນ ດັ່ງເຊັ່ນ ແມ່ຍິງ, ຊາວໜຸ່ມ ແລະ ຊົນເຜົ່າກຸ່ມນ້ອຍ; ການເພີ່ມທະວີຄວາມຄ່ອງຕົວການໄຫຼວຽນຢ່າງເສລີຂອງຂໍ້ມູນຂ່າວສານ ແລະ ຄວາມຮູ້ຜ່ານທາງກົນໄກ ຂອງຄວາມໂປ່ງໃສ ຢ່າງບໍ່ຢຸດຢັ້ງ ແລະ ການປົກປ້ອງ ວຽກງານໜັງສືພິມແນວສືບສວນລະດັບສາກົນ.

## ວາລະການປະຕິບັດງານ

ການພັດທະນາມະນຸດສຳລັບໝົດທຸກຄົນ ບໍ່ແມ່ນຄວາມຝັນ; ມັນແມ່ນເປົ້າໝາຍ ທີ່ສາມາດເປັນຈິງໄດ້; ພວກເຮົາສາມາດສ້າງສົມໃສ່ ສິ່ງທີ່ພວກເຮົາບັນລຸໄດ້. ພວກເຮົາ ສາມາດສຳຫຼວດ ຄວາມເປັນໄປໄດ້ອັນໃໝ່ ທີ່ຈະເອົາຊະນະ ສິ່ງທ້າທາຍ. ພວກເຮົາ ສາມາດໄປຮອດ ສິ່ງທີ່ໃນເມື່ອກ່ອນ ເບິ່ງຄ້າຍກັບວ່າ ບໍ່ສາມາດທີ່ຈະບັນລຸໄດ້, ສຳລັບ ສິ່ງທີ່ຄ້າຍກັບ ວ່າຈະເປັນສິ່ງທ້າທາຍໃນມື້ນີ້ ສາມາດເອົາຊະນະໄດ້ໃນວັນໜ້າ. ການບັນລຸໄດ້ ໃນຄວາມຫວັງ ຂອງພວກເຮົາ ແມ່ນຢູ່ພາຍໃນໄລຍະທີ່ພວກເຮົາຍື້ເຖິງ. ພະນະທ່ານ ຮອນ ມານູເອລ ຊານໂຕສ, ປະທານາທິບໍດີ ຂອງປະເທດໂຄລອມເບຍ ແລະ ຜູ້ໄດ້ຮັບລາງ ວັນໂນເບລ ສາຂາສັນຕິພາບ ປີ 2016 ຢືນຢັນໃນຄວາມຫວັງ ຂອງການບັນລຸໃນໂລກ ທີ່ມີຄວາມສະຫງົບສັນຕິ ແລະ ຈະເລີນຮຸ່ງເຮືອງ (ເບິ່ງຢູ່ບົດຄວາມພິເສດ).

ວາລະ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນບາດກ້າວສຳຄັນ ໄປສູ່ການພັດທະນາມະນຸດ ສ□າລັບໝົດທຸກຄົນ. ເລີ່ມຕົ້ນຈາກການວິເຄາະ ແລະ ຂໍ້ສະຫຼຸບຂອງມັນ, ບົດລາຍງານ ສະເໜີວາລະການດຳເນີນງານ ຫ້າຂໍ້ເພື່ອຮັບປະກັນການພັດທະນາມະນຸດສຳລັບໝົດທຸກຄົນ. ບາດກ້າວດຳເນີນງານ ປົກຄຸມປະເດັນ ນະໂຍບາຍ ແລະ ຄຳໝັ້ນສັນຍາລະ ດັບໂລກ.

### ການບົ່ງຊີ້ພວກທີ່ປະເຊີນຄວາມຂາດແຄນໃນການພັດທະນາມະນຸດ ແລະ ການສ້າງແຜນທີ່ຖິ່ນຢູ່ອາໄສຂອງເຂົາເຈົ້າ

ການບົ່ງຊີ້ ບັນດາຜູ້ທີ່ຖືກປະປ່ອຍ ຈາກຄວາມກ້າວໜ້າຂອງການພັດທະນາມະນຸດ ແລະ ການສ້າງແຜນທີ່ຖິ່ນຢູ່ອາໄສຂອງເຂົາເຈົ້າ ແມ່ນສິ່ງຈຳເປັນ ສ□າລັບການສະໜັບສະໜູນ ທີ່ເປັນປະໂຫຍດ ແລະ ການສ້າງນະໂຍບາຍສາທາລະນະທີ່ມີປະສິດທິຜົນ. ການສ້າງແຜນທີ່ດັ່ງກ່າວນີ້ ສາມາດຊ່ວຍນັກເຄື່ອນໄຫວດ້ານການພັດທະນາ ທີ່ຈະຮຽກຮ້ອງ ເອົາບາດກ້າວດຳເນີນງານ ແລະ ຊີ້ນຳຜູ້ສ້າງນະໂຍບາຍໃນການກຳນົດ ແລະ ຈັດຕັ້ງປະຕິບັດນະໂຍບາຍ ເພື່ອປັບປຸງຊີວິດການເປັນຢູ່ທີ່ດີຂອງກຸ່ມທີ່ດ້ອຍໂອກາດ ແລະ ຢູ່ໃນສະພາບທີ່ມີຄວາມສ່ຽງ.

## **ດຳເນີນການແບບສອດຄ່ອງ ຂົງເຂດຂອງທາງເລືອກດ້ານນະໂຍບາຍທີ່ມີຢູ່**

ການພັດທະນາມະນຸດສຳລັບໝົດທຸກຄົນ ຕ້ອງການ ຊຸດທີ່ມີຫລາຍງ່າມ ຂອງທາງເລືອກດ້ານນະໂຍບາຍແຫ່ງຊາດ: ການແຫດເຖິງ ຜູ້ທີ່ຖືກປະປ່ອຍ ໂດຍການນຳໃຊ້ນະໂຍບາຍທີ່ເປັນສາກົນ, ດຳເນີນມາດຕະການສຳລັບກຸ່ມທີ່ມີຄວາມຕ້ອງການ ເປັນພິເສດ, ສ້າງໃຫ້ການພັດທະນາມະນຸດເປັນແບບປັບຕົວໄດ້ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຜູ້ທີ່ຖືກປະປ່ອຍ.

ສະຖານະການ ຂອງປະເທດ ແຕກຕ່າງກັນໄປ, ເພາະສະນັ້ນ ທາງເລືອກດ້ານນະໂຍບາຍ ຕ້ອງຖືກອອກແບບສຳລັບແຕ່ລະປະເທດ. ນະໂຍບາຍໃນແຕ່ລະປະເທດ ຕ້ອງໄດ້ເຮັດໃຫ້ສຳເລັດລຸລ່ວງ ໃນທິດທາງທີ່ສອດຄ່ອງກັນ ຜ່ານທາງການເຂົ້າມີສ່ວນຂອງຜູ້ມີສ່ວນກ່ຽວຂ້ອງຫລາຍຝ່າຍ, ການດັດປັບໃຫ້ເຂົ້າກັບທ້ອງຖິ່ນ ແລະ ເຂດພາກ (ທົ່ວທັງ ບ່ອນທີ່ໂດດດ່ຽວຈາກພາກສ່ວນອື່ນໃນລະບົບ (silos)) ແລະ ລວງດຽວໃນສາຍຕັ້ງ (ສຳລັບຄວາມກົມກຽວ ໃນລະດັບສາກົນ ແລະ ທົ່ວໂລກ).

### ຖົມຊ່ອງວ່າງໃນບົດບາດຍິງ-ຊາຍ

ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແມ່ນມິຕິຂັ້ນພື້ນຖານຂອງການພັດທະນາມະນຸດ. ຊ່ອງວ່າງບົດບາດຍິງ-ຊາຍ ມີຢູ່ໃນລະດັບຂີດຄວາມສາມາດ ດັ່ງດຽວກັນກັບ ກາລະໂອກາດ ແລະ ຄວາມກ້າວໜ້າ ຍັງແມ່ນຊັກຊ້າໂພດ ສ□າລັບການບັນລຸທ່າແຮງຢ່າງເຕັມສ່ວນ ຂອງຈຳນວນເຄິ່ງໜຶ່ງຂອງມວນມະນຸດຊາດ.

ຢູ່ໃນການເຕົ້າໂຮມຄັ້ງປະຫວັດສາດ ຢູ່ມະຫານະຄອນນິວຢອກ ໃນເດືອນກັນຍາ 2015, ການນຳລະດັບໂລກ ປະມານ 80 ກວ່າທ່ານ ໄດ້ໃຫ້ຄຳໝັ້ນສັນຍາ ທີ່ຈະລຶບລ້າງການຈຳແນກຕໍ່ແມ່ຍິງພາຍ ໃນປີ 2030 ແລະ ໄດ້ປະກາດບາດກ້າວດຳເນີນງານທີ່ເປັນຮູບປະທຳ ແລະ ວັດແທກໄດ້ ເພື່ອເລີ່ມຕົ້ນຄັ້ງປະຖົມມະລຶກ ການປ່ຽນແປງທີ່ໄວອາ.[50] ປັດຈຸບັນ ແມ່ນເວລາທີ່ຈະດຳເນີນການ ກ່ຽວກັບສິ່ງທີ່ໄດ້ໃຫ້ຄຳໝັ້ນສັນຍາ ແລະ ຕົກລົງກັນແລ້ວ.

### ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ແລະ ຂໍ້ຕົກລົງລະດັບໂລກອື່ນໆ

ເປົ້າໝາຍການພັດທະນາແບບຍືນຍົງ, ສິ່ງຈຳເປັນໃນກະໂຕມັນເອງ, ຍັງແມ່ນສິ່ງສຳຄັນຢ່າງຍິ່ງ ສ□າລັບການພັດທະນາມະນຸດ ສຳລັບໝົດທຸກຄົນ; ວາລະ 2030 ແລະ ແນວທາງການພັດທະນາມະນຸດແມ່ນເສີມສ້າງຊຶ່ງກັນ ແລະ ກັນ. ນອກຈາກນີ້, ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແມ່ນບາດກ້າວສຳຄັນອັນໜຶ່ງ ສຳລັບມະນຸດທຸກຖ້ວນໜ້າ ເພື່ອເຮັດໃຫ້ເປັນຈິງ ທ່າແຮງບົ່ມຊ້ອນຂອງຊີວິດຂອງເຂົາເຈົ້າໄດ້ຢ່າງເຕັມສ່ວນ.

ຂໍ້ຄວາມຕົກລົງປາຣີວ່າດ້ວຍການປ່ຽນແປງດິນຟ້າອາກາດ ຄັ້ງປະຫັວດສາດ ແມ່ນຂໍ້ຕົກລົງຄັ້ງທໍາອິດ ທີ່ພິຈາລະນາທັງປະເທດທີ່ພັດທະນາແລ້ວ ແລະ ປະເທດທີ່ກໍາລັງພັດທະນາ ຢູ່ໃນຂອບແຜນງານອັນດຽວກັນ (ຫຼື ຮ່ວມກັນ), ຊຸກຍູ້ເຂົາເຈົ້າທັງໝົດເພື່ອໃຊ້ຄວາມພະຍາຍາມທີ່ດີສຸດຂອງເຂົາເຈົ້າ ແລະ ເສີມສ້າງຄວາມແຂງແກ່ນ (ຫຼື ກໍາລັງ) ຄໍາໝັ້ນສັນຍາຂອງເຂົາເຈົ້າໃນຊຸມປີຕໍ່ໜ້າ. ກອງປະຊຸມສຸດຍອດສໍາລັບຊາວອົບພະຍົບຂອງອົງການສະຫະປະຊາຊາດໃນເດືອນກັນຍາ 2016 ໄດ້ເຮັດຄໍາໝັ້ນສັນຍາທີ່ອາດຫານ ເພື່ອແກ້ໄຂບັນຫາທີ່ຊາວອົບພະຍົບປະເຊີນຢູ່ ແລະ ຄົນຍ້າຍຖິ່ນຖານ ແລະ ເພື່ອກຽມພ້ອມສໍາລັບສິ່ງທ້າທາຍໃນອະນາຄົດ. ປະຊາຄົມສາກົນ, ລັດຖະບານປະເທດຕ່າງໆ ແລະ ຝ່າຍອື່ນໆທັງໝົດ ຕ້ອງຮັບປະກັນວ່າຂໍ້ຕົກລົງ ໄດ້ຮັບການເຄົາລົບ, ຈັດຕັ້ງປະຕິບັດ ແລະ ຕິດຕາມ.

## ດໍາເນີນການໄປສູ່ການປະຕິຮູບໃນລະບົບໃນທົ່ວໂລກ

ເພື່ອກ້າວໄປສູ່ລະບົບໃນທົ່ວໂລກທີ່ສະເໝີພາບ, ວາລະຂອງການປະຕິຮູບທາງສະຖາບັນໃນທົ່ວໂລກ ຄວນຈະເລັງໃສ່ການຕະຫຼາດໂລກ ແລະ ລະບຽບການຂອງມັນ, ກ່ຽວກັບການປົກຄອງຂອງສະຖາບັນຫຼາຍຝ່າຍ ແລະ ກ່ຽວກັບການ ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງທາງສັງຄົມໃນທົ່ວໂລກ. ວາລະການປະຕິຮູບດັ່ງກ່າວນັ້ນ ຄວນໄດ້ຮັບການສະໜັບສະໜູນສິ່ງເສີມຢ່າງແຂ່ງຂັນ ແລະ ຢ່າງບໍ່ປ່ຽນແປງ (ຫຼື ຢ່າງໝັ້ນຄົງ) ໂດຍການຄໍ້າໜູນການສະໜັບສະໜູນຂອງສາທາລະນະ, ການສ້າງພັນທະພາບລະຫວ່າງບັນດາຜູ້ມີສ່ວນກ່ຽວຂ້ອງ ແລະ ການຍູ້ດັນຜ່ານທາງວາລະສໍາລັບການປະຕິຮູບ.

## ວາລະ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນສິ່ງສໍາຄັນຢ່າງຍິ່ງ ສ□າລັບການພັດທະນາມະນຸດ ສໍາລັບໝົດທຸກຄົນ

ໃນທັດສະນະຂອງການພັດທະນາມະນຸດ, ພວກເຮົາຕ້ອງການໂລກ ຊຶ່ງມະນຸດຊາດທັງໝົດມີ ອິດສະລະພາບເພື່ອບັນລຸໄດ້ທ່າແຮງບົ່ມຊ້ອນໃນຊີວິດຢ່າງເຕັມສ່ວນ ເພື່ອວ່າເຂົາເຈົ້າສາມາດໄປເຖິງ ສິ່ງທີ່ເຂົາເຈົ້ານັບຖືຄຸນຄ່າ. ໃນການວິເຄາະທ້າຍສຸດ, ການພັດທະນາແມ່ນຂອງປະຊາຊົນ ໂດຍປະຊາຊົນ ແລະ ສໍາລັບປະຊາຊົນ. ປະຊາຊົນ ຕ້ອງໄດ້ເປັນຄູ່ຮ່ວມມືເຊິ່ງກັນ ແລະ ກັນ. ມີຄວາມຕ້ອງການທີ່ ຈະມີການດຸ່ນດ່ຽງລະຫວ່າງປະຊາຊົນ ແລະ ໜ່ວຍໂລກ. ມວນມະນຸດຊາດ ຈະໄດ້ຝ່າຟັນສໍາລັບສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງ.

ການພັດທະນາມະນຸດ ຮຽກຮ້ອງ ການຮັບຮູ້ວ່າ ແຕ່ລະຊີວິດມີຄຸນຄ່າເທົ່າທຽມກັນ ແລະ ວ່າການພັດທະນາມະນຸດສໍາລັບໝົດທຸກຄົນ ຕ້ອງເລີ່ມຕົ້ນກັບຜູ້ທີ່ຖືກປະປ່ອຍໄວ້ຢູ່ທາງຫຼັງໄກສຸດ.

ບົດລາຍງານການພະນາມະນຸດ ປີ 2016 ແມ່ນການປະກອບສ່ວນດ້ານສະຕິປັນຍາ ເພື່ອແກ້ໄຂບັນຫາເຫຼົ່ານີ້. ພວກເຮົາເຊື່ອໝັ້ນຢ່າງແຮງກ້າວ່າ ພາຍຫຼັງທີ່ພວກມັນຖືກແກ້ໄຂເທົ່ານັ້ນ ພວກເຮົາທັງໝົດ ຈະໄປເຖິງປາຍເສັ້ນທາງພ້ອມກັນ. ແລະເມື່ອພວກເຮົາ ຫຼຽວຄືນຫຼັງ, ພວກເຮົາ ຈະເຫັນວ່າ ບໍ່ມີໃຜຜູ້ໃດຖືກປະປ່ອຍໄວ້ຢູ່ທາງຫຼັງ.

## ບົດຄວາມພິເສດ



### ສັນຕິພາບ ຢູ່ປະເທດໂຄລອມເບຍ ຍັງແມ່ນສັນຕິພາບສໍາລັບໂລກເຊັ່ນກັນ

ຢູ່ປະເທດໂຄລົມເບຍ ພວກຂ້າພະເຈົ້າ ໄດ້ຕັດສິນໃຈຫຼາຍຂຶ້ນກວ່າຍາມໃດໆ ເພື່ອຢຸດຕິ ການຕໍ່ສູ້ທາງອາວຸດພາຍໃນປະເທດ ທີ່ຍາວນານກວ່າໝູ່ ແລະ ຍັງເຫຼືອເປັນພຽງແຫ່ງດຽວ ຢູ່ທະວີບອາເມລິກາ.

ປະຊາກອນຊາວໂຄລອມເບຍ ແຍກກັນເປັນຫຼາຍຝ່າຍ ໃນເລື່ອງຂໍ້ຕົກລົງທີ່ໄດ້ເຈລະຈາກັນ ລະຫວ່າງຝ່າຍລັດຖະບານ ແລະ ຝ່າຍກອງກໍາລັງປະຕິວັດຕິດອາວຸດໂຄລອມເບຍ (ຫຼື FARC). ເມື່ອເປັນເຊັ່ນນັ້ນ, ພວກຂ້າພະເຈົ້າ ໄດ້ດໍາເນີນຄວາມພະຍາຍາມເພື່ອບັນລຸຂໍ້ຕົກ ລົງຮ່ວມກັນ ສະບັບໃໝ່ ທີ່ຈະປັດເປົ່າຄວາມສົງໄສ ແລະ ລວບລວມການສະໜັບສະໜູນໃນທົ່ວປະເທດ. ເກືອບຈະພ້ອມດຽວກັນນັ້ນ, ພວກຂ້າພະເຈົ້າ ໄດ້ປະກາດການເລີ່ມຕົ້ນ ເຈລະຈາສັນຕິພາບຮ່ວມກັນ ກອງກໍາລັງຕິດອາວຸດ ELN, ກຸ່ມສຸດທ້າຍ ທີ່ຍັງເຫຼືອຢູ່. ພວກຂ້າພະເຈົ້າ ຫວັງວ່າ ສິ່ງດັ່ງກ່າວນີ້ ຈະນໍາມາຊຶ່ງການສິ້ນສຸດ ຢ່າງຖາວອນ ການຕໍ່ສູ້ຂັດແຍ້ງໃຊ້ກໍາລັງອາວຸດໃນປະເທດຂອງພວກເຮົາ.

ຕະຫຼອດເວລາຫ້າທົດສະຫວັດ: ເສິກສົງຄາມ ໄດ້ສ້າງຄວາມເສຍຫາຍມູນຄ່າສູງທີ່ສຸດ ສໍາລັບປະເທດໂຄລອມເບຍ ແລະ ໄດ້ສິ່ງຜົນຮ້າຍຢ່າງບໍ່ຕ້ອງສົງໄສ ຕໍ່ໂອກາດຂອງຊາດ. ການສຶກສາ ທີ່ດໍາເນີນການ ໂດຍມະຫາວິທະຍາໄລ ລອສແອນເດັສ (ຫຼື Andes University) ປະເມີນວ່າ ຄົວເຮືອນທີ່ຕົກເປັນຜູ້ເຄາະຮ້າຍຂອງການຍົກຍ້າຍຖິ່ນໂດຍຖືກບັງຄັບ ແລະ ຄວາມຮຸນແຮງ ເຫັນດ້ວຍຕາ ວ່າລາຍໄດ້ຂອງເຂົາເຈົ້າ ໄດ້ຫຼຸດລົງ ຍັງເຫຼືອແຕ່ເຄິ່ງໜຶ່ງ. ສິ່ງດັ່ງກ່າວນີ້ ຖືກຊໍ້າໜັກຕື່ມ ເມື່ອເວລາມີຜູ້ໃດໜຶ່ງ ພິຈາລະນາວ່າ ບຸກຄົນເຫຼົ່ານີ້ ແມ່ນແນ່ ນອນ ຈະມີຄວາມຫຍຸ້ງຍາກ ໃນການຟື້ນຄືນສະພາບ ແລະ ຢູ່ໃນສະພາບຄວາມສ່ຽງ ຂອງການດໍາລົງຊີວິດໃນສະພາບເງື່ອນໄຂຂອງຄວາມທຸກຍາກແບບຊໍາເຮື້ອ.

ນອກເໜືອ ຈາກຜົນກະທົບຕໍ່ເສດຖະກິດ ຂອງພວກເຮົາ, ຜົນສະທ້ອນທີ່ໃຫຍ່ຫຼວງ ຂອງສົງຄາມຕົກທອດໃສ່ ຫຼາຍກວ່າ 250.000 ຄົນ ທີ່ໄດ້ເສຍຊີວິດ ຫຼື ໄດ້ຮັບບາດເຈັບ ແລະ ຄອບຄົວຂອງເຂົາເຈົ້າ ແລະ ຜູ້ເຄາະຮ້າຍຈໍານວນ 8 ລ້ານ ແລະ ຜູ້ອົບພະຍົບລີ້ໄພພາຍໃນປະເທດ. ແຕ່ລະຊີວິດທີ່ຫຼົ້ມຕາຍ, ດັ່ງດຽວກັນກັບແຕ່ລະ ແລະ ທຸກຖ້ວນໜ້າ ຂອງຊະຕາກໍາສ່ວນບຸກຄົນ ແລະ ຄອບຄົວຂອງບັນດາເຫຼົ່າທີ່ຖືກກະທົບ ໂດຍການຕໍ່ສູ້ທາງກໍາລັງອາວຸດ ແລະ ທີ່ມີຊີວິດລອດ, ທັງສອງຢ່າງນີ້ ເຮັດໃຫ້ພວກເຮົາ ເສົ້າສະຫຼົດໃຈ ແລະ ຍັງສ້າງຄວາມເຂັ້ມແຂງໃຫ້ແກ່ຄໍາໝັ້ນສັນຍາຂອງພວກຂ້າພະເຈົ້າເຊັ່ນກັນ.

ພວກຂ້າພະເຈົ້າ ເຫັນພ້ອມກັບເນື້ອໃນຈິດໃຈ ຂອງບົດລາຍງານການພັດທະນາມະນຸດສະບັບນີ້, ຊຶ່ງແມ່ນທີ່ວ່າ “ຄວາມຮັ່ງມີຂອງຊີວິດມະນຸດ” ຕ້ອງໄດ້ຮັບການພິຈາລະນາກ່ອນ ຄວາມຮັ່ງມີທາງດ້ານເສດຖະກິດ ໃນເວລາລົງຄໍາເຫັນ ຄວາມຈະເລີນຮຸ່ງເຮືອງຂອງສັງ ຄົມ...ໃນຄວາມໝາຍນັ້ນ ພວກຂ້າພະເຈົ້າ ເຂົ້າໃຈວ່າ ສັນຕິພາບ ແມ່ນເງື່ອນໄຂພື້ນຖານ ສໍາລັບການເພີ່ມພູນຊີວິດຂອງຊາວໂຄລອມເບຍ. ອີກຢ່າງ ຂ້າພະເຈົ້າ ກ່າວເຖິງ ມະໂນພາບທີ່ກວ້າງຂວາງ ຂອງສັນຕິພາບ ທີ່ຢູ່ເໜືອກວ່າການສິ້ນສຸດ ຂອງຄວາມຂັດແຍ້ງ ແລະ ການນໍາມາຊຶ່ງຄວາມກົມກຽວ ແລະ ຊີວິດການເປັນຢູ່ທີ່ດີ.

ຄອບຄົວໜຶ່ງ ທີ່ມີລາຍໄດ້ບໍ່ພຽງພໍ ບໍ່ດໍາລົງຊີວິດທ່າມກາງສັນຕິພາບ, ເຊັ່ນດຽວກັບຄອບຄົວ ທີ່ປາດສະຈາກບ້ານເຮືອນທີ່ເໝາະສົມ ຫຼື ການເຂົ້າເຖິງໃນການສຶກສາ. ສິ່ງນີ້ແມ່ນສາເຫດທີ່ພວກຂ້າພະເຈົ້າ ໄດ້ເລັງໃສ່ການສົ່ງເສີມການເຕີບໂຕ ທາງເສດຖະກິດ ທີ່ອໍານວຍປະໂຫຍດໃຫ້ຄົນທຸກຖ້ວນໜ້າ ແລະ ທີ່ຫຼຸດຜ່ອນລົງ ຊ່ອງວ່າງທາງສັງຄົມ.

ຄວາມຄືບໜ້າທີ່ ພວກຂ້າພະເຈົ້າ ໄດ້ບັນລຸມາຮອດປັດຈຸບັນ ແມ່ນໃນທິດທາງດຽວກັບເປົ້າໝາຍການພັດທະນາແບບຍືນຍົງ ທີ່ປະເທດໂຄລອມເບຍ ສະໜັບສະໜູນ ແລະ ເລີ່ມຕົ້ນລົງມືດຳເນີນການ ແຕ່ກ່ອນໜ້າທີ່ ພວກມັນ ຈະຖືກຮັບຮອງເອົາໂດຍອົງການສະຫະປະຊາຊາດ. ໂດຍແທ້ຈິງແລ້ວ ປະເທດ ພວກຂ້າພະເຈົ້າ ເປັນປະເທດທຳອິດ ທີ່ລວມເອົາເປົ້າໝາຍເຫຼົ່ານີ້ເຂົ້າໃນແຜນພັດທະນາແຫ່ງຊາດຂອງປະເທດພວກຂ້າພະເຈົ້າ.

ຍ້ອນມີຄວາມພະຍາຍາມແຕ່ຫົວທີ ຂອງພວກເຮົາ, ພວກຂ້າພະເຈົ້າ ຈຶ່ງສາມາດເກັບກ່ຽວຜົນປະໂຫຍດ ຂອງວຽກງານຂອງພວກເຮົາ ກ່ອນໜ້າກຳນົດເວລາ. ຍົກຕົວຢ່າງ, ຕະຫຼອດໄລຍະຫ້າປີ ຜ່ານມາ ພວກຂ້າພະເຈົ້າ ໄດ້ຫຼຸດຜ່ອນຄວາມທຸກຍາກ ລົງໄດ້ເກືອບເຄິ່ງໜຶ່ງ - ຈາກ 14.4 ສ່ວນຮ້ອຍ ມາເປັນ 7.9 ສ່ວນຮ້ອຍ - ການບັນລຸຜົນ ທີ່ເປັນແກ່ນສານ ທີ່ອຳນວຍພວກຂ້າພະເຈົ້າ ທີ່ຈະຄາດຫວັງການລຶບລ້າງຄວາມທຸກຍາກ ພາຍໃນປີ 2025, ຫລືວ່າຈະໄວກວ່ານັ້ນ.

ການກ້າວກະໂດດດັ່ງກ່າວນັ້ນ, ນອກເໜືອຈາກຕົວເລກ, ໝາຍຄວາມວ່າຊາວໂຄລອມເບຍ ຈຳນວນຫຼາຍລ້ານຄົນ ໄດ້ປັບປຸງຄຸນນະ ພາບຊີວິດຂອງເຂົາເຈົ້າ. ພວກຂ້າພະເຈົ້າ ໝັ້ນໃຈ ໃນສິ່ງດັ່ງກ່າວ ຍ້ອນວ່າ ພ້ອມດຽວກັບ ມາດຕະການ ທີ່ອີງໃສ່ລາຍໄດ້ແບບດັ່ງເດີມຂອງຄວາມທຸກຍາກ, ພວກຂ້າພະເຈົ້າ ໄດ້ບຸກເບີກ (ຫຼື ລິເລີ່ມ) ດັດຊະນີຄວາມທຸກຍາກແບບຫຼາຍມິຕິ, ຊຶ່ງປະເມີນຄ່າຕົວແປອື່ນໆ. ດັ່ງເຊັ່ນການເຂົ້າເຖິງການບໍລິການສາທາລະນະ ຫຼື ປະເພດຂອງບ້ານເຮືອນສຳລັບຄອບຄົວ. ໃນວັນນີ້, ປາດສະຈາກ ຄວາມສົງໄສ, ຊາວໂຄລອມເບຍ ຈ□ານວນຫຼາຍຂຶ້ນ ມີຊີວິດທີ່ດີກວ່າເມື່ອກ່ອນ.

ພວກຂ້າພະເຈົ້າ ຍັງໄດ້ບັນລຸຄວາມຄືບໜ້າແຕ່ຕົ້ນ ໃນຄຸນນະພາບຂອງການສຶກສາ - ອີກໜຶ່ງ ເປົ້າໝາຍການພັດທະນາແບບຍືນຍົງ. ບໍ່ພຽງແຕ່ເດັກນ້ອຍ ແລະ ຊາວໜຸ່ມທັງໝົດ ໄດ້ເຂົ້າຮຽນຢູ່ໂຮງຮຽນລັດ ໂດຍບໍ່ເສຍຄ່າ, ພວກຂ້າພະເຈົ້າ ກຳລັງເພີ່ມຫຼາຍຂຶ້ນຊົ່ວໂມງຂຶ້ນຫ້ອງຮຽນຂອງເຂົາເຈົ້າ ແລະ ປັບປຸງຄຸນນະພາບຂອງການຮຽນຜ່ານທາງແຜນງານ ແລະ ແນວຄິດລິເລີ່ມຕ່າງໆ. ຜົນຂອງຄວາມພະຍາຍາມເຫຼົ່ານີ້, ນັກຮຽນຂອງພວກເຮົາ ໄດ້ປັບປຸງຢ່າງເປັນແກ່ນສານ ຄະແນນສະເລ່ຍ ໃນການສອບເສັງ ທີ່ວັດແທກຄວາມຮູ້ ແລະ ທັກສະຂອງເຂົາເຈົ້າ.

ພ້ອມກັບການເລັ່ງ ຂອງພວກຂ້າພະເຈົ້າ ໃນການສ້າງສັນຕິພາບ, ການເນັ້ນໜັກໃສ່ການສຶກສາ ອາດຈະ ແມ່ນຕົວຢ່າງທີ່ດີເລີດຂອງສິ່ງທີ່ພວກຂ້າພະເຈົ້າ ສາມາດເຮັດໃນໄລຍະໃໝ່ນີ້. ໂດຍປາດສະຈາກ ພາລະທ່າທີໜັກ ຂອງຄວາມຂັດແຍ້ງ ຈາກກອງກຳລັງອາວຸດ. ເປັນຄັ້ງທຳອິດ ນັບແຕ່ໃດມາ, ງົບປະມານດ້ານການສຶກສາ ແມ່ນຫຼວງຫຼາຍກວ່າ ທີ່ຈັດສັນໃຫ້ແກ່ການປ້ອງກັນຄວາມສະຫງົບ ແລະ ການປ້ອງກັນປະເທດ, ຊຶ່ງແມ່ນກົງກັບ ເປົ້າໝາຍຂອງພວກເຮົາ ທີ່ຈະກາຍເປັນປະເທດທີ່ມີລະດັບການສຶກສາສູງທີ່ສຸດ ຢູ່ໃນທະວີບອາເມລິກາລາຕິນ ພາຍໃນ ປີ 2025.

ສັນຕິພາບ, ຄວາມສະເໝີພາບ ແລະ ການສຶກສາ ແມ່ນສາມຂົງເຂດ ທີ່ຊາວໂຄລອມເບຍ ຖືກກີດກັນຢ່າງເປັນປະຫວັດການ ທີ່ຍາວນານ. ສັນຕິພາບ, ຄວາມສະເໝີພາບ ແລະ ການສຶກສາ ໄດ້ເປັນສາມເສົາຫຼັກ ຂອງຄວາມພະຍາຍາມຫຼັກແຫຼ່ງຂອງພວກຂ້າພະເຈົ້າຕະຫຼອດໄລຍະຫຼາຍປີຜ່ານມາ.

ເຖິງຢ່າງໃດກໍ່ຕາມ, ຖ້າຫາກ ເປົ້າໝາຍຂອງພວກຂ້າພະເຈົ້າ ຈະບັນລຸຜົນ "ຂອງການພັດທະນາມະນຸດສຳລັບໝົດທຸກຄົນ." ຄວາມພະຍາຍາມ ຂອງຂ້າພະເຈົ້າ ບໍ່ສາມາດຢຸດຢູ່ພຽງເທົ່ານີ້. ການປ່ຽນແປງດິນຟ້າອາກາດ ແມ່ນໄພຄຸມຄາມ ທີ່ໃຫຍ່ສຸດຂີດ ທີ່ມວນມະນຸດ ຊາດເຄີຍປະສົບພົບພໍ້.

ໃນເລື່ອງນີ້ ຊາວໂຄລອມເບຍ ໄດ້ຕັດສິນໃຈທີ່ຈະດຳເນີນບົດບາດທີ່ຫ້າວຫັນ ໃນການແກ້ບັນຫາປະກົດການດັ່ງກ່າວນີ້. ໃນຖານະທີ່ເປັນຜູ້ພິທັກ ຂອງໜຶ່ງໃນພາກພື້ນ ທີ່ຫຼາກຫຼາຍທາງຊີວະນາໆພັນທີ່ສຸດ ຂອງໂລກ, ໂດຍມີປ່າໄມ້ທີ່ສົມບູນເປັນພິເສດ, ແຫຼ່ງຊັບພະຍາ ກອນນ້ຳ ແລະ ດິນທີ່ອຸດົມສົມບູນ, ພວກຂ້າພະເຈົ້າມີຄວາມຮັບຜິດຊອບອັນໃຫຍ່ຫຼວງຕໍ່ຊາວໂຄລອມເບຍ ແລະ ທັງໂລກ.

ແນວຄວາມຄິດຂອງ "ການເຕີບໂຕສີຂຽວ" (ຫຼື ການເຕີບໂຕທີ່ເປັນມິດກັບສິ່ງແວດລ້ອມ) ແມ່ນສ່ວນໜຶ່ງ ຂອງຕົ້ນແບບຂອງການພັດທະນາເສດຖະກິດຂອງພວກເຮົາ ແລະ ຖືກເຊື່ອມສານເຂົ້າໃນທຸກພາກສ່ວນຂອງເສດຖະກິດ. ພວກຂ້າພະເຈົ້າໝັ້ນໃຈວ່າການເຕີບໂຕ ແລະ ຄວາມຍືນຍົງທາງດ້ານສິ່ງແວດລ້ອມແມ່ນເຂົ້າກັນໄດ້ຢ່າງສົມບູນແບບ. ນອກຈາກນັ້ນ, ການ

ກຳນົດເຂດແດນຂອງລະບົບນິເວດ ປາຣາມົສ (paramos ຫລື ລະບົບນິເວດທົ່ງໄມ້ເຕັ້ຍ) ແລະ ການປະກາດສ້າງຕັ້ງເຂດຄຸ້ມຄອງ - ຊຶ່ງພາຍໃນປີ 2018 ຄອບບັນລຸຮອດ 19 ລ້ານເຮັກຕາ, ບໍລິເວນທີ່ກວ້າງກວ່າ ປະເທດອຸຣຸໄກວ - ເປັນຫຼັກຖານໃນຄວາມມຸ່ງໝັ້ນຂອງພວກຂ້າພະເຈົ້າ.

ພາຍໃຕ້ຂໍ້ຕົກລົງປາຣີວ່າດ້ວຍການປ່ຽນແປງດິນຟ້າອາກາດ, ປະເທດໂຄລອມເບຍ ໄດ້ວາງເປົ້າໝາຍໜຶ່ງ ເພື່ອຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ທີ່ຄາດຄະເນໄວ້ 20 ສ່ວນຮ້ອຍ ພາຍໃນປີ 2030. ພວກຂ້າພະເຈົ້າໄດ້ເລີ່ມຕົ້ນດຳເນີນບາດກ້າວທີ່ເດັດດ່ຽວ ເພື່ອບັນລຸເປົ້າໝາຍທີ່ທະເຍີທະຍານດັ່ງກ່າວນີ້. ພວກຂ້າພະເຈົ້າ ໄດ້ສະເໜີຮ່າງກົດໝາຍ ຕໍ່ສະພາຄອງເກຣັດ ສຳລັບການສ້າງຕັ້ງພາສີທາດກາກບອນສຳລັບເຊື້ອໄຟປະເພດຕ່າງໆ. ພວກຂ້າພະເຈົ້າ ຈະເປັນປະເທດທຳອິດຂອງທະວີບອາເມລິກາລາຕິນ - ແລະ ເປັນໜຶ່ງໃນຈຳ ນວນທຳອິດຢູ່ໃນໂລກ - ທີ່ນຳໃຊ້ປະຕິບັດມາດຕະການດັ່ງກ່າວ. ດ້ວຍແນວຄິດລິເລີ່ມໜຶ່ງດຽວດັ່ງກ່າວນີ້ ພວກຂ້າພະເຈົ້າຄາດຫວັງຈະບັນລຸໄດ້ເຄິ່ງໜຶ່ງ ຂອງຄຳໝັ້ນສັນຍາຂອງພວກເຮົາ ທີ່ກຳນົດຂຶ້ນ ຢູ່ກອງປະຊຸມກ່ຽວກັບການປ່ຽນແປງດິນຟ້າອາກາດ ຢູ່ນະຄອນປາຣີ.

ສັນຕິພາບ - ໃນຄວາມໝາຍ, ຕາມທີ່ຂ້າພະເຈົ້າ ໄດ້ກ່າວເຖິງ ໃນຕອນຕົ້ນ, ໃນວົງກວ້າງ ຂອງຊີວິດການເປັນຢູ່ທີ່ດີ ແລະ ຄວາມກົມ ກຽວ - ເປີດປະຕູຕໍ່ຄວາມເປັນໄປໄດ້ຂອງໂລກ ທີ່ສາມາດດຳລົງຊີວິດ ໄດ້ສຳລັບຄົນລຸ້ນອະນາຄົດ, ໂລກແຫ່ງໜຶ່ງແມ່ນທີ່ ຊຶ່ງຄວາມຢູ່ລອດ ບໍ່ຖືກຂົ່ມຂູ່ ໂດຍພາວະໂລກຮ້ອນ. ພວກຂ້າພະເຈົ້າ ພາກພູມໃຈ ທີ່ຈະຢືນຢັນວ່າຄວາມພະຍາຍາມເຫຼົ່ານີ້ ບວກກັບ ການຢຸດຕິຄວາມຂັດແຍ້ງດ້ວຍກຳລັງອາວຸດ, ປັບປຸງການສຶກສາ ແລະ ເພີ່ມທະວີຄວາມສະເໝີພາບ, ແມ່ນການປະກອບສ່ວນອັນໜຶ່ງຕໍ່ໂລກ.

ພ້ອມດຽວກັບ ການສິ້ນສຸດຄວາມຂັດແຍ້ງດ້ວຍກຳລັງອາວຸດ, ປະຊາກອນທົ່ວໂລກ ສາມາດເພີດເພີນ ກັບມະຫັດສະຈັນທາງທຳມະຊາດ ແລະ ການທ່ອງທ່ຽວ ຢູ່ປະເທດໂຄລອມເບຍ ຊຶ່ງຖືກຈຳກັດເປັນເວລາຫຼາຍທົດສະຫວັດ - ແມ່ນແຕ່ກັບຊາວໂຄລອມເບຍເອງ. ຍິ່ງກວ່ານັ້ນ, ນັກທຸລະກິດຊາວຕ່າງປະເທດ ສາມາດຄົ້ນພົບກາລະໂອກາດອັນໃໝ່ ຢູ່ເຂດແຄ້ວນ ແລະ ພາກພື້ນທີ່ໃນເມື່ອກ່ອນ ເປັນເຂດຫ້າມເຂົ້າຍ້ອນເຫດຜົນຂອງຄວາມຮຸນແຮງ.

ໃນດ້ານຂອງຄວາມສະເໝີພາບ, ພວກຂ້າພະເຈົ້າ ກຳລັງສ້າງຄວາມເຂັ້ມແຂງໃຫ້ແກ່ຊົນຊັ້ນກາງ ທີ່ຈະສ້າງກາລະໂອກາດອັນໜຶ່ງສຳລັບນັກລົງທຶນ ທີ່ຊອກຫາຕະຫຼາດແຫ່ງໃໝ່. ດ້ວຍມີການສຶກສາທີ່ມີຄຸນນະພາບ ພວກຂ້າພະເຈົ້າ ກ□າລັງກະກຽມຄົນລຸ້ນໃໝ່ ທີ່ໃນອະນາຄົດ ຈະສາມາດນຳເອົາທັກສະຂອງເຂົາເຈົ້າ ແລະ ຄວາມຮູ້ມາໃຊ້ປະຕິບັດທົ່ວທຸກຫົນແຫ່ງຢູ່ໃນໂລກ.

“ການພັດທະນາມະນຸດ ສຳລັບໝົດທຸກຄົນ” ແມ່ນຄຳໝັ້ນສັນຍາອັນໜຶ່ງ ທີ່ຢູ່ເໜືອກວ່າ ປະເທດຂອງພວກເຮົາ ແລະ ພວກຂ້າພະເຈົ້າ ຕ້ອງການໃຫ້ວຽກງານ ຂອງພວກເຮົາ ສ້າງຜົນກະທົບ ແລະ ສ້າງຄວາມຮັ່ງມີ ໃຫ້ແກ່ຊີວິດ ຂອງພົນລະເມືອງຈາກປະເທດອື່ນໆ. ໃນທຳນອງດຽວກັນ, ພວກຂ້າພະເຈົ້າ ຮູ້ສຶກວ່າ ການສະໜັບສະໜູນຂອງປະຊາຄົມສາກົນ (ຫຼື ວົງສາຄະນະຍາດສາກົນ) ໄດ້ມີຜົນກະ ທົບທາງບວກຕໍ່ຊາວໂຄລອມເບຍ. ພວກຂ້າພະເຈົ້າ ໝັ້ນໃຈວ່າ ບົນຈິດໃຈຂອງຄວາມເປັນນ້ຳໜຶ່ງໃຈດຽວ (ຫຼື ຄວາມສາມັກຄີ) ແລະ ການຮ່ວມມື, ພວກຂ້າພະເຈົ້າ ຈະສືບຕໍ່ເຮັດວຽກຮ່ວມກັນ. ຊາວໂຄລອມເບຍ ແລະ ທີ່ບໍ່ແມ່ນຊາວໂຄລອມເບຍ ຈະສ້າງສັນຕິພາບ ຢູ່ໃນປະເທດໂຄລອມເບຍ ແລະ ສັນຕິພາບສຳລັບສ່ວນອື່ນໆຂອງໂລກ.

***Juan Manuel Santos***

*ປະທານະທິບໍດີ ແຫ່ງປະເທດໂຄລອມເບຍ ແລະ ຜູ້ໄດ້ຮັບລາງວັນໂນເບລ ສາຂາສັນຕິພາບ ປີ 2016*

* * *

ເບິ່ງຈາກມຸມມອງການພັດທະນາມະນຸດ, ພວກເຮົາຕ້ອງໂລກທີ່ມະນຸດທຸກຄົນມີອິດສະຫລະທີ່ຈະຮັບຮູ້ຄວາມສາມາດປົ່ມຊ້ອນໃນຊີວິດຂອງຕົນເອງ ເພື່ອໃຫ້ພວກເຂົາໄດ້ຮັບໃນສິ່ງທີ່ພວກເຂົາໃຫ້ຄຸນຄ່າ. ໃນການວິເຄາະຂັ້ນສຸດທ້າຍ, ການ

ພັດທະນາ ເປັນຂອງມະນຸດ, ໂດຍມະນຸດ ແລະ ເພື່ອມະນຸດ. ມະນຸດຕ້ອງມີການຮ່ວມມືກັນ. ຕ້ອງມີຄວາມສົມດຸນກັນລະຫວ່າງມະນຸດ ແລະ ໜ່ວຍໂລກ. ແລະ ມະນຸດຊາດຕ້ອງສະແຫວງຫາສັນຕິພາບ ແລະ ຄວາມຈະເລີນຮັ່ງມີ. ການພັດທະນາມະນຸດຕ້ອງການການຍອມຮັບວ່າ ທຸກໆຊີວິດ ແມ່ນມີຄ່າເທົ່າທຽມກັນ ແລະ ການພັດທະນາມະນຸດສຳລັບໝົດທຸກຄົນ ຕ້ອງເລີ່ມຈາກກຸ່ມຄົນທີ່ດ້ອຍໂອກາດທີ່ສຸດ.

